# ກຳລັງໃຈບໍ່ໄກເກີນໄຄວ່ຄວ້າ
# ຢືນຢັດ ສັດຊື່ ສູ້ກັບຊີວິດເພື່ອພິຊິດຄວາມທໍ້ຖອຍໃຈ!
# ກຳລັງໃຈຈະເປັນຂອງທ່ານ!

## I. "ຄຸນນະພາບຂອງຄົນພິຈາຣະນາໄດ້ຈາກ ຄວາມສາມາດຂອງເຂົາທີ່ທົນຕໍ່ອຸປສັກ ໄດ້ຫລາຍໜ້ອຍຊໍ່າໃດ ກ່ອນທີ່ຈະໝົດກຳລັງໃຈ!"

"ພຣະຜູ້ເປັນເຈົ້ານຳພາມະນຸດໄປຕາມທາງທີ່ລາວຄວນໄປ ແລະຄຸ້ມຄອງຄົນທີ່ເຮັດໃຫ້ພຣະອົງຊົງພໍພຣະທັຍເທົ່ານັ້ນ. ລາວຈະບໍ່ຖືກຢຽບຍໍ່າ ຖ້າຫາກລາວລົ້ມລົງ ພຣະອົງກໍຈະຊ່ອຍລາວໃຫ້ລຸກຂຶ້ນມາໃໝ່" ດາວິດ (ພສສ 37:23-24)

ທ່ານເຄີຍທໍ້ໃຈຈົນບໍ່ຢາກຈະກ້າວເດີນຕໍ່ໄປຫລືບໍ?
ທ່ານເຄີຍເສັ້ງຊື່ສຽງຈົນຫມົດກຳລັງໃຈຫລືບໍ?

*ຢ່າຟ້າວທໍ້ແທ້ໃຈ! ຫນັງສືເຫລັ້ມນີ້ມີຄຳແນະນຳດີໆສຳລັບທ່ານ!*

## 1. ຄຸນນະພາບຂອງຄົນ

ໃນຫນັງສືສຸພາສິດຕອນນຶ່ງຂຽນໄວ້ວ່າ
"ຖ້າເຈົ້າທໍ້ໃຈໃນວັນເຄາະຮ້າຍ
ກຳລັງໃຈຂອງເຈົ້າກໍໜ້ອຍ!" (ສພສ 24:10)

ແມ່ນບໍ??

ຖ້າທ່ານຜະເຊີນກັບອຸປະສັກຫລືເຄາະຮ້າຍ
ແລ້ວທ່ານກໍຮູ້ສຶກວ່າ**ທໍ້ຖອຍໃຈ**
ທ່ານຈະ**ຫມົດກຳລັງ**ໃຈແລະ**ກຳລັງກາຍ**ໃນການທີ່ຈະກ້າວເດີນຕໍ່ໄປ!
ດີບໍ່ດີ**ກຳລັງສຳຣອງ**ທີ່ເຫລືອຢູ່ໜ້ອຍນຶ່ງນັ້ນ
ກໍອາດຈະຄ່ອຍໆລ່ອຍຫລໍຈົນຫມົດໄປ
ໃນທີ່ສຸດ ເຮັດໃຫ້ທ່ານບໍ່ຄິດເຖິງແມ້ແຕ່ຈະມີຊີວິດຢູ່ຕໍ່ໄປ!
ເວົ້າງ່າຍໆກໍຄື ຢ່າວ່າແຕ່ຈະໃຫ້**ເດີນໄປ**ໜ້າເລີຍ
ແມ້ແຕ່ກຳລັງທີ່ຈະ**ຢືນ**ຫລື**ນັ່ງ**ຊື່ໆ ກໍຍັງບໍ່ມີເຫລືອດ້ວຍຊໍ້າໄປ!
ອາການຢ່າງນີ້ໜ້າເປັນຫ່ວງ!

ຖ້າທ່ານມີອາການເປັນເຊັ່ນນັ້ນ ສະແດງວ່າ

ຄຸນ**ນະພາບແຫ່ງຊີວິດຂ**ອງທ່ານບໍ່ຄ່ອຍຈະໜ້າໄວ້ວາງໃຈ!

ວັດຖຸດິບໃນທີ່ປະກອບຂຶ້ນເປັນຕົວຂອງທ່ານນັ້ນ

ກັບກາຍເປັນສິ່ງບອບບາງແລະພ້ອມທີ່ຈະແຕກເຜາະໄດ້ທຸກເມື່ອ!

ຖ້າທ່ານບໍ່ປັບປຸງຄຸນນະພາບຊີວິດຂອງທ່ານໃຫ້ແຂງແກ່ງຂຶ້ນ

ທ່ານຈະຢູ່ໃນໂລກນີ້ (ຢ່າງມີຄວາມສຸກ) ບໍ່ໄດ້ແນ່ນອນ!

ຫາກວ່າທ່ານບໍ່ຢາກຢູ່ໃນໂລກນີ້ອີກຕໍ່ໄປແລະ

ຄິດທຳລາຍຊີວິດຂອງທ່ານເອງ ເພື່ອໄປໃຫ້ຫລຸດພົ້ນຈາກສິ່ງຊົ່ວຮ້າຍຂອງໂລກ

ໂດຍຄິດວ່າຈະມີຄວາມສຸກໃນພົບໜ້າ

ກໍນັບວ່າທ່ານກຳລັງ**ເລີະເລືອນ**ໄປກັນໃຫຍ່ແລ້ວ!

ເພາະຖ້າທ່ານ**ບໍ່ຢາກຕໍ່ສູ້ກັບຊີວິດ**ທີ່ທ່ານພໍຈະ**ຄວບຄຸມ**ໄດ້ໃນໂລກນີ້

ຄືພຽງແຕ່ທ່ານມີການປຸກປອບຂວັນ

ແລະເພີ້ມພູນກຳລັງໃຈໃຫ້ແກ່ຕົນເອງອີກໜ້ອຍນຶ່ງ!

ແລ້ວທ່ານຈະໄປສູ້ກັບ**ບັນຫາຊີວິດ**ອີກຫລວງຫລາຍ

ທີ່ລໍຢູ່ເບື້ອງຫລັງຄວາມຕາຍຫລືໃນພົບໜ້າ

ທີ່ເກີນແກ່**ການຄວບຄຸມ**ຂອງທ່ານໄດ້ຢ່າງໃດ?

ໂດຍສະເພາະຢ່າງຍິ່ງ ຖ້າທ່ານທຳລາຍຊີວິດຂອງທ່ານເອງ

ຕ້ອງຖືວ່າເປັນ**ບາບກັມ**ຄັ້ງໃຫຍ່ທີ່ສຸດໃນຊີວິດຂອງທ່ານ!

ໃນເມື່ອ**ຊີວິດ**ນີ້ພຣະຜູ້ເປັນເຈົ້າຜູ້ຊົງ**ປະທານ**ມາໃຫ້ທ່ານ

ແຕ່ທ່ານກັບ**ທຳລາຍມັນຖິ້ມເສັຽ**

ກໍເທົ່າກັບທ່ານໝິ່ນປະໝາດພຣະບໍຣິມເດຊານຸພາບຂອງພຣະອົງ

ຖືວ່າບາບຜິດນີ້**ໜັກໜາສາຫັດ**ຫລາຍອີ່ຫລີ!

ນອກຈາກນີ້ອີກແລ້ວ

**ຊີວິດ**ທີ່ທ່ານມີຢູ່ນີ້ ທ່ານໄດ້ຮັບຜ່ານມາທາງພໍ່ແມ່ ຜູ້ຕ້ອງທົນທຸກຍາກ

ລຳບາກໃນການໃຫ້**ກຳເນີດ**ແລະ**ລ້ຽງດູ**ທ່ານມານານນັບຫລາຍສິບປີ

ແຕ່ແທນທີ່ທ່ານຈະໃຊ້ຊີວິດນີ້**ສນອງຄຸນ!**

..ທ່ານກັບທຳລາຍຖິ້ມເສັຽ!

ນີ້ຊ່າງເປັນການທຳຮ້າຍຈິດໃຈພໍ່ແມ່ຂອງທ່ານ

ແລະນັບເປັນການ**ເນຣະຄຸນ**ທີ່ເປັນບາບໜາທີ່ສຸດ!

ມີໂທດໜັກໜາສາຫັດ

ຍາກເກີນກວ່າທີ່ທ່ານຈະປະຕິເສດໄດ້ໃນຊາດໜ້າຂອງທ່ານ!

ດ້ວຍເຫດນີ້ແທນທີ່ຈະປ່ອຍໃຫ້ຊີວິດຂອງທ່ານດຳເນີນຢູ່ຕໍ່ໄປ

ຢ່າງຂາດຄຸນນະພາບ ຫລືຄິດກຳຈັດຊີວິດນີ້ຖິ້ມເສັຽ!

ວັນນີ້ທ່ານຄວນຕັ້ງເປົ້າໝາຍ ພັທນາ**ຄຸນນະພາບ**ຊີວິດຂອງທ່ານ

ໃຫ້ສາມາດອົດທົນແລະຜະເຊີນຄວາມທຸກຍາກລຳບາກຂອງຊີວິດ
ແລະພ້ອມທີ່ຈະຜະເຊີນກັບທຸກສະພາບການຂອງຊີວິດແມ້ແຕ່ຄວາມຕາຍ
ເພາະເມື່ອໃດທີ່ທ່ານພ້ອມທີ່ຈະຕາຍຢ່າງມີຄຸນຄ່າ
ເມື່ອນັ້ນທ່ານກໍພ້ອມທີ່ຈະມີຊີວິດຢູ່ຢ່າງມີສັກສີ!
ຖ້າທ່ານພ້ອມເຊັ່ນນີ້ຕ້ອງຖືວ່າ
ທ່ານເປັນ**ຄົນທີ່ມີຄຸນນະພາບ!**
**ແລ້ວທ່ານບໍ່ຢາກເປັນຄົນເຊັ່ນນີ້ຫລື? ຕອບແດ່!**

# "ຄົນເຮົາຈະເຮັດຫຍັງໄດ້ຢ່າງບໍ່ມີຂອບເຂດຈຳກັດ ຖ້າເຂົາບໍ່ຄຳນຶງຫລາຍເກີນໄປວ່າໃຜຈະໄດ້ໜ້າ!"

## 2. ໃຜຈະໄດ້ໜ້າ?

**ສິ່ງ**ທີ່ທຳລາຍກຳລັງຂວັນຫລືຄວາມຮຶກເຫີມ
ໃນການທຳງານຮ່ວມກັນກໍຄື..
ມີ**ບາງຄົນຊຶ່ງ**ບໍ່ແມ່ນຕົວເຮົາເປັນຝ່າຍ**ໄດ້ໜ້າໄດ້ຕາ**ໄປແຕ່ພຽງຜູ້ດຽວ!
ສ່ວນເຮົານັ້ນຫລືເຮັດວຽກຊິຕາຍ ທຸ່ມເທແບບຖວາຍຫົວສຸດຊີວິດ
ແຕ່ກັບບໍ່ມີຜູ້ໃດໃຫ້ຄເຣດິດເລີຍແມ້ແຕ່ໜ້ອຍເລີຍ!
ຍິ່ງຄິດກໍຍິ່ງນ້ອຍໃຈ **ຍິ່ງນ້ອຍໃຈ**ກໍ**ຍິ່ງທໍ້ແທ້!**
ຜົນກໍຄື ເຮົາ**ທໍ້ຖອຍ**ໃນການທຳງານ!
ອັນທີ່ຈິງ ຄວາມ **"ທໍ້ແທ້"** ຫລືຄວາມ **"ທໍ້ຖອຍ"**
ລ້ວນບໍ່ແມ່ນສິ່ງທີ່ຫາກໍມີຫລືຫາກໍເກີດຂຶ້ນໃນຖ້າມກາງພວກເຮົາ!
**"ທໍ້ແທ້"** ໝາຍເຖິງ **"ອ່ອນເປ້ຽ ເພັຽໃຈ"** **"ອ່ອນເພັຍເປ້ຍລ່ອຍ"!**
ນີ້ເປັນສິ່ງທີ່ບໍ່ໜ້າປາຖນາ!
ຂ້າພະເຈົ້າບໍ່ຕ້ອງການຈະຄິດວ່າທ່ານຜູ້ອ່ານຕ້ອງການເປັນເຊັ່ນນີ້!
ສ່ວນການ **"ທໍ້ຖອຍ"** ນັ້ນ ໝາຍຄວາມວ່າ
**"ມີຄວາມພະຍາຍາມລົດໜ້ອຍຖອຍລົງ"!**
ຖ້າກຸ່ມໜ່ວຍງານໃດ ຫລືອົງການໃດໆ
ທີ່ມີ**ຄົນທຳງານ**ອອກອາການ**ປ່ວນເປ່** ເຊັ່ນນີ້
**ຜົນຜລິດ** ຫລື **ຜົນງານ**ກໍຄົງຈະລົດໜ້ອຍ ຫລືຫົດຫາຍໄປເປັນແນ່!
ຄວາມເຊື່ອມ ຫລື**ຄວາມຫາຍນະ**ກໍຈະມາຢ້ຽມຢາມສະຖາບັນນັ້ນ
ຢ່າງບໍ່ມີທາງຫລີກລ່ຽງໄດ້!
ດັ່ງນັ້ນໃຫ້ເຮົາຕື່ນຕົວຂຶ້ນ!
ຢ່າໃຫ້ເຮົາ**ໝົດອາລັຍຕາຍຢາກ** ຈົນ**ຕາຍຊາກຄາ**ທີ່ທຳງານ

ພຽງເພາະຍ້ອນ **ບາງຄົນໄດ້ໜ້າໄປ!**

ເຮົາຄວນຈະເຕືອນສະຕິຕົວຂອງເຮົາເອງດ້ວຍຄະຕິທີ່ວ່າ

"ການບໍ່ໄດ້ຮັບ**ກຽດ** ທັງທີ່ເຮົາ**ຄູ່ຄວນ**ຈະໄດ້ຮັບ

ຍັງດີກວ່າການໄດ້ຮັບ**ກຽດ**ທັງທີ່ເຮົາ**ບໍ່ສົມຄວນ**ຈະໄດ້ຮັບ!"

ຖ້າທ່ານຄິດເຊັ່ນນີ້ໄດ້

ທ່ານກໍຈະ**ທຳງານ**ໄດ້ຢ່າງເກີດຜົນມາກມາຍ**ໄຮ້ຂີດຈຳກັດ!**

ທ່າທີແຫ່ງການ**ຖ່ອມໃຈ** ໃນການຮັບມືກັບສະຖານນະການເຊັ່ນນີ້

ເປັນສິ່ງທີ່ອົງພຣະຜູ້ເປັນເຈົ້າຊົງປາຖນາຈາກເຮົາ!

ທ່ານ**ໂປໂລ**ຜູ້ໂດ່ງດັງໄດ້ສະທ້ອນເຈຕນາຄະຕິເຊັ່ນນີ້ອອກມາວ່າ

"ຈົ່ງຮັກກັນສັນພີ່ນ້ອງ ສ່ວນການ**ໃຫ້ກຽດ**ແກ່ກັນແລະກັນນັ້ນ

**ຈົ່ງຖືວ່າຜູ້ອື່ນດີກວ່າຕົນ!"** (ຣມ 12:10)

ແຕ່ຄົນທີ່ຈະມີເຈຕຄະຕິອັນ**ຖ່ອມໃຈ**ເຊັ່ນນີ້ໄດ້

ເຂົາຕ້ອງຮູ້ຈັກຢຳເກງໃຫ້**ກຽດ**ພຣະເຈົ້າກ່ອນ!

ແລະຮາງວັນທີ່ເຂົາຈະໄດ້ຮັບກໍຄື**ກຽດຕິຍົດ!**

ດັ່ງຄຳໃນສຸພາສິດທີ່ວ່າ **"ຄວາມຢຳເກງພຣະເຈົ້າ"** ເປັນການສອນ

ໃຫ້ເກີດປັນຍາ ແລະຄວາມຖ່ອມໃຈເດີນຢູ່ຂ້າງໜ້າ**ກຽດ!"** (ສພສ 15:33)

**ວັນນີ້ ທ່ານຢາກໄດ້ໜ້າຈາກມະນຸດທີ່ຊົ່ວຄາວ**

**ຫລືໄດ້ຮັບກຽດຈາກພຣະເຈົ້າທີ່ຖາວອນເປັນນິດ?**

## "ການໝູນໃຈພຽງເລັກນ້ອຍສາມາດຈຸດແສງປະກາຍ ໃຫ້ເກີດຄວາມສຳເຣັດອັນຍິ່ງໃຫຍ່ໄດ້!"

## 3. ປະກາຍແຫ່ງຄວາມສຳເຣັດ!

ຄຳວ່າ **"ປະກາຍ"** ຕາມສັພໝາຍເຖິງ

"**ແສງ**ທີ່ເຫັນເດັ່ນກະຈາຍອອກຈາກວັດຖຸທີ່ລຸກເປັນໄຟ ເຊັ່ນ **ປະກາຍ**ໄຟ..

**ແສງ** ທີ່ເຫັນເດັ່ນກະຈາຍອອກຈາກຂອງແຂງບາງຢ່າງທີ່ກະທົບກັນຢ່າງແຮງ

ເຊັ່ນ ດາບກະທົບກັນເປັນ**ປະກາຍ**,

ຕີເຫລັກໄຟເປັນປະກາຍ, ຫລືຄວາມ**ແວວວາວ**ຂອງຫລ່ຽມເພັດ ເປັນຕົ້ນ

**ແສງ** ແມບໆມາບດັ່ງແສງຟ້າເຫລື້ອມ.."

ຄົນທີ່ກຳລັງ**ທໍ້ໃຈ**ກໍເໝືອນຄົນທີ່ກຳລັງຢູ່ໃນຄວາມ**ມືດມິດ**

ເຂົາຈະເບິ່ງບໍ່ເຫັນອະນາຄົດເລີຍ!

ເຂົາມີສັນຍານພາບ**ຢູ່**ໃນຕົວເຂົາ ພຽງແຕ່ວ່າຈິດໃຈຂອງເຂົາ

ປຽບເໝືອນສາຍຂະນວນທີ່ປາສຈາກ**ປະກາຍໄຟ**ຈູດໃຫ້ຕິດ!

ໃນຍາມວິກິດການແຫ່ງຊີວິດທີ່ມືດມົນອົນທະການນີ້ເອງ

**"ຄຳໜູນໃຈ"** ຫລື **"ການໜູນໃຈ"** ພຽງເລັກນ້ອຍ

ກໍປຽບເໝືອນ**ປະກາຍໄຟ**ທີ່ຈູດຫົວໃຈ ແລະຊີວິດທີ່ຫ່ຽວແຫ້ງ

ໃຫ້ກັບໂຊດຊ່ວງຊັດຊະວານຂຶ້ນມາອີກເທື່ອນຶ່ງ!

ຂ້າພະເຈົ້າມັກຄຳກ່າວໃນພຣະຄັມພີທີ່ວ່າ

"ພີ່ນ້ອງທັງຫລາຍ ເຮົາຂໍວິງວອນພວກທ່ານ

ໃຫ້ຕັກເຕືອນຄົນທີ່ກຽດຄ້ານ **ໜູນນ້ຳໃຈຜູ້ທີ່ທໍ້ໃຈ**

**ຊູກຳລັງຄົນທີ່ອ່ອນກຳລັງ**

ແລະມີໃຈອົດເອົາເບົາສູ້ຕໍ່ຄົນທັງປວງ" (1 ທຊນ 5:14)

ຖ້າຫາກວ່າ ທ່ານກຳລັງ**ທໍ້ໃຈ!**

ທ່ານຄົງຕ້ອງການໃຫ້ໃຜຈັກຄົນນຶ່ງ**ໜູນໃຈ**ທ່ານເຊັ່ນນີ້ ບໍ່ແມ່ນບໍ?

ແຕ່ຖ້າຫາກທ່ານຫັນໄປ**ມອງເບິ່ງ**ຄົນຮອບຂ້າງຕົວຂອງທ່ານແດ່

ທ່ານອາດຈະແປກໃຈກໍເປັນໄດ້ທີ່ເຫັນວ່າ

ມີຄົນທີ່ໜ້າອະເນັດອະນາດໃນເຄາະກັມແຫ່ງຊີວິດຂອງຄົນ

ແລະຕ້ອງການ **"ການໜູນໃຈ"** ຫລາຍຍິ່ງກວ່າທ່ານເສັຽອີກ!

ດັ່ງນັ້ນວັນນີ້ ທ່ານຈະບໍ່ລອງ**ຈູດປະກາຍໄຟ**ແຫ່ງຄວາມຫວັງ

ຂຶ້ນໃນຊີວິດຂອງຄົນບາງຄົນເບິ່ງບໍ?

**ບາງທີ "ໄຟ" ແຫ່ງການໜູນໃຈ**

**ທີ່ທ່ານໄດ້ຈຸດໄວ້ໃນຊີວິດຂອງເຂົາໃນວັນນີ້**

**ອາດຈະກັບກາຍເປັນ "ປະກາຍໄຟ" ແຫ່ງຄວາມສຳເຣັດ**

**ໃນຊີວິດແລະການງານຂອງທ່ານໃນວັນໜ້າກໍເປັນໄດ້! ໃຜຈະຮູ້ໄດ້?**

## "ພຣະຜູ້ເປັນເຈົ້າຊົງສາມາດຮັກສາດວງໃຈທີ່ແຕກສລາຍໄດ້ ແຕ່ພຣະອົງຈຳເປັນທີ່ຈະຕ້ອງມີທຸກຊິ້ນສ່ວນຂອງດວງໃຈນັ້ນ!"

## 4. ໃຈທີ່ສ້ອມ ຫລື ແປງໄດ້

**ທ່ານທົງໄຊ** ແມຄອິນໄຕຍ໌ ເຄີຍຮ້ອງເພງ **"ສ້ອມໄດ້"**

ແຕ່ທ່ານທົງໄຊນັ້ນບໍ່ແມ່ນຊ່າງທີ່ສ້ອມ**ຫົວໃຈ**ໄດ້!

ເຂົາໄດ້ແຕ່ຮ້ອງຕາມຜູ້ປະພັນເພງໃນຄ້າຍແກຣມມີ ທີ່ແຕ່ງໃຫ້ຮ້ອງເທົ່ານັ້ນ

ປົກກະຕິແລ້ວຄົນທີ່ຈະ**ສ້ອມ**ຫຍັງໄດ້

ຕ້ອງເປັນຜູ້**ຊ່ຽວຊານ**ໃນເຣື່ອງນັ້ນໆຢ່າງແທ້ຈິງ

ຖ້າຈະໃຫ້ດີຕ້ອງໃຫ້**ຜູ້ສ້າງສິ່ງ**ນັ້ນ**ສ້ອມ**ສິ່ງນັ້ນດ້ວຍຕົວເອງ!

ເຖິງຈະໝັ້ນໃຈໄດ້!

ທ່ານ**ທີ່ງໄຊ** ຫລື **ຂ້າພະເຈົ້າ**

ເຮົາທັງ 2 ບໍ່ເຄີຍເຫັນ**ຫົວໃຈ** ຫລື **"ດວງໃຈ"** ຂອງຕົວເຮົາເອງຈັກເທື່ອ

ແລ້ວຈະໄປສ້ອມ **"ດວງໃຈ"** ຂອງເຮົາຫລືຂອງຄົນອື່ນໄດ້ຢ່າງໃດ?

ເວລາ**ຣົດ**ຂອງເຮົາມີບັນຫາ ເຮົາໄປຫາ ຊ່າງສ້ອມຣົດ

ເວລາທໍ່ນ້ຳຂອງເຮົາແຕກ ເຮົາໄປຫາ ຊ່າງນ້ຳປະປາ

ເວລາຝະນັງບ້ານຂອງເຮົາແຕກ ເຮົາໄປຫາ ຊ່າງປູນ ແລະອື່ນໆ

ແລ້ວເວລາທີ່**ໃຈ**ຂອງຄົນເຮົາ**ແຕກສລາຍ**

ເພາະຄຳເວົ້າຂອງຄົນບາງຄົນ! ໃຜຈະສ້ອມໄດ້?

ດັ່ງເຊັ່ນໜັງສືສຸພາສິດ ຂຽນໄວ້ວ່າ

"ລີ້ນທີ່ສຸພາບເປັນຕົ້ນໄມ້ແຫ່ງຊີວິດ

ແຕ່**ລີ້ນທີ່ຕະລົບຕະແລງ ເຮັດໃຫ້ນ້ຳໃຈແຕກສລາຍ!"** (ສພສ 15:4)

ໃຈຂອງຂ້າພະເຈົ້າກໍເຄີຍແທບ**ແຕກສລາຍ!** ເພາະລີ້ນປະເພດນີ້ເໝືອນກັນ

ທ່ານເດ່ ເຄີຍພົບກັບ**ພິດສົງ**ຂອງ**ລີ້ນ**ທີ່ຕະລົບຕະແລງແບບນີ້ຫລືບໍ?

ຮູ້ສຶກມີຣົດຊາດເປັນຢ່າງໃດ?

ຜູ້ໃດຈະສາມາດສ້ອມຫົວໃຈທີ່**ຟົກຊ້ຳ ແຕກຮ້າວ** ຫລື**ແຕກສລາຍ**ໄດ້?

ຄົງບໍ່ແມ່ນຄົນທີ່ບໍ່ຮູ້ເຣື່ອງ **"ໃຈ"** ດອກຫລື ຈຶ່ງສ້ອມໄດ້?

ໃນ**ພຣະຄັມພີ**ໄດ້ເປີດເຜີຍຄວາມຈິງໃນເຣື່ອງນີ້

ໄວ້ເປັນທີ່ໜູນໃຈຫລາຍກວ່າ ຄື:

**"ພຣະເຈົ້າ**ຊົງຢູ່ **ໃກ້ຜູ້ທີ່ຈິດໃຈຟົກຊ້ຳ**

ແລະຊົງ**ຊ່ອຍ**ຜູ້ທີ່ມີຈິດໃຈສຳນຶກຜິດ" (ພສສ 34:187)

ແມ່ນບໍ! ພຣະເຈົ້າຊົງ**ສ້າງ**ມະນຸດ ແລະດວງໃຈຂອງເຂົາ

ພຣະອົງຍ່ອມຊົງຮູ້ຈັກ**ທຸກສ່ວນຫົວໃຈ**ຂອງມະນຸດ!

ດັ່ງນັ້ນ ພຣະເຈົ້າຈຶ່ງເປັນ**ຜູ້ດຽວ**ທີ່ມີຄຸນສົມບັດທີ່ຈະ**ຊ້ອມຫົວໃຈ**ຂອງເຮົາໄດ້!

ພຽງແຕ່ພຣະອົງມີເງື່ອນໄຂກັບເຮົາວ່າ:

ເຮົາຕ້ອງນຳ**ທຸກຊິ້ນສ່ວນ**ຂອງດວງໃຈຂອງເຮົາມາມອບໃຫ້ແກ່ພຣະອົງ!

ດັ່ງນັ້ນ ຖ້າວັນນີ້**ຈິດໃຈ**ຂອງທ່ານ**ຟົກຊ້ຳ** ຫລື**ແຕກສລາຍ!**

ຢ່າ**ສິ້ນຫວັງ**ໃນຊີວິດ ແລະຢ່າ**ຄິດສັ້ນ!**

ຈົ່ງມາຮັບການ**ສ້ອມແຊມຮັກສາ!**

ແຕ່**ຢ່າລືມ**ນຳ**ທຸກຊິ້ນສ່ວນ**ຂອງ**ດວງໃຈ**ຂອງທ່ານໄປດ້ວຍກໍແລ້ວກັນ!

**ຮັບຮອງວ່າ "ສ້ອມໄດ້" ຢ່າງແນ່ນອນ!**

# “ການເວົ້າຄວາມຈິງ ທັງໆທີ່ຮູ້ວ່າເຮົາ ຈະຕ້ອງເສັຽຫາຍ ຄືເຄື່ອງພິສູດ ຄວາມຊື່ສັດຂອງເຮົາ!”

## 5. ເຄື່ອງພິສູດຄວາມຊື່ສັດ

ມີຄົນຈຳນວນຫລວງຫລາຍທີ່**ທຳທ່າ**ວ່າຕົນເອງມີຄວາມ**ຊື່ສັດ**
ແຕ່ໜ້ອຍຄົນທີ່ຈະ**ສັດຊື່**ຈິງແທ້!
ບາງຄົນເປັນພວກ**ໜ້າຊື່ໃຈຄົດ** ຫລືໜ້າໄຫວ້ຫລັງຫລອກ!
ບາງຄົນກໍເປັນພວກປາກວ່າ **ຕາຂະຫຍິບ!**
ຊຶ່ງລ້ວນແຕ່ເປັນພວກມືຖືສາກ ປາກຖືສິນ ເປັນສ່ວນໃຫຍ່
**ຄົນດີ**ໆທີ່ເຄີຍເປັນທີ່ເຄົາຣົບນັບຖືຂອງຄົນສ່ວນໃຫຍ່
ພໍໄປກ່ຽວຂ້ອງກັບ**ຜົນປໂຍດ**ແລະ**ອຳນາດ**ຂອງຕົນເອົ້າ
ຫລາຍຄົນກໍປ່ຽນແປງໄປ!
ບາງຄົນກໍຍັງດີໜ້ອຍນຶ່ງ ຄືມີການປ່ຽນໄປຢ່າງເຫັນໄດ້ຄັກ
ຄ້າຍໆກັບໜຸ່ມໜ້າມົນຄົມສັນທຸ່ນແບບ**ຊາຍຊາຕຣີ**
ທີ່ແຕ່ລະມື້ແຕ່ລະວັນກໍມັກອອກມາເປີດເຜີຍວ່າ
ຕົນເປັນພວກນິຍົມໄມ້ປ່າດຽວກັນ
ເຮັດໃຫ້ສຕຣີທັງຫລາຍຕັດໃຈບໍ່ຫຍຸ້ງກ່ຽວໄດ້ທັນທ່ວງທີ!
ແຕ່ຜູ້ຊາຍບາງຄົນກັບວາງຕົວທຳ**ມາດແມນ**
ທັງໆທີ່ຕົວເອງເປັນພວກ **“ແອບຈິບ”**
ທີ່ມີຄວາມບໍ່ປົກກະຕິໃນຣົດນິຍົມທາງເພດ
ເຮັດດັ່ງນີ້ຖືວ່າບໍ່**ສັດຊື່**ຕໍ່ຄົນຮອບຂ້າງ
ໂດຍສະເພາະຢ່າງຍິ່ງຕໍ່ສຕຣີທີ່ຮັກແລະໄວ້ວາງໃຈໃນຕົວເຂົາ
ເມື່ອ**ແຕ່ງງານ**ຢູ່ນຳກັນໄປແລ້ວ ຝ່າຍຍິງກໍຈຶ່ງຮູ້ຄວາມຈິງວ່າ
ຕົວເອງເປັນແຕ່ພຽງ**ເດັກກັນຊົນ**ໃຫ້ກັບຊາຍທີ່ບໍ່ແມ່ນຊາຍຈິງ ກໍເກືອບເປັນລົມ!
ແຕ່ກໍ**ສາຍເກີນແກ້**ເສັຽແລ້ວ!
ນອກຈາກນີ້..
ຍັງມີຄົນທີ່**ເບິ່ງສັດຊື່ ໜ້າຄືບຫາ**ຫລືໜ້າຮ່ວມງານດ້ວຍ
ແຕ່ເມື່ອໄດ້ທຳງານດ້ວຍກັນແລະ
ໄດ້ຮັບຄວາມໄວ້ວາງໃຈໃຫ້ຮັບຜິດຊອບຢ່າງໝົດສິ້ນ
**ລາຍ**ກໍພົ້ນອອກ **ຫາງ**ກໍໂຜ່!
ຈົບລົງດ້ວຍການທໍຣະຍົດຕໍ່ຄວາມໄວ້ເນື້ອເຊື່ອໃຈ
ຊຶ່ງປາກົດອອກມາໃຫ້ເຫັນເປັນຂ່າວຢູ່ເລື້ອຍໆ
ຄົນພວກນີ້ຄົງລືມພາສິດບູຮານທີ່ວ່າ

**"ຊື່ກິນບໍ່ໝົດ ຄົດກິນບໍ່ນານ!"    ແມ່ນບໍ???**

ເປັນໄປໄດ້ທີ່ຄົນສັດ**ຊື່** ອາດ**ບໍ່ມີກິນ**ໃນຕອນແຮກໆ

ໃນຂນະທີ່ຄົນ**ຄົດໂກງ** ອາດໄດ້**ກິນອີ່ມແຊບຊ້ອຍ!**

ແຕ່ໃນໄລຍະຍາວ

ຄົນທີ່**ສັດຊື່**ໃນດ້ານ**ວາຈາ**ແລະ**ຄວາມປະພຶດ**

ຈະມີກິນໄປຈົນວັນຕາຍ!

ໃນຂະນະທີ່ຄົນ**ຄົດຈະໝົດເພື່ອນມິດ**ແລະ**ໝົດອານາຄົດ!**

ດັ່ງນັ້ນຂໍໃຫ້ເຮົາເປັນ**ຄົນສັດຊື່!**

ຂໍໃຫ້ເຮົາ**ຢູ່**ແລະ**ຕາຍ**ເພື່ອຄວາມຈິງ!

ພຽງແຕ່ຢ່າໃຫ້ເຮົາເປັນຄົນທີ່ເວົ້າຄວາມຈິງດ້ວຍ**ທ່າທີ**

ຫລື**ທ່າທາງ**ກ້າວເກັ່ງ ແລະຂາດຄວາມເມດຕາ!

ຂໍໃຫ້**ວາຈາ**ຂອງເຮົາ ເປັນ**ຫລັກຖານ**ຂອງຄວາມ**ສັດຊື່**

ທີ່ເຈືອປົນຄວາມສຸພາບອ່ອນໂຍນ

ທັງຕໍ່ຫນ້າແລະລັບຫລັງ!

ຂໍໃຫ້ເຮົາຍັງຄົງ**ກ້າ**ຢືນຢັດທີ່ຈະເວົ້າ**ຄວາມຈິງ!**

**"ບຸກຄົນຜູ້ເວົ້າຄວາມຈິງໃຫ້ຫລັກຖານທີ່ຊື່ຕົງ ແຕ່ພະຍານເທັດກ່າວຄຳຫລອກລວງ"** (ສພສ 12:17)

ທັງໆທີ່ຮູ້ວ່າເຮົາອາດໄດ້ຮັບ**ຜົນກະທົບ**ທີ່ເຈັບປວດ

ແຕ່ຂໍໃຫ້ເຮົາມີ**ຈຸດຢືນ**ເຊັ່ນນີ້ຈົນຕາບເທົ່າວັນຕາຍ!!

**"ຮີມຝີປາກທີ່ເວົ້າຄວາມຈິງທົນຢູ່ໄດ້ເປັນນິດ ແຕ່ລີ້ນທີ່ເວົ້າມຸສາຢູ່ໄດ້ພຽງໜ້ອຍນຶ່ງ"** (ສພສ 12:19)

**ເພາະນີ້ເປັນນະໂຍບາຍທີ່ດີທີ່ສຸດຂອງຊີວິດ!!**

# "ໂລກຍົກຍ້ອງຄວາມສຳເຣັດ ແຕ່ພຣະເຈົ້າຍົກຍ້ອງຄວາມສັດຊື່!"

## 6. ຄວາມສັດຊື່ຫລືຄວາມສຳເຣັດ?

**ຄ່ານິຍົມ**ຂອງໂລກໃນປັດຈຸບັນ

ໃຫ້ຄວາມສຳຄັນກັບ **"ຄວາມສຳເຣັດ"** ຫລາຍ..

ແລະ**ຫລາຍເກີນໄປ!**

ເພາະເບິ່ງເໝືອນວ່າໂລກຕຽມ**ຮາງວັນ**ຢ່າງງາມ

ໃຫ້**ສະເພາະ**ກັບຜູ້ທີ່**ປະສົບຄວາມສຳເຣັດ**ເທົ່ານັ້ນ

ແລະບໍ່ຍອມອາລັຍໄຍດີຕໍ່ຜູ້ທີ່ພາດພັ້ງຈາກການເປັນອັນດັບນຶ່ງ!

ດັ່ງນັ້ນຈຶ່ງບໍ່ໜ້າແປກໃຈທີ່ໂລກນີ້ຈະໃຫ້ກຽດຍົກຍ້ອງ

ແຕ່ສະເພາະນັກກິລາຜູ້ທີ່ແລ່ນເຂົ້າເສັ້ນຊັຍອັນດັບນຶ່ງ

ແລະ**ລືມເລືອນ**ຜູ້ຊະນະອັນດັບ 2, 3 ໄປຢ່າງບໍ່ໃຍດີ

ຖ້າເປັນອັນດັບ 4 ເປັນຕົ້ນໄປແຮງບໍ່ຕ້ອງເວົ້າເຖິງເລີຍ!

ຖ້າທ່ານເປັນຜູ້ຊະນະອັນດັບ 2 ແລະ3 ທ່ານຈະຮູ້ສຶກຢ່າງໃດ?

ຍິ່ງຖ້າທ່ານເປັນຜູ້ແລ່ນແຂ່ງເຂົ້າເສັ້ນຊັຍອັນດັບທີ່ 5 ແລ້ວ

ທ່ານຈະມີ**ຄວາມຫມາຍຫຍັງ**ໃນສາຍຕາຂອງໂລກນີ້?

ຢ່າງໃດກໍດີ ເຖິງວ່າ..

ໃນສາຍຕາຂອງມະນຸດ ທ່ານອາດ**ບໍ່ມີຄ່າ**ຫຍັງ!

ແຕ່ໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າໃນສວັນ

ບໍ່ວ່າທ່ານຈະເຂົ້າເສັ້ນຊັຍລຳດັບທີ່ເທົ່າໃດ

ຖ້າທ່ານໄດ້ເຮັດດີທີ່ສຸດ ແລະເຮັດຢ່າງສັດຊື່

ທ່ານກໍຈະເປັນຜູ້**ຊະນະຄົນນຶ່ງ**ໃນສາຍພຣະເນດຂອງພຣະອົງ!

ທັສນະຄະຕິຂອງພຣະເຈົ້າບໍ່ເໝືອນກັບທັສນະຄະຕິຂອງໂລກນີ້

**ໂລກ**ຕັດສິນວ່າ ຜູ້ຊະນະຄືຜູ້ທີ່ເຂົ້າອັນດັບທີ່ 1,2 ແລະ 3 ເທົ່ານັ້ນ

ທີ່ເຫລືອຄືຜູ້**ຜ່າຍແພ້!**

ດ້ວຍເຫດນີ້.. ຄົນທີ່ເຫັນວ່າຕົນຄົງບໍ່ໄດ້ລຳດັບທີ່ 1,2 ຫລື 3 ເປັນແນ່

ຈຶ່ງຢຸດຕິການແລ່ນແຂ່ງຂັນ ເປັນເຫດໃຫ້ຕົວເອງບໍ່ໄດ້ເຂົ້າເສັ້ນຊັຍ

ຄົນເຊັ່ນນີ້ຈຶ່ງກາຍເປັນ**ຜູ້ຜ່າຍແພ້ທີ່ແທ້ຈິງ!**

ແຕ່ກະຕິກາຂອງ**ສວັນ**ນັ້ນແຕກຕ່າງອອກໄປ!

ນັ້ນກໍຄື**ຜູ້ໃດ**ກໍໄດ້ບໍ່ວ່າ**ລຳດັບໃດ**

ຂໍໃຫ້ເຂົ້າເສັ້ນຊັຍຢ່າງ**ສັດຊື່**

ລ້ວນຖືວ່າເປັນ**ຜູ້ຊະນະ**ທັງສິ້ນ!

ດັ່ງນັ້ນ ໃນວັນນີ້ບໍ່ວ່າ**ທ່ານ**ຈະຢູ່ໃນສະຖານະພາບແບບໃດ

ຈະເປັນນັກຮຽນ ນັກສຶກສາ ຫລືຄຣູບາອາຈານ ເປັນນັກກິລາ

ຫລືນັກທຸຣະກິດ ເປັນເຈົ້າຫນ້າທີ່ ພະນັກງານ ຫລືເປັນຫົວຫນ້າ

ຫລືເຈົ້າຂອງກິຈການ ຫລືອັນໃດກໍຕາມ

ຂໍໃຫ້**ດຳເນີນຊີວິດ**ແລະກະທຳຫນ້າທີ່ຢ່າງ**ສັດຊື່!**

ເພາະຖ້າທ່ານກະທຳເຊັ່ນນີ້ຢ່າງຕໍ່ເນື່ອງແລະບໍ່ຍອມແພ້

ທ່ານຈະຕ້ອງ**ເຂົ້າເສັ້ນຊັຍ**ໃນວັນນຶ່ງຢ່າງແນ່ນອນ!

ເຮັດດັ່ງນີ້ຍ່ອມ**ດີກວ່າ**ແລ່ນເຂົ້າເສັ້ນຊັຍໄປກ່ອນແຕ່ບໍ່**ສັດຊື່**

ແລະຖືກປັບໃຫ້ຜ່າຍແພ້ຈົນອັບອາຍຂາຍຫນ້າ

ແມ່ນບໍ???

**"ຄົນທີ່ສັດຊື່ຈະໄດ້ຮັບພຣະພອນຢ່າງມາກມາຍ**

**ແຕ່ຜູ້ທີ່ຮີບມັ່ງຄັ່ງຈະຖືວ່າບໍ່ມີໂທດກໍວ່າບໍ່ໄດ້"** (ສພສ 28:20)

# “ຕາຍດ້ວຍ ຊື່ສຽງດີ<br>ຍັງດີກວ່າມີຊີວິດຢູ່ກັບ ຊື່ສຽງທີ່ໃຊ້ການບໍ່ໄດ້!”

## 7. ຊື່ສຽ..ງ

**ຄົນ**ທຸກຄົນລ້ວນແຕ່ຕ້ອງການມີ**ຊື່**

ຄົນທີ່ບໍ່ມີຊື່ເຮົາເອີ້ນວ່າມະນຸດ **“ນິຣະນາມ!”**

ໜ້າເສົ້າຖ້າຜູ້ໃດເກີດມາເປັນບຸກຄົນ**ນິຣະນາມ**

ແລະຈົບຊີວິດລົງຢ່າງບຸກຄົນນິຣະນາມ!

ເພາະເໝືອນກັບວ່າບຸກຄົນເຊັ່ນນີ້ບໍ່ເຄີຍເກີດມາເລີຍ!

ສະນັ້ນເຮົາທຸກຄົນເທິງແຜ່ນດິນໂລກນີ້ຈຶ່ງຄວນຈະມີຊື່!

ເພາະແມ້ແຕ່**ສັດ**ກໍຍັງມີຊື່!

ຫລືແມ້ແຕ່ສິ່ງທີ່ບໍ່ມີຊີວິດ ຢ່າງ**ແຮ່ທາດ**ຫລືສິ່ງຂອງຍັງມີຊື່ ບໍ່ແມ່ນບໍ??

ຢ່າງໜ້ອຍຄົນເຮົາທຸກຄົນກໍນ່າຈະມີ **ຊື່ຕົວເອງ!**

ບໍ່ວ່າຈະເປັນ**ຊື່ຫລິ້ນ**ຫລືເປັນ**ຊື່ຈິງ!**

ຍິ່ງຖ້າມີນາມສະກຸນຮຸນຊາດແລ້ວກໍຍິ່ງຕ້ອງມີ **ຊື່ສະກຸນ!**

ຜູ້ໃດມີ**ຊື່ສະກຸນ**ທີ່ມີກຽດຫລາຍເທົ່າໃດ

ກໍຍິ່ງຕ້ອງ**ຮັກສາຊື່ສຽງ**ວົງຕະກຸນຂອງຕົນຫລາຍຂຶ້ນເທົ່ານັ້ນ!

ບຸກຄົນໃດ**ເຮັດສິ່ງໃດບໍ່ໄດ້ເລື່ອງ**ບໍ່ໄດ້ມາຕຖານຕາມຄວາມຄາດຫວັງ

ເຂົາເອີ້ນວ່າ **“ເສັຽຊື່!”**

ແລະບຸກຄົນໃດ**ປະພຶດບໍ່ດີ** ບໍ່ເໝາະສົມ

ເຮັດໃຫ້**ຊື່**ຂອງຕົນແລະວົງຕະກຸນຕ້ອງ**ເສັຽ**ໄປ!

ເຂົາເອີ້ນວ່າ **“ຊື່ເສັຽ!”**

ແຕ່ຄົນທີ່ມີ**ຊີວິດ**ເປັນ**ແບບຢ່າງທີ່ດີງາມ**ແລະສ້າງຜົນງານໃຫ້ແກ່ໂລກ

ເຂົາເອີ້ນວ່າເປັນຄົນມີ **“ຊື່ສຽງ!”**

ຫນັງສືສຸພາສິດ ຂຽນໄວ້ວ່າ

“**ຊື່ສຽງດີ** ເປັນສິ່ງທີ່ຄວນເລືອກຍິ່ງກວ່າ**ຄວາມມັ່ງຄັ່ງ**ມາກມາຍ

ແລະຊຶ່ງເປັນທີ່ໂປດປານກໍດີກວ່າມີເງິນຫລືທອງ” (ສພສ 22:1)

ວັນນີ້ຫາກເຮົາຕາຍໃນຂນະທີ່ມີ**ຊື່ສຽງດີ**

ຍ່ອມດີກວ່າມີຊີວິດຢູ່ຢ່າງຫນ້າອັດສູ ຫລືມີຊີວິດທີ່ມີ**ຊື່ເສັຽ**..  ແມ່ນບໍ?

ຍັງບໍ່**ສາຍເກີນໄປ**ທີ່ເຮົາຈະເລີ້ມຕົ້ນສ້າງ**ຊື່**ທີ່ດີຕັ້ງແຕ່ວັນນີ້ເປັນຕົ້ນໄປ!

ໃນຫນັງສື**ສຸພາສິດ**ເຊັ່ນດຽວກັນຫນຸນໃຈວ່າ

“**ຄົນຊອບທັມ**ລົ້ມລົງເຈັດຄັ້ງ ແລ້ວກໍລຸກຂຶ້ນອີກ!” (ສພສ 24:16)

ແມ່ນແລ້ວ!

ບໍ່ວ່າທ່ານຈະ**ອ້ອຍລົງ**ຂະໜາດໃດໃນເວລານີ້
**ຈົ່ງລຸກຂຶ້ນ**ປູກເມັດແຫ່ງ**ຊື່ສຽງ**ດີຕັ້ງແຕ່ບັດນີ້ເປັນຕົ້ນໄປ!
**ແລ້ວວັນໜ້າທ່ານຈະບໍ່ອາຍຜູ້ໃດ**
ບໍ່ວ່າຈະໃນໂລກນີ້ ຫລືໃນໂລກໜ້າ!
**ຈົ່ງເຊື່ອຂ້າພະເຈົ້າເທີ້ນ!**

## "ຖ້າທ່ານບໍ່ຢືນຢັດເພື່ອສິ່ງໃດສິ່ງນຶ່ງ ທ່ານອາດຈະຕ້ອງລົ້ມລົງເພື່ອສິ່ງໃດກໍໄດ້!"

## 8. ຈະຢືນຫລືລົ້ມ?

ຄົນທີ່ບໍ່ມີຈຸດຢືນທີ່ຈະຢືນຢັດ
ຈະຖືກຊັດໄປມາເໝືອນໄມ້ປັກເລນ!
ທ່ານຄິດຈະເປັນຄົນບໍ່ມີ**ຈຸດຢືນ**ຢ່າງນັ້ນຫລື?
ຢ່າເລີຍຈະດີກວ່າ!
ຄົນທີ່ບໍ່ມີ**ເປົ້າໝາຍຊີວິດ**ທີ່ຄູ່ຄວນຕໍ່ການດຳຣົງຢູ່ນັ້ນ
ໜ້າ**ເສົ້າໃຈ**ຫລາຍ!
ຊີວິດຄືການດຳຣົງຢູ່ເພື່ອ**ຊົດໃຊ້ໜີ້ກັມເກົ່າ**ຕາມຍະຖາກັມ!
ແຕ່ນີ້ບໍ່ແມ່ນ**ຊີວິດ**ທີ່ຫາກໍ່ເປັນ ຫລືຫາກໍ່ເກີດຂຶ້ນ!
ໃນພຣະຄັມພີ ໄດ້ມີມຸມມອງທີ່ຕ່າງອອກໄປເພາະເຫັນວ່າ
**ຊີວິດ**ໃນໂລກນີ້ແມ້ຈະເປັນຊີວິດ**ຊົ່ວຄາວ**ບໍ່ດົນປານໃດ
ແຕ່ກໍເປັນ**ຂອງຂວັນ**ຈາກສວັນ
ທີ່ປະທານມາໃຫ້ເຮົາ**ຊື່ນຊົມ**ໃນຂນະທີ່ຢູ່ໃນໂລກນີ້!
ດ້ວຍເຫດນີ້ໃນຍາມທີ່ເຮົາຍັງມີ**ຊີວິດ**ຢູ່ໃນໂລກນີ້
ໃຫ້ເຮົາເລືອກທຳ**ກິຈການ** ຫລື**ງານ**ທີ່ມີຄຸນຄ່າທີ່ເຮົາ**ເພິ່ງພໍໃຈ**
ໃຫ້ເຮົາຢືນຢັດທຳງານຊິ້ນນັ້ນຢ່າງ**ຊົມຊື່ນຍິນດີ**
ເໝືອນດັ່ງທີ່ທ່ານ**ປັນຍາຈານ**ໄດ້ຂຽນໄວ້ວ່າ
**"ເບິ່ງແມ່, ທີ່ຂ້າພະເຈົ້າເຫັນຊອບ ແລະສົມຄວນ ຄືໃຫ້ກິນແລະດື່ມ ພ້ອມທັງຍິນດີໃນບັນດາກິຈການຂອງຕົນ ທີ່ຕົນກະທຳພາຍໃຕ້ດວງອາທິດ ຕລອດຊົ່ວອາຍຸບໍ່ຫລາຍວັນຂອງຕົນ ທີ່ພຣະເຈົ້າປະທານແກ່ຕົນ.. ..ເພາະການນັ້ນແຫລະເປັນສ່ວນຂອງຕົນ!"** (ປຍຈ 5:18)
ແມ່ນແລ້ວ ຖ້າເຮົາມີ**ງານ**ຫລື**ກິຈການ**ໃດ
ທີ່ຄູ່ຄວນຕໍ່ການຢືນຢັດໂດຍບໍ່ອາຍຟ້າບໍ່ອາຍດິນ..
ກໍຈົ່ງ**ກະທຳງານນັ້ນ** ຫລືສິ່ງນັ້ນໃຫ້ດີທີ່ສຸດ!

ແຕ່ວ່າຢ່າລືມ**ເງື່ອນໄຂ**ນຳດ້ວຍເໝືອນກັນ!
ນັ້ນຄື ເຮົາຕ້ອງມີຄວາມ**ຊົມຊື່ນຍິນດີ**ກັບ**ງານ**ນັ້ນເໝືອນກັນ!
ຖ້າບໍ່ດັ່ງນັ້ນ**ງານ**ນັ້ນກໍບໍ່**ຄູ່ຄວນ**ຕໍ່ການຍືນຍັດ!
ແລະຢ່າໃຫ້ເຮົາເປັນຄົນ**ໃຈເສາະເບາະບາງ ຫລື**ໃຈບໍ່ສູ້
ແລະມັກຜັນແປປ່ຽນໄປຕາມອາຣົມ!
ເພາະຖ້າເປັນເຊັ່ນນີ້ເຮົາຈະເປັນເໝືອນຄົນ**ບໍ່ມີຫລັກໝັ້ນ**
ມັກຈະຄວ້າເອົາສິ່ງໃດກໍໄດ້ທີ່ໃກ້ມື ແລະເມື່ອບໍ່ພໍໃຈກໍເລີກລາ
ແລ້ວກໍຖິ້ມ**ເປະປະ**ໄປມາຢ່າງຄົນຂາດຈຸດຢືນ!
ຊີວິດທີ່ລົ້ມລຸກຄຸກຄານຢ່າງ**ໄຮ້ການຍືນຍັດ**ຢ່າງນີ້
ຈະບໍ່ມີຄວາມສຸກທີ່ແທ້ຈິງເລີຍ!
ດັ່ງນັ້ນ ວັນນີ້ ທ່ານຄວນຕັດສິນໃຈໃຫ້**ແນ່ວແນ່**ໄປເລີຍວ່າ
ຈະ **ລົ້ມ** ຫລືຈະ **ຍືນ**?
ຈະ **ລົ້ມເຫລວ** ຫລື **ຍືນຍັດ**?
**ແຕ່ຂ້າພະເຈົ້າວ່າຍືນແບບ "ຍືນຍັດ" ດ້ວຍຄວາມຊົມຊື່ນຍິນດີ**
**ຈະດີກວ່າ!!** ທ່ານວ່າແມ່ນບໍ?

## "ຖ້າເສັຽເງິນທອງໄປ ໃຫ້ຖືເສັຽວ່າເສັຽຂອງໄປສິ່ງນຶ່ງ ຖ້າເສັຽຊື່ສຽງໄປ ກໍໃຫ້ຖືເສັຽວ່າເສັຽຂອງໄປຫລາຍສິ່ງ ແຕ່ຖ້າເສັຽກຳລັງໃຈໄປ ຕ້ອງຖືວ່າເສັຽຂອງໄປໝົດທຸກສິ່ງ!"

## 9. ກຳລັງໃຈບໍ່ໄກເກີນໄຂວ່ຄວ້າ

**ນັບ**ວ່າເປັນສິ່ງທີ່ບໍ່ສົມບູນພໍໆກັນ ລະຫວ່າງ
**ໃຈ**ທີ່ຂາດ **ກຳລັງ**! ແລະ
**ກຳລັງ**ທີ່ປາສຈາກ**ໃຈ**!
ມີໃຈແຕ່ບໍ່ມີກຳລັງກໍຫາປໂຍດຫຍັງບໍ່ໄດ້!
ໃຈທີ່ປາສຈາກກຳລັງ
ຈຶ່ງເປັນແຕ່**ກ້ອນເນື້ອ** (ຫົວໃຈ) ທີ່ໄຮ້ສະມັດພາບ!
**ໃຈ**ທີ່ມີຄ່າ ຄືໃຈທີ່ມີ**ກຳລັງ**!
**"ກຳລັງ"** ໝາຍເຖິງ **"ແຮງ"** ຫລື
**"ສິ່ງທີ່ເຮັດໃຫ້ເກີດອຳນາດຄວາມເຂັ້ມແຂງ"**!
ສ່ວນ **"ກຳລັງໃຈ"** ໝາຍຄວາມເຖິງ
**ສະພາບຂອງຈິດໃຈ** ທີ່ມີຄວາມ**ເຊື່ອໝັ້ນ**ແລະ**ກະຕືລືລົ້ນ**

**ພ້ອມທີ່ຈະຜະເຊີນ**ກັບເຫດການ **ທຸກຢ່າງ!"**
ຖ້າວັນນີ້ ໃຈຂອງທ່ານກຳລັງຂາດຄວາມ**ເຊື່ອໝັ້ນ**
ຂາດຄວາມ**ກະຕືລືລົ້ນ** ຫລືຂາດຄວາມ**ພ້ອມ**
ທີ່ຈະຜະເຊີນກັບ**ສະຖານະການ** ຫລື**ວິກິດຕະການ**ຂອງຊີວິດ!
ຈົ່ງເຂົ້າໃຈວ່າ ທ່ານກຳລັງຈະ**ສູນເສັຽ**ທຸກສິ່ງແມ້ແຕ່ຊີວິດຂອງທ່ານເອງ!
ດັ່ງນັ້ນຈົ່ງຕື່ນຕົວໃຫ້ມີສະຕິ ແລະເຕືອນຕົວເອງສເມີວ່າ
**"ເສັຽຫຍັງກໍເສັຽໄດ້ ແຕ່ຢ່າເສັຽ ກຳລັງໃຈ!"**
ຄັ້ງນຶ່ງກະສັດ**ດາວິດ**ຜູ້ຍິ່ງໃຫຍ່ແຫ່ງປະຫວັດສາດຊາດ
ອິສຣາເອນ ຊົງປະສົບກັບວິບາກກັມຫລາຍປະການໃນຊີວິດ
ຈົນແທບ**ໝົດກຳລັງ**ໃຈ ແລະ **ຍອມແພ້!**
ແຕ່ສຸດທ້າຍພຣະອົງຊົງສາມາດພິກຜັນພຣະອົງເອງ
ຈາກ**ຈຸດຕ່ຳສຸດ**ກັບສູ່**ຈຸດສູງສຸດ**ໄດ້ອີກເທື່ອນຶ່ງ!
ແມ່ນຫຍັງເປັນ**ເຄັດລັບ**ຂອງກະສັດດາວິດຫລື?
ຄົງບໍ່ມີຜູ້ໃດຮູ້ ຖ້າຫາກວ່າຕົວພຣະອົງເອງບໍ່ໄດ້ຊົງເປີດເຜີຍ!
ແຕ່ເປັນເຣື່ອງໜ້າຍິນດີທີ່ກະສັດດາວິດ
ໄດ້ຊົງເປີດເຜີຍຄວາມລັບຂອງ **"ພຣະກຳລັງ"** ຂອງພຣະອົງ
"ເນື້ອໜັງແລະ**ຈິດ**ໃຈຂອງຂ້າພຣະອົງຈະວອດ**ວາຍ**ໄປ
ແຕ່**ພຣະເຈົ້າ**ຊົງເປັນ**ກຳລັງ**ໃຈ ຂອງຂ້າພຣະອົງ
ແລະເປັນສ່ວນຂອງຂ້າພຣະອົງເປັນນິດ" (ພສສ 73:26)
ຖ້າ**ພຣະເຈົ້າ**ຜູ້ຊົງເປັນ**ກຳລັງໃຈ**ໃຫ້ແກ່ກະສັດດາວິດໃນເວລານັ້ນ
ຊົງຍິນດີທີ່ຈະເປັນ**ກຳລັງໃຈ**ໃຫ້ແກ່ທ່ານໃນເວລານີ້
**ທ່ານຈະບໍ່ຟ້າວສວຍໂອກາດຄວ້າໄວ້ຫລື?**
**ກຳລັງໃຈສຳຄັນເຊັ່ນນີ້ ທ່ານເອງຈະບໍ່ຢາກໃຫ້ກຳລັງໃຈຄົນອື່ນຫລື???**

"ຄວາມສັດທາຄືການເຊື່ອໃນສິ່ງທີ່ທ່ານມອງບໍ່ເຫັນ
ແຕ່ຣາງວັນຂອງຄວາມສັດທານັ້ນຄືການໄດ້ເຫັນ
ໃນສິ່ງທີ່ທ່ານເຊື່ອ!"

## 10. ຣາງວັນແຫ່ງຄວາມສັດທາ!

**"ສັດທາ"** ເປັນເຣື່ອງຂອງຄວາມ**ເຊື່ອຖື!**
ແຕ່ການ**ເຊື່ອ**ຖືຢ່າງດຽວມັກບໍ່ພໍ!
ເພາະເຊື່ອຖືໂດຍບໍ່ລົງມື**ກະທຳຕາມ**ທີ່**ເຊື່ອ**ນັ້ນ
ບໍ່ມີ**ຜົນ**ຫລື**ປໂຍດ**ຫຍັງເລີຍ!

ອັນທີ່ຈິງຄວາມ**ສັດທາ** ມີສ່ວນປະກອບສຳຄັນຢູ່ 3 ປະການຄື

1. **ຮູ້**
2. **ເຫັນດ້ວຍ** ແລະ
3. **ທຳຕາມ!**

ດັ່ງນັ້ນເມື່ອເຮົາ**ສັດທາ**ໃນ**ສິ່ງ**ໃດ **ເຣື່ອງ**ໃດ ຫລື**ບຸກຄົນ**ໃດ

ໝາຍຄວາມວ່າ ເຮົາ

1. **ຮູ້ເຣື່ອງ**ໃນສິ່ງນັ້ນ/ ບຸກຄົນນັ້ນ
2. **ເຫັນດ້ວຍ**ກັບສິ່ງນັ້ນ ຫລືບຸກຄົນນັ້ນ
3. **ລົງມື**ທຳຕາມສິ່ງທີ່**ເຮົາຮູ້** ແລະເຮົາ**ເຫັນດ້ວຍ**ນັ້ນ!

ຄົນທີ່**ສັດທາ**ໃນ**ອາຊີພການງານ**ຂອງຕົນກໍຄື ຄົນທີ່

1. **ຮູ້ເຣື່ອງອາຊີພການງານ**ຂອງຕົນດີ
2. **ເຫັນດ້ວຍ**ກັບການງານນັ້ນ
3. **ກະທຳການງານຕາມ**ອາຊີພນັ້ນ

ຖ້າຂາດອົງປະກອບໃດອົງປະກອບນຶ່ງ

ກໍຖືວ່າຍັງບໍ່ແມ່ນຄົນງານໃນອາຊີພນັ້ນແທ້ເທື່ອ

ເຖິງວ່າບຸກຄົນນັ້ນຈະຫລົງຄິດວ່າຕົນເອງແມ່ນກໍຕາມ!

ຄົນທີ່**ຮູ້ຈັກ**ງານໃນຫນ້າທີ່ຂອງຕົນແລະ**ເຫັນດ້ວຍ**ກັບອາຊີພການງານນັ້ນ

ແຕ່**ບໍ່ປະຕິບັດງານຢ່າງເຕັມກຳລັງ**

ເທົ່າກັບເຂົາບໍ່ມີຄວາມເຊື່ອ ຫລື ເຊື່ອໝັ້ນໃນອາຊີພຂອງຕົນ

ເຂົາ**ບໍ່ແມ່ນ**ຜູ້ປະກອບອາຊີພນັ້ນຢ່າງແທ້ຈິງ!

ເຂົາຄົງ**ບໍ່ໄດ້**ຮັບສິ່ງໃດຫລາຍ ຈາກອາຊີພຂອງເຂົາ!

ດັ່ງນັ້ນ ບຸກຄົນຕ້ອງມີຄວາມ**ສັດທາ**ໃນສິ່ງທີ່**ຕົນເຊື່ອ!**

ແລະລົງມືກະທຳຕາມນັ້ນ!

ແລ້ວວັນນຶ່ງ ເຂົາຈະໄດ້ຮັບຣາງວັນຈາກສິ່ງທີ່ເຂົາເຊື່ອ!

ເໝືອນດັ່ງທີ່ວິຣະບຸຣຸດແຫ່ງຄວາມ**ເຊື່ອໃນພຣະຄັມພີ**ຈຳນວນບໍ່ໜ້ອຍ

ມີປະສົບການດັ່ງກ່າວ

**"ຄົນເຫລົ່ານັ້ນໄດ້ຕາຍໄປຂນະທີ່ມີຄວາມເຊື່ອເຕັມທີ ແລະບໍ່ໄດ້ຮັບສິ່ງທີ່ຊົງ ສັນຍາໄວ້ ແຕ່ເຂົາກໍໄດ້ເຫັນແລະໄດ້ຕຽມຮັບໄວ້ຕັ້ງແຕ່ໄກ ແລະຮູ້ດີວ່າ ເຂົາເປັນຄົນແປກຖິ່ນທີ່ທ່ອງທ່ຽວໄປໃນໂລກ** (ຮຣ 11:13)

**ວັນນີ້ທ່ານເດ່! ກຳລັງເຊື່ອໃນສິ່ງທີ່ທ່ານສັດທາຢູ່ໃນເວລານີ້ ແມ່ນຫລືບໍ?**

**ຖ້າທ່ານເຊື່ອສັດທາຢ່າງແທ້ຈິງ ທ່ານຈະບໍ່ມີວັນ ໝົດກຳລັງໃຈ ດອກ ແມ່ນບໍ?**

“ທ່ານອາດ ເລືອກເກີດບໍ່ໄດ້
ແຕ່ທ່ານສາມາດເລືອກທີ່ຈະ ດຳເນີນຊີວິດຂອງທ່ານເອງໄດ້!”

## 11. ທ່ານເລືອກໄດ້ບໍ?

**ທ່ານເລືອກ**ເກີດເອງບໍ່ໄດ້!
ເພາະມັນເກີນວິສັຍທີ່ທ່ານເອງຈະຄວບຄຸມໄດ້!
ບໍ່ເໝືອນການໄປຊື້ຂອງຫລືຈ່າຍຕລາດ ທ່ານຢາກໄດ້ສິ່ງໃດ
ພຽງໃຊ້ນີ້ວຊີ້ເອົາ ແລ້ວຈ່າຍເງີນ ກໍຈະໄດ້ສິ່ງທີ່ຕົວເອງຕ້ອງການແມ່ນບໍ!
**ກ່ອນທ່ານເກີດມາ**
ທ່ານບໍ່ມີສິດເລືອກຈະ**ເປັນ**ຫລື**ຢູ່**ຢ່າງທີ່ທ່ານຕ້ອງການ!
ອັນທີ່ຈິງ ທ່ານບໍ່ມີ**ຕົວຕົນ**ດ້ວຍຊ້ຳໄປກ່ອນທີ່ທ່ານຈະເກີດມາ!
ເຖິງບາງຄົນອາດຈະເຊື່ອວ່າເຂົາມີຕົວຕົນມາກ່ອນໃນອະດີດຊາດ
ແຕ່ນັ້ນກໍເປັນພຽງແຕ່**ຄວາມເຊື່ອ**
ບໍ່ໄດ້ໝາຍຄວາມວ່າຈະຕ້ອງເປັນຈິງຕາມນັ້ນ!
ແຕ່ທີ່ແນ່ນອນກໍຄື **ພົບນີ້**ຫລື**ຊາດນີ້**ມີຈິງ!
**ແລະທ່ານກຳລັງຢູ່ໃນຄວາມເປັນຈິງ!**
ບໍ່ວ່າທ່ານ**ເກີດ**ມາຈາກຄອບຄົວໃດ ເຊື້ອຊາດໃດ ຖານະໃດ
ຫລືສະພາບໃດ ລ້ວນແຕ່ເປັນຄວາມຈິງທີ່ທ່ານ**ເລືອກບໍ່ໄດ້!**
ທ່ານຕ້ອງ**ຍອມຮັບ**ຄວາມເປັນຈິງ!
ຖ້າທ່ານເກີດມາ**ພິການ** ກໍຄື**ພິການ** ຈະປະຕິເສດວ່າບໍ່ພິການກໍບໍ່ໄດ້
ຖ້າເກີດມາເປັນ**ລູກຄົນຕ່າງດ້າວ** ກໍຄື ເປັນ**ລູກຄົນຕ່າງດ້າວ!**
ຈະປະຕິເສດວ່າບໍ່ໄດ້ເປັນກໍບໍ່ໄດ້!
ຖ້າທ່ານເກີດມາ**ຈີນ** ກໍຄື **ຈີນ!**
ປະຕິເສດຄວາມຈິງບໍ່ໄດ້ອີກເຊັ່ນກັນ!
ຈະ**ເລືອກ**ບໍ່ເກີດມາເປັນຢ່າງນັ້ນບໍ່ໄດ້!
ເພາະມັນກໍເກີດຂື້ນມາແລ້ວ!
ແຕ່ຂ່າວດີ ກໍຄື..ທ່ານເລືອກທີ່ຈະດຳເນີນຊີວິດໃຫ້**ແຕກຕ່າງ**
ຫລືດີກວ່າ**ສະພາບ**ຕາມທີ່ເກີດມາໄດ້!
ເຖິງທ່ານຈະເກີດມາ**ພິການ** ແຕ່ທ່ານບໍ່ຈຳເປັນຕ້ອງນັ່ງສົງສານຕົວເອງ!
ມີຄົນ**ພິການຫລວງຫລາຍທີ່ສ້າງຊື່ສຽງ**
ແລະທຳຄຸນປໂຍດໃຫ້ກັບໂລກນີ້!
ທ່ານຫລືຍາດມິດກໍອາດເປັນນື່ງໃນຖ້າມກາງຄົນເຫລົ່ານີ້!
ຂື້ນຢູ່ກັບຕົວທ່ານເອງ!

ເຊັ່ນດຽວກັນ ມີ**ລູກຕ່າງດ້າວ**ຈຳນວນມາກທີ່ເຄີຍມີປົມດ້ອຍ
ແຕ່ສ້າງຕົນເອງແລະຄອບຄົວໃຫ້**ເປັນໃຫຍ່ເປັນໂຕ**ໃນບ້ານເມືອງໄດ້
ຄົນທີ່ເກີດມາຈາກຄອບຄົວທີ່**ຍາກຈົນ** ກໍເຊັ່ນກັນ
ເຮົາບໍ່ຈຳເປັນຈະຕ້ອງຈົມປັກຢູ່ກັບຄວາມອຶດຢາກຕລອດໄປ
ບາງຄົນສາມາດຊູຕົວຂຶ້ນມາເປັນ**ນາຍຍົກຣັຖມົນຕຣີ** ຫລືມະຫາເສດຖີໄດ້!
ແມ່ນແລ້ວ **ເຮົາເລືອກທີ່ຈະໃຫ້ຊີວິດເຮົາດີກວ່າທີ່ເປັນຢູ່ໃນເວລານີ້ໄດ້!**
ແລະເຮົາຄວນຈະເລືອກແຕ່ສິ່ງທີ່ດີ!
ການມີຊື່ສຽງນັ້ນເປັນສິ່ງດີ ທີ່ຄວນເລືອກຍິ່ງກວ່າການມີເງິນທອງ
**"ຊື່ສຽງດີເປັນສິ່ງທີ່ຄວນເລືອກຍິ່ງກວ່າຄວາມມັ່ງຄັ່ງມາກມາຍ ແລະຊື່ງເປັນທີ່ໂຜດປານກໍດີກວ່າມີເງິນຫລືທອງ"** (ສພສ 22:1)
**ດັ່ງນັ້ນ ວັນນີ້ຢ່າມົວແຕ່ນັ່ງໂທດຊາດກຳເນີດຂອງຕົນເອງ**
**ຈົ່ງລຸກຂຶ້ນມາກ້າສູ້ ແລະນຳຊີວິດຂອງທ່ານໄປສູ່ສະພາບທີ່ດີຂຶ້ນກວ່າເດີມຈະດີກວ່າ!**

"ມະນຸດເກີດມາເພື່ອຄວາມສຳເລັດ
ບໍ່ແມ່ນເພື່ອຄວາມລົ້ມເຫລວ!"

## 12. ສຳເລັດຕາມພຣະປະສົງ!

**ເມື່ອພຣະຜູ້ເປັນເຈົ້າຊົງສ້າງຟ້າ**ສວັນແລະແຜ່ນດິນໂລກ
ພຣະອົງຊົງກະທຳໃຫ້ທຸກສິ່ງ**ສຳເລັດ**ໂດຍງ່າຍດາຍ!
ແຕ່**ມະນຸດ**ກໍປະສົບຄວາມ**ສຳເລັດ**
ໃນການ**ທຳລາຍ**ເກືອບທຸກສິ່ງທີ່ພຣະເຈົ້າຊົງສ້າງ!
ສະພາບແວດລ້ອມດັ້ງເດີມທີ່ພຣະເຈົ້າຊົງອອກແບບສ້າງໄວ້ຢ່າງດີຢ້ຽມ
ຖືກມະນຸດ**ກອບໂກຍ**ແລະບໍຣິໂພກຢ່າງບໍ່ເອົາຫົວໃສ່ໃຈຊາ
ເຮັດໃຫ້ຊັພຍາກອນຕາມທຳມະຊາດລ່ອຍຫລໍ ຫລືຜິດພ້ຽນໄປຈາກເດີມ!
ແລະນຳມະນຸດໄປສູ່ຄວາມຜ່າຍແພ້ຕໍ່ພັຍຕາມທັມະຊາດ
ຢ່າງເຊັ່ນນ້ຳຖ້ວມໃຫຍ່, ຂໍ້ຕົນເຈື່ອນ, ປາກົດການເຮືອນກະຈົກ
ທີ່ທຳລາຍແລະສ້າງຄວາມເສັຽຫາຍແກ່ມະນຸດຫລາຍຂຶ້ນທຸກຂນະ!
ແທ້ຈິງມະນຸດຖືກອອກແບບມາໃຫ້ປະສົບຄວາມ**ສຳເລັດ**ໃນໂລກນີ້!
ໄດ້ຮັບການກຳໜົດໃຫ້ເປັນຜູ້**ຄອບຄອງ**ສັພສິ່ງໃນໂລກນີ້
ແລະມີ**ສິດອຳນາດ**ເໜືອທຸກສິ່ງ!
ດັ່ງທີ່ບັນທຶກໄວ້ໃນພຣະຄັມພີວ່າ

"ພຣະເຈົ້າຊົງອວຍພອນແກ່**ມະນຸດ** ພຣະອົງຊົງກ່າວແກ່ເຂົາວ່າ

"ຈົ່ງມີລູກເຕົ້າ ທະວີຫລາຍຂຶ້ນຈົນເຕັມແຜ່ນດິນ

**ຈົ່ງມີອຳນາດເໜືອແຜ່ນດິນ**

ຈົ່ງຄອບຄອງ ຝູງປາໃນທະເລ ແລະຝູງນົກໃນອາກາດ

ກັບບັນດາສັດທີ່ເຄື່ອນໄຫວ ເທິງແຜ່ນດິນ" (ປຖກ 1:28)

ເສັ້ງດາຍທີ່ມະນຸດ**ປ່ອຍຕົວປ່ອຍໃຈ**

ຫລົງໄຫລໄປກັບຄຳຫວ່ານລ້ອມຂອງມານ

ເຮັດໃຫ້ມະນຸດເກີດຄວາມ**ລາໂມບ**ແລະ**ທຳລາຍຄວາມໄວ້ເນື້ອເຊື່ອໃຈ**

ທີ່ພຣະເຈົ້າຊົງມີຕໍ່ເຂົາ!

ມະນຸດປ່ອຍໃຫ້**'ຄວາມຢາກ'** ມາເປັນ "ພຣະເຈົ້າອົງໃໝ່" ຂອງເຂົາ

ແລະດຳຣົງຢູ່ພຽງເພື່ອຕອບສນອງ **'ພຣະເຈົ້າແຫ່ງຄວາມຢາກ'**

ໃນທີ່ສຸດແທນທີ່ມະນຸດຈະເປັນຜູ້ປະສົບ**ຄວາມສຳເຣັດ**

ມະນຸດຈຶ່ງກັບກາຍເປັນຜູ້**ຜ່າຍແພ້!**

ແລະໄດ້**ຜົນລັບ**ກໍກາຍເປັນ**ຜົນລົບ** ກະທົບຕໍ່ຊີວິດສ່ວນຕົວ

ຄອບຄົວ ແລະສະພາບແວດລ້ອມໃນສັງຄົມທີ່ເຂົາຢູ່!

ຢ່າງໃດກໍດີ **ຂ່າວດີກໍຄື**

**ພຣະຜູ້ເປັນເຈົ້າບໍ່ໄດ້ຊົງອອກແບບມາໃຫ້ມະນຸດລົ້ມເຫລວ**

ພຣະອົງຊົງປະສົງໃຫ້ເຮົາມີຊັຍແລະປະສົບຄວາມສຳເຣັດ

ໃນການທຳສິ່ງຄາມກັບ **"ຄວາມຢາກ!"**

ດັ່ງນັ້ນ ຖ້າເຮົາ**ບໍ່ຈົມປັກ**ຢູ່ໃນຄວາມ**ລົ້ມເຫລວ**

ແລະ**ບໍ່ທະນົງ**ຢູ່ໃນ ຄວາມ**ເກັ່ງກ້າ**ຂອງຕົນເອງ

ແຕ່**ຖ່ອມໃຈລົງ ຍອມຮັບ**ຄວາມຈຳກັດຂອງຕົນແລະທູນຂໍການຊ່ອຍເຫລືອ

ຈາກພຣະຜູ້ເປັນເຈົ້າ ຜູ້ຊົງຮູ້ຈັກຕົວຂອງເຮົາດີຍິ່ງກວ່າຕົວຂອງເຮົາເອງ

ແລະຍອມຮັບພຣະປະສົງດັ້ງເດີມສຳລັບຊີວິດຂອງເຮົາ

ພຣະອົງກໍຈະຊົງ**ປະທານຄວາມສຳເຣັດ**ໃຫ້ແກ່ຊີວິດຂອງເຮົາ!

ກະສັດດາວິດຜູ້ຍິ່ງໃຫຍ່ແລະຫລົງຜິດຜ່າຍແພ້ຕໍ່ບາບ

ໄດ້ເປັນຕົວຢ່າງແກ່ເຮົາໃນເຣື່ອງນີ້ ເມື່ອພຣະອົງທູນຕໍ່ພຣະເຈົ້າວ່າ

"ຂ້າແດ່ພຣະເຈົ້າ **ຂໍຊົງຊ່ອຍຂ້າພຣະອົງໃຫ້ລອດເທີ້ນ**

ຂ້າແດ່ພຣະເຈົ້າ **ຂໍປະທານຄວາມສຳເຣັດແກ່ຂ້າພຣະອົງທັງຫລາຍເທີ້ນ!"** (ພສສ 118:25)

**ແລະກະສັດດາວິດກໍໄດ້ຮັບຕາມທີ່ຊົງທູນຂໍ!**

ວັນນີ້ຖ້າທ່ານຕ້ອງການຄວາມສຳເຣັດນີ້ ໃນເງື່ອນໄຂອັນດຽວກັນ

ທ່ານກໍຈະໄດ້ຮັບເຊັ່ນດຽວກັນ!

**ຄຳຖາມກໍຄືວ່າ ທ່ານຕ້ອງການແທ້ໆບໍ?**

# II. ຊີວິດເພື່ອຟັນຝ່າຄວາມຜິດພາດ ການມຸ້ງຮ້າຍ ແລະ ການໃຫ້ອະພັຍ

**ທ່ານເຄີຍເຮັດຜິດພາດຫລືບໍ?**
ເຊັ່ນ **ຄິດຜິດ ເວົ້າ**ຜິດ ຫລື **ເຮັດ**ຜິດໃນເຣື່ອງໃດເຣື່ອງນຶ່ງ
ເວລາທ່ານ**ພາດພັ້ງ**ໄປ
ທ່ານຕ້ອງການໃຫ້ຄົນອື່ນໆປະຕິບັດຕໍ່ທ່ານຢ່າງໃດ?
ທ່ານຕ້ອງການໃຫ້ເຂົາເຫລົ່ານັ້ນກຽດຊັງ ຊໍ້າເຕີມທ່ານ
ຫລືທ່ານຕ້ອງການໃຫ້ຄົນເຫລົ່ານັ້ນ**ເຂົ້າໃຈ** ແລະໃຫ້**ອະພັຍ**ແກ່ທ່ານ?
ທ່ານເຄີຍຮູ້ດີຫລືບໍ່ວ່າ
ທ່ານຕ້ອງການໃຫ້ຜູ້ອື່ນປະຕິບັດຕໍ່ທ່ານຢ່າງໃດ
ໃນຍາມທີ່ທ່ານເຮັດຜິດພາດ
ຜູ້ອື່ນກໍຕ້ອງການໃຫ້ທ່ານປະຕິບັດຕໍ່ເຂົາ
ໃນຍາມທີ່ເຂົາຜິດພາດເຊັ່ນກັນ!
ກົດທອງຄໍາແຫ່ງຄວາມສັມພັນອັນໂດ່ງດັງຈາກພຣະຄັມພີກ່າວວ່າ
**"ຈົ່ງປະຕິບັດຕໍ່ອື່ນຢ່າງທີ່ທ່ານປາຖນາໃຫ້ເຂົາປະຕິບັດຕໍ່ທ່ານ"** (ມທ 7:12)
ຖ້າທ່ານແລະເຂົາເຮັດເຊັ່ນນີ້
ກໍາລັງໃຈໃນການທີ່ຈະເຮັດໃຫ້ດີຂຶ້ນ
ກໍຈະເກີດຂຶ້ນໃນຖາມກາງເຮົາ!
ທ່ານຕ້ອງການ**ກໍາລັງ**ໃຈທີ່ວ່ານີ້ຫລືບໍ?
ຖ້າທ່ານຕ້ອງການ.. ຢ່າລືມແບ່ງປັນໃຫ້ຄົນອື່ນກ່ອນເດີ!

## "ຄວາມຜິດພາດບໍ່ແມ່ນເຣື້ອງແປກ ແຕ່ຖ້າບໍ່ເຄີຍຜິດພາດເລີຍ ນັ້ນແຫລະເຣື້ອງປະຫລາດ!"

## 1. ແປກທີ່ບໍ່ຜິດພາດ!

ໃນພຣະຄັມພີອັນອັມະຕະໄດ້ບັນທຶກສັຈທັມໄວ້ວ່າ
**"ເພາະເຮົາທຸກຄົນເຮັດຜິດພາດໄປຫລາຍໆຢ່າງ**
**ຖ້າຜູ້ໃດບໍ່ໄດ້ເຮັດຜິດທາງວາຈາ**
**ຜູ້ນັ້ນກໍເປັນຄົນດີຮອບຄອບແລ້ວ**
**ແລະສາມາດບັງຄັບທັງຕົວໄວ້ໄດ້ດ້ວຍ!"** (ຢກບ 3:2)

ບໍ່ຮູ້ວ່າທ່ານເຫັນດ້ວຍກັບຄໍາກ່າວຂ້າງຕົ້ນຫລືບໍ?

ແຕ່ສໍາລັບຂ້າພະເຈົ້າ 101% ເລີຍ!

ຂ້າພະເຈົ້າຍັງຄິດບໍ່ອອກເລີຍວ່າມີມື້ໃດແດ່

ທີ່ຂ້າພະເຈົ້າອ້າປາກເວົ້າແລ້ວບໍ່ເຄີຍຜິດພາດເລີຍ?

ຫລາຍຄັ້ງທີ່ຂ້າພະເຈົ້າຄິດວ່າຂ້າພະເຈົ້າເວົ້າໄດ້ດີ

ເວົ້າໄດ້ຢ່າງສົມບູນແບບແລ້ວ!

ແຕ່ບໍ່ນານຮ່ອງຮອຍແຫ່ງຄວາມຜິດພາດໃນຄໍາເວົ້າກໍຄ່ອຍໆເກີດຂຶ້ນ!

ບາງທີຂ້າພະເຈົ້າ **ຍິ້ມເຍາະ** ຄົນອື່ນ

ແຕ່ເຂົາກັບເຂົ້າໃຈວ່າຂ້າພະເຈົ້າ **ສຽດສີ** ເຂົາ!

ບາງທີຂ້າພະເຈົ້າ **ເຕືອນສະຕິ** ເຂົາ

ເຂົາກັບຄິດໄປວ່າຂ້າພະເຈົ້າໄປ **ພິພາກສາ** ເຂົາ!

ບາງທີຂ້າພະເຈົ້າ **ແນະນໍາ** ເຂົາ

ເຂົາກັບສະລຸບໄປວ່າຂ້າພະເຈົ້າ ຫາວ່າ ເຂົາໂງ່!

ໂອຍ! ຈະເວົ້າ ຈະເຮັດສິ່ງໃດອອກໄປແຕ່ລະຢ່າງນັ້ນ

ເປັນຕ້ອງມີຄົນຮູ້ສຶກບໍ່ດີຫລືເຈັບປວດເພາະ ຄໍາເວົ້າ ຂ້າພະເຈົ້າຢູ່ສເມີ!

ຈັ່ງແມ່ນຍາກ!

ດັ່ງນັ້ນ ບາງເທື່ອຂ້າພະເຈົ້າເລີຍໃຊ້ວິທີກົງກັນຂ້າມນັ້ນຄື **ບໍ່ເວົ້າເສັຽເລີຍກໍດີກວ່າ!**

ໂດຍຖືຄະຕິວ່າ **"ເວົ້າໄປສອງໄພເບັ້ຽ ງຽບໆເສັຽຕໍາລຶງທອງ"!**

ຊຶ່ງຫມາຍຄວາມວ່າເວົ້າໄປບໍ່ມີປໂຍດ ງຽບເສັຽກໍຈະດີກວ່າ!

ແຕ່ແລ້ວກໍກັບກາຍເປັນວ່າ ຂ້າພະເຈົ້າຕ້ອງເສັຽຕໍາລຶງທອງໄປອີຫລີ!

ນັ້ນຄືຖ້າຂ້າພະເຈົ້າ**ເວົ້າ** ຂ້າພະເຈົ້າອາດຈະເສັຽຫາຍແຕ່**ສອງໄພເບັ້ຽ**

ຊຶ່ງມີຄ່າ **6 ສະຕາງ** ແຕ່ຖ້າຂ້າພະເຈົ້າບໍ່ເວົ້າຄື ງຽບເສັຽ

ຂ້າພະເຈົ້າອາດຈະເສັຽຫາຍເຖິງ 1 **ຕໍາລຶງ** (ມີຄ່າຣາວ 4 ບາດ) (ສຸພາສິດອັງກິດ-ຄໍາສອນໃຈຂອງໄທ)

ແຕ່ໃນທີ່ນີ້ບໍ່ແມ່ນແຕ່**ຕໍາລຶງ**ທໍາມະດາເທົ່ານັ້ນ

ແຕ່ເປັນເຖິງ**ຕໍາລຶງທອງ**ຊຶ່ງມີຄ່າມາກມາຍຫລາຍເທົ່າຕົວ!

ດັ່ງນັ້ນຈຶ່ງກ່າວໂດຍສະລຸບໄດ້ວ່າ ບໍ່ວ່າຂ້າພະເຈົ້າຫລືທ່ານຈະເຮັດຫຍັງກໍຕາມ

ລ້ວນມີໂອກາດຜິດພາດເຮັດໃຫ້**ເສັຽ** ຫລື**ເສັຽຫາຍ**ໄດ້ທັງສິ້ນ!

ທ່ານຈຶ່ງຄວນຮູ້ຈັກຍອມຮັບຄວາມຈິງວ່າ

ໃນຊີວິດນີ້ບໍ່ມີຫຍັງທີ່ສົມບູນແບບ 100%

ທ່ານຕ້ອງຮູ້ຈັກທໍາໃຈເພື່ອໄວ້ສໍາລັບຄວາມຜິດພາດ

ທີ່ທ່ານອາດເຮັດຕໍ່ຕົວເອງ ຫລືຜູ້ອື່ນ

ຮວມເຖິງຄວາມຜິດພາດທີ່ຜູ້ອື່ນອາດເຮັດຕໍ່ທ່ານ!

**ເພາະຖ້າທໍາໃຈໄດ້ເຊັ່ນນີ້ແລ້ວ ທ່ານກໍຈະບໍ່ທຸກໃຈຈົນເກີນໄປ.. ແມ່ນຫລືບໍ?**

# “ຈົ່ງເອົາຄວາມຜິດພາດຂອງຜູ້ອື່ນມາເປັນບົດຮຽນສຳລັບຊີວິດ
# ຈົ່ງເອົາຄວາມສຳເຣັດຂອງຜູ້ອື່ນມາເປັນແນວທາງປະກອບກິຈ!”

## 2. ຄວາມຜິດພາດທີ່ມີປໂຍດ!

**ຄຳວ່າ “ຜິດ”** ໝາຍຄວາມວ່າ

**“ບໍ່ຕົງກັບຄວາມຈິງ ຫລືທີ່ກຳນົດນິຍາມໄວ້  ບໍ່ຖືກ ຕ່າງໄປ ແລະແປກໄປ”**

ສ່ວນຄຳວ່າ **“ພາດ”** ຄື **“ບໍ່ຕົງທີ່ໝາຍ”**

ເຊັ່ນ ດາດໄປ ລ່ຽງໄປ ຫລືຕະເລີດໄປ (ເປີ່ນໄປ)

**ຜິດພາດເພາະບໍ່ຮູ້ເທົ່າເຖິງການ**

**ຫລືເຊື່ອຕົວເອງເກີນໄປ”**

ໃນຊີວິດຈິງຂອງທ່ານກໍຄົງຈະມີປະສົບການກັບ

ຄວາມ **“ຜິດ“** ແລະ **“ພາດ”** ມາບໍ່ໜ້ອຍ

ແລະທຸກເທື່ອທີ່ເຮົາ **“ຜິດພາດ”**

ທ່ານຈະສາມາດຮຽນຮູ້ບົດຮຽນທີ່ລ້ຳຄ່າສຳລັບຊີວິດຂອງທ່ານ!

ພຽງແຕ່ວ່າ ທ່ານບໍ່ມີ**ເວລາ**ຫລາຍໃນຊີວິດ

ທີ່ຈະຜິດພາດໃນທຸກໆເຣື່ອງ ເພື່ອທີ່ຈະຮຽນຮູ້!

ດັ່ງນັ້ນ ທ່ານຈຶ່ງຄວນຮຽນຮູ້ຈັກບົດຮຽນສຳລັບຊີວິດຂອງທ່ານ

ຜ່ານຄວາມຜິດພາດຂອງຜູ້ອື່ນແທນ!

ດ້ວຍເຫດນີ້ ທ່ານຈຶ່ງເປັນໜີ້ **“ຄວາມຜິດພາດ”**

ຂອງທຸກຄົນທີ່ຊ່ອຍໃຫ້ເຮົາຮຽນຮູ້ບົດຮຽນແຫ່ງຊີວິດ!

ໂດຍທີ່ທ່ານບໍ່ຕ້ອງເສັຽເວລາ ເສັຽຊັບສິນ ເສັຽຕົວ ຫລືຮວມທັງ

**“ເສັຽຊີວິດ”** ກັບ**ຄວາມຜິດພາດ**ໃນເຣື່ອງເຫລົ່ານັ້ນກ່ອນ!

ໃນໜັງສືສຸພາສິດໄດ້ເຕືອນໄວ້ວ່າ

“ໃນວິຖີຂອງຄວາມຊອບທັມເປັນ**ຊີວິດ**

ແຕ່ທາງຂອງ**ຄວາມຜິດພາດ**ນຳໄປເຖິງ**ຄວາມມໍຣະນາ**!”

ດັ່ງນັ້ນ ຢ່າປ່ອຍໃຫ້ຊີວິດຂອງທ່ານຜິດພາດ

ຈົນຕ້ອງເສັຽຊີວິດ ພຽງເພື່ອຮຽນຮູ້ວ່າ

ທ່ານຄວນເຮັດຫລືບໍ່ຄວນເຮັດຫຍັງ!

ເພາະມັນບໍ່ຄຸ້ມຄ່າ!

ຢ່າໃຫ້ທ່ານເຮັດຄວາມຜິດພາດເໝືອນການຫລິ້ນສນຸກ

ເພາະຜົນທີ່ຈະເກີດຂຶ້ນຕາມມາຄື **ທຸກຂະໝາດ**!

ໃຫ້ທ່ານລະມັດລະວັງຕົວຂອງທ່ານໃຫ້ດີ

ເພື່ອຈະບໍ່ເຮັດສິ່ງ**ຜິດພາດ**ໃດໆດ້ວຍຕົວຂອງທ່ານເອງ

ອັນເປັນການເປືອງຕົວລ້າງ

ແຕ່ໃຫ້ຮຽນຈາກ**ຄວາມຜິດພາດ**ຂອງຄົນອື່ນແທນ?!?!?

ແລະໃນເວລາດຽວກັນ ຂໍໃຫ້ທ່ານຮຽນຮູ້ຈັກ

**ແນວທາງໃນການປະກອບກິຈ**

ຈາກ**ຄວາມສຳເລັດຂອງຜູ້ອື່ນ**

ເພື່ອເປັນແນວທາງດຳເນີນຊີວິດ!

**ແລ້ວທ່ານຈະພົບວ່າ**

**ຊີວິດຂ້າງໜ້າຢູ່ເສັງ**ເຫລືອເກີນ!

## "ຄວາມທຸກຍາກໃນວັນນີ້ອາດຈະມີປໂຍດງອກເງີຍໃນວັນໜ້າ!"

## 3. ທຸກ-ລາບ!

**"ຄວາມທຸກຍາກ"**

ປະກອບດ້ວຍ **"ທຸກ"** ແລະ **"ຍາກ"**!

**"ທຸກ"** ໝາຍເຖິງ

**"ຄວາມຍາກລຳບາກ**

**ຄວາມບໍ່ສະບາຍກາຍບໍ່ສະບາຍໃຈ"**

ສ່ວນ **"ຍາກ"** ຫມາຍເຖິງ

**"ຄວາມລຳບາກ**

**ບໍ່ສະດວກ ບໍ່ງ່າຍ** ຫລືຈົນ"!

ແຕ່ບໍ່ວ່າເຮົາກຳລັງຜະເຊີນກັບ

**"ຄວາມທຸກ"**

ຫລື **"ຄວາມຍາກລຳບາກ"** ປະການໃດຢູ່ກໍຕາມ

ສິ່ງທີ່ທ່ານຕ້ອງຮູ້ກໍຄື **"ທຸກ"** ນັ້ນ

ອາດເປັນຣົດຊຶ່ງເປັນຜູ້**ນຳຂະບວນ**ຢູ່ກໍເປັນໄດ້!

**"ນຳຂະບວນ"** ສິ່ງໃດຫລື?

ກໍນຳຂະບວນ **"ພຣະພອນ"** ຫລື **"ລາບ"** ນັ້ນເອງ!

**"ລາບ"** ຄື **"ຂອງທີ່ໄດ້ຫລືການໄດ້ມາໂດຍບໍ່ໄດ້ຄາດຄິດ!"**

**ຄວາມທຸກ** ບາງເທື່ອອາດນຳ **"ລາບ"** ມາສູ່ທ່ານຢ່າງບໍ່ຄາດຄິດ!

ເຮົາເອີ້ນ **"ລາບ"** ຢ່າງນີ້ວ່າ **"ທຸກ-ລາບ"**

ຊຶ່ງຫມາຍເຖິງ **"ການທີ່ຕ້ອງຮັບທຸກເສັຽກ່ອນຈຶ່ງຈະມີລາບ"**!

ກະສັດດາວິດຜູ້ຍິ່ງໃຫຍ່ເຄີຍກ່າວວ່າ

**"ດີແລ້ວ ທີ່ຂ້າພຣະອົງທຸກຍາກ**
**ເພື່ອຂ້າພຣະອົງຈະຮຽນຮູ້ເຖິງກົດເກນຂອງພະອົງ"!**
ຢ່າງໜ້ອຍປໂຍດຂອງ **"ຄວາມທຸກຍາກ"** ກໍຄື
ເຮັດໃຫ້ຄົນເຮົາຮູ້ຈັກ**ຖ່ອມຕົວ**ລົງ!
ບໍ່ວ່າເຂົາຈະເປັນ**ກະສັດ** ຫລື **ໄພ່ ເສດຖີ** ຫລື**ຍາຈົກ**
**ນັກປາດ** ຫລື**ສາມັນຊົນ** ແລະອື່ນໆ
**ຄວາມທຸກຍາກ** ຈຶ່ງມີປໂຍດສຳລັບທຸກຄົນ!
ມະນຸດເຮົາໂດຍທົ່ວໄປໃນຍາມມີ**ສຸກ**ນັ້ນກໍມັກລືມພຣະເຈົ້າ
ແຕ່ຍາມມີ**ທຸກ**ກັບເອີ້ນຫາພຣະອົງ!
**ກະສັດດາວິດ**ຄົງມີປະສົບການໃນທຳນອງນີ້
ເພາະໃນຍາມສຸກພຣະອົງປ່ອຍຕົວໃຈໄປກັບຣາຄະຕັນຫາຂອງຕົນ
ແລະເຮັດຜິດປະເວນີກັບນາງ**ບັທເຊບາ**
ຊຶ່ງເປັນພັຣຍາຂອງທະຫານຂອງດາວິດເອງ
ແຕ່ຟ້າສວັນບໍ່ເຂົ້າຂ້າງຜູ້ທີ່ເຮັດຜິດ
ພຣະຜູ້ເປັນເຈົ້າຈຶ່ງຊົງລົງໂທດກະສັດດາວິດໃຫ້ສຳນຶກຕົວ
ຜ່ານການຕຳໜິຂອງທ່ານນາທານຜູ້ປະກາດພຣະທັມແລະ
ຜ່ານການສູນເສັຽບຸດທີ່ເກີດຈາກການລ່ວງປະເວນີກັບນາງບັທເຊບາ
ພຣະອົງຕ້ອງທົນທຸກທໍຣະມານໃຈກັບເຣື່ອງນີ້ລະຍະນຶ່ງ
ກ່ອນຈະຖ່ອມພຣະອົງລົງຮັບການຕີສອນນັ້ນ
ແລະຮຽນຮູ້ຈັກທີ່ຈະລະມັດລະວັງໃນການດຳເນີນຊີວິດ
ຕາມກົດເກນຂອງພຣະເຈົ້າ
ແລະກັບມາມີຄວາມສັມພັນທີ່ຖືກຕ້ອງກັບພຣະເຈົ້າອີກເທື່ອນຶ່ງ
ໜ້າຍິນດີທີ່..
ພຣະເຈົ້າຊົງເມດຕາ ຍອມຮັບແລະອວຍພອນດາວິດອີກເທື່ອນຶ່ງ
ໂດຍການປະທານ **"ໂຊໂລໂມນ"** ຜູ້ສລຽວສລາດແລະມັ່ງຄັ່ງ
ໃຫ້ບັງເກີດມາເປັນຂອງຂວັນ!
ຊຶ່ງນັບວ່າເປັນ**ທຸກ-ລາບ**ຢ່າງແທ້ຈິງ!
**ວັນນີ້ຫາກທ່ານຜະເຊີນກັບຄວາມທຸກຍາກ**
**ກໍຢ່າຟ້າວໂວຍວາຍ ເພາະນັ້ນອາດຈະເປັນ**
**ທຸກ-ລາບຂອງທ່ານກໍເປັນໄດ້!**

**ຜູ້ໃດຈະຮູ້ໄດ້?!?!**

“ຣົດໄຟແຫ່ງຄວາມລົ້ມເຫລວມັກແລ່ນ
ຢູ່ເທິງລາງຂອງຄວາມກຽດຄ້ານ!”

## 4. ຣົດໄຟແຫ່ງຄວາມລົ້ມເຫລວ

**ຂ້າພະເຈົ້າມັກນັ່ງຣົດໄຟຊິນວິວທິວທັດ!**
**ແຕ່ຂ້າພະເຈົ້າບໍ່ມັກນັ່ງຣົດໄຟແຫ່ງຄວາມລົ້ມເຫລວ!**
ເມື່ອກ່ອນຄົນເຮົາມັກຈະປຽບທຽບການນັ່ງຣົດໄຟ
ວ່າເປັນອາການຂອງຄວາມເລື້ອຍເປື່ອຍບໍ່ໄດ້ເລື້ອງ!
ເຖິງກັບມີການເວົ້າເຍາະເຍີ້ຍວ່າ ສຽງລໍ້ຂອງຣົດໄຟຂນະທີ່ແລ່ນນັ້ນ
ຟັງຄ້າຍໆກັບປໂຍກທີ່ວ່າ **“ເຖິງກໍຊ່າງບໍ່ເຖິງກໍຊ່າງ!”** ຫລືວ່າ **“ທຸກຄັກໆ ທຸກຄັກໆ”**
ກ່າວກໍຄື ຣົດໄຟເປັນສັນຍາລັກຂອງຄວາມບໍ່ກະຕືຣືລົ້ນ
ຈົນບາງຄັ້ງຄວາມຫມາຍກໍພັຽນໄປເປັນ **“ຄວາມກຽດຄ້ານ”!**
ແຕ່**ຣົດໄຟສະໄໝໃໝ່**ນີ້ດີຂຶ້ນກວ່າສະໄໝບູຮານຫລາຍກວ່າ!
ຖ້າຫາກເປັນຣົດໄຟຟ້າຂອງຍີ່ປຸ່ນ ຫລືເຢັຽຣະມັນ
ຫລືຝຣັ່ງເສດແລ້ວ ຄົນລະເຣື່ອງກັນເລີຍ!
ຣົດໄຟສະໄໝໃໝ່ພວກນັ້ນ ແລ່ນ**ໄວ**ເໝືອນກັບ**ຈຣວດ**
ຫລືບາງທີ່ເອີ້ນວ່າ**ຣົດໄຟຫົວກະສຸນ!**
ຣົດໄຟສະໄໝໃໝ່ຈຶ່ງເປັນສັນຍາລັກຂອງຄວາມ**ກ້າວໜ້າຢ່າງວ່ອງໄວ**
ອັນເກີດຈາກຄວາມຄິດສ້າງສັນໃໝ່ໆທີ່ບໍ່ຢຸດຢັ້ງ!
ເມື່ອຣົດໄຟສະໄໝໃໝ່ຣາຍເທັກຕ໌ຂຶ້ນເລື້ອຍໆ
ຣາງເກົ່າໆແບບຮອງດ້ວຍຂອນໄມ້ກໍບໍ່ເຫມາະສົມອີກແລ້ວ!
ດັ່ງນັ້ນເຮົາຈະເປັນຣົດໄຟທີ່ດຸໝັ່ນເທິງລາງແຫ່ງຄວາມກຽດຄ້ານ
ຄົງຈະບໍ່ໄດ້ອີກເຊັ່ນກັນ!
ຫາກຊີວິດຂອງເຮົາເປັນເໝືອນດັ່ງຣົດໄຟ
ເຮົາຈະປະສົບຄວາມ**ສຳເຣັດ**ໄດ້ຢ່າງໃດ?
ຖ້າເຮົາທຳງານຫລືດຳເນີນຊີວິດຢູ່ເທິງລາງແຫ່ງຄວາມກຽດຄ້ານ!
ຄຳວ່າ “ກຽດຄ້ານ” ໝາຍຄວາມວ່າ **“ບໍ່ຢາກທຳງານ!”**
ແລະຖ້າເຮົາ**ບໍ່ທຳງານ**ຈະເອົາຫຍັງມາກິນ!!
ເຖິງມີບຸນເກົ່າເກັບໄວ້ກິນ ແຕ່ຖ້າໃຊ້ຊັບສິນທີ່ມີຢູ່
ໂດຍບໍ່ທຳງານຫາມາເພີ້ມ ສຸດທ້າຍກໍຍາກຈົນລົງ!
ໃນໜັງສືສຸພາສິດບັນຣະຍາຍພາບຄົນກຽດຄ້ານຢ່າງຊັດເຈນວ່າ
**“ຄົນກຽດຄ້ານຝັງມືຂອງຕົວເອງໄວ້ໃນຊາມ**
**ແລະບໍ່ຍອມແມ້ແຕ່ຈະນຳອາຫານມາສູ່ປາກຂອງຕົນ”** (ສພສ 19:24)

ແລະ

**"ຄົນກຽດຄ້ານຝັງມືຂອງເຂົາໄວ້ໃນຊາມ**

**ເຂົາອິດເມື່ອຍທີ່ຈະນຳມືກັບມາທີ່ປາກຂອງຕົນ"** (ສພສ 26:15)

ຜູ້ໃດຄ້ານຂນາດນີ້ຕ້ອງນັບວ່າສາຫັດແນ່ນອນອີ່ຫລີ... ແມ່ນບໍ່???

ຄົນຊະນິດນີ້ຈະປະສົບຄວາມສຳເລັດຫລືຄວາມກ້າວໜ້າໄດ້ຢ່າງໃດ?

**ກົງກັນຂ້າມ ເຮົາຄວນຈະດຸໝັ່ນເໝືອນດັ່ງມົດ!**

ດັ່ງທີ່ໜັງສືສຸພາສິດພັນລະນາໄວ້ວ່າ

**"ຄົນກຽດຄ້ານ**ເອີຍ ໄປຫາມົດໄປ໋

ພິເຄາະເບິ່ງທາງຂອງມັນ ແລະຈົ່ງສລາດ

ໂດຍປາສຈາກຫົວໜ້າ ເຈົ້າໜ້າທີ່ຫລືຜູ້ປົກຄອງ

ມັນຕຽມອາຫານຂອງມັນໄວ້ໃນຣະດູແລ້ງ

ແລະສະສົມຂອງກິນຂອງມັນໃນຣະດູກ່ຽວ" (ສພສ 6:6-8)

ດັ່ງນັ້ນບໍ່ວ່າເຮົາຈະຢູ່ລຳພັງຄົນດຽວ ຫລືຢູ່ເປັນໝູ່ຄນະ

**ຂໍໃຫ້ເຮົາດຸຫມັ່ນເໝືອນດັ່ງມົດ**

**ເພາະຖ້າເຮັດເຊັ່ນນີ້ແລ້ວ**

**ຮັບຮອງໄດ້ເລີຍວ່າເຮົາຈະບໍ່ມີວັນອຶດຕາຍ!**

**ຂ້າພະເຈົ້າເອົາຫົວເປັນປະກັນ!**

**ທ່ານເຫັນດ້ວຍກັນບໍ່?**

# "ງານທີ່ຍາກທີ່ສຸດໃນຊີວິດຂອງມະນຸດເຮົາ

ມີ 3 ປະການ ຄື

1. ເກັບຄວາມລັບ
2. ລືມສິ່ງທີ່ເຈັບປວດ
3. ໃຊ້ເວລາຫວ່າງໃຫ້ເປັນປໂຍດ!"

## 5. ງານທີ່ຍາກທີ່ສຸດ!

**ບໍ່ຮູ້ເໝືອນກັນວ່າ ງານທີ່ຍາກທີ່ສຸດໃນຊີວິດຂອງທ່ານຄືຫຍັງ?**

**"ການເກັບຄວາມລັບ"** ເປັນງານທີ່ຍາກເກີນໄປສຳລັບທ່ານບໍ່?

ອັນທີ່ຈິງເຮົາກໍຮູ້ກັນຢູ່ແລ້ວວ່າ **"ຄວາມລັບ"** ບໍ່ມີໃນໂລກ!

ການຈະປິດບັງ **"ຄວາມຈິງ"** ຈາກມະນຸດນັບເປັນເຣື່ອງທີ່ຍາກ!

ແຕ່ປິດບັງ **"ຄວາມຈິງ"** ຈາກ**ພຣະເຈົ້າ**ຍິ່ງເປັນເຣື່ອງທີ່ເປັນໄປບໍ່ໄດ້

ຄວາມລັບຈຶ່ງບໍ່ມີຢູ່ ບໍ່ວ່າໃນ**ໂລກ**ນີ້ຫລືໃນ**ສວັນ!**

ການເກັບຮັກສາຄວາມລັບຈຶ່ງເປັນເຣື່ອງຍາກແທ້ງປະການນຶ່ງ

ການດຳເນີນຊີວິດທີ່ປອດໃສບໍ່ມີຄວາມລັບໃດໆ

ຈຶ່ງເປັນນະໂຍບາຍແຫ່ງຊີວິດທີ່ດີທີ່ສຸດ!

ສິ່ງທີ່ຍາກອັນດັບຕໍ່ໄປກໍຄື **"ການລືມສິ່ງທີ່ເຈັບປວດຮວດຮ້າວ!"**

ບາງຄົນເຈັບແລ້ວຈຳ ແຕ່ມີໜ້ອຍຄົນທີ່ເປັນເຊັ່ນນັ້ນ

ເພາະສ່ວນໃຫຍ່ຄົນເຮົາມັກເປັນປະເພດ**ເຈັບແລ້ວບໍ່ຈຳ!**

ໃນຂະນະທີ່ບາງຄົນອາດຈະຈຳ ແຕ່ຈຳໄດ້ບໍ່ດົນກໍລືມໄປອີກ!

ທີ່ເຮົາເວົ້າເຖິງຂ້າງຕົ້ນນີ້ຄື

ຄວາມ**ເຈັບ**ຫລືຄວາມ**ປວດຮ້າວ**ທີ່ເກີດຈາກການກະທຳຂອງເຮົາ!

ຄວາມປວດຮ້າວປະເພດນີ້ລືມໄດ້ງ່າຍກວ່າຄວາມປວດຮ້າວ

ຊຶ່ງເກີດຈາກ**ຄົນອື່ນ**ກະທຳໃຫ້ເຮົາ**ເຈັບ**ປວດຮວດຮ້າວ!

ຫລາຍຄັ້ງທີ່ເຮົາທໍ້ໃຈຫລືໝົດກຳລັງໃຈ

ເພາະຄົນທີ່ເຮົາໄວ້ວາງໃຈກະທຳຕໍ່ເຮົາ!

ອາດຈະດ້ວຍຄຳເວົ້າຫລືການກະທຳຊຶ່ງເຮົາຍາກທີ່ຈະລືມ!

ແຕ່ຫາກວ່າ ການ**ຈົດຈຳ**ສິ່ງປວດຮ້າວດັ່ງກ່າວນັ້ນ

ຈະບໍ່ຊ່ອຍເຮັດໃຫ້ເຮົາມີ**ຄວາມສຸກ**ເລີຍ!

ການລືມເຖິງຈະຍາກ ແຕ່ກໍຄຸ້ມຄ່າກວ່າ**ການຈົດຈຳ**

ແມ່ນບໍ່ທ່ານ?

ແລະເຮົາສາມາດຈະລືມເລືອນຄວາມປວດຮ້າວນີ້ໄດ້

ໂດຍການທຳງານທີ່ຍາກທີ່ສຸດອີກປະການນຶ່ງ ນັ້ນຄື

**"ການຮູ້ຈັກໃຊ້ເວລາຫວ່າງໃຫ້ເປັນປໂຍດ"!**

ການພະຍາຍາມຈະລືມບາງສິ່ງນັ້ນແທບເປັນໄປບໍ່ໄດ້!

ຍິ່ງເຮົາພະຍາຍາມລືມສິ່ງໃດ

ເຮົາຈະຍິ່ງຈຳສິ່ງນັ້ນໄດ້ແຈ້ງຊັດຫລາຍຍິ່ງຂຶ້ນ

ວິທີການຮັບມືທີ່ດີທີ່ສຸດກັບ**ຄວາມຊົງຈຳທີ່ບໍ່ດີ** ກໍຄື

ຫາສິ່ງທີ່ມີຄຸນຄ່າແລະມີປໂຍດເຮັດຢູ່ເລື້ອຍໆ!

ໃຫ້ເຮົາໃຊ້ເວລາທີ່ເຮົາມີ ໂດຍສະເພາະຢ່າງຍິ່ງໃນເວລາຫວ່າງ

ເຮັດສິ່ງທີ່ດີມີຄ່າຄູ່ຄວນຕໍ່ການຈົດຈຳ

ເຮັດອັນນຶ່ງທັບຊ້ອນອັນສອງ ແບບນີ້ໄປເລື້ອຍໆ

ເປັນລະຍະເວລາດົນພໍສົມຄວນ!

ໃນບໍ່ຊ້າ ຄວາມຊົງຈຳຂອງເຮົາຈະເຫລືອແຕ່ສິ່ງດີໆ ທີ່ທັບຊ້ອນກັນຂຶ້ນ

ຈົນເຖິງຄວາມຈຳໃນເຣື່ອງຄວາມປວດຮ້າວຫລືສິ່ງຊົ່ວຮ້າຍໃນອະດີດ

ຄ່ອຍໆເລີ້ມເລືອນລາງຈົນແທບຈະຈຳບໍ່ໄດ້

ຫລືແມ້ແຕ່ຈະຈຳໄດ້

ແຕ່ກໍບໍ່ເຫລືອອິດທິພົນໃດໆຕໍ່ເຮົາອີກຕໍ່ໄປ!

ດັ່ງນັ້ນ ເຖິງວ່າສິ່ງທີ່ກ່າວມາຂ້າງຕົ້ນຈະເປັນ**ງານທີ່ຍາກ**ທີ່ຈະເຮັດ
ແຕ່ກໍບໍ່ຍາກຈົນເກີນກວ່າທີ່ຈະເຮັດໄດ້ (1)
ຖ້າທ່ານຕັ້ງໃຈຈະເຮັດ! ເຊີນ**ລອງເບິ່ງເດີ!**

(1) ເໝືອນກັບທີ່**ໂມເຊ**ເຄີຍກ່າວເຕືອນໃຫ້**ຊາວອິສຣາເອນ** ກະທຳຕາມກົດເກນ ກົດໝາຍຂອງພຣະເຈົ້າ ທີ່ເບິ່ງເໝືອນວ່າຍາກເກີນກວ່າທີ່ຈະກະທຳໄດ້ "ເພາະວ່າພຣະບັນຍັດຊຶ່ງຂ້າພະເຈົ້າບັນຊາທ່ານໃນວັນນີ້ ສຳລັບທ່ານບໍ່ຍາກເກີນໄປແລະບໍ່ຫ່າງເຫີນເກີນໄປດ້ວຍ" (ພບຍ 30:11)

# "ຈົ່ງຮັກສາ ຄວາມປະພຶດຂອງທ່ານໃຫ້ດີ ແລ້ວຊື່ສຽງທີ່ດີຂອງທ່ານ ຈະຮັກສາຊີວິດຂອງທ່ານໄວ້!"

## 6. ຊື່ສຽງຮັກສາຊີວິດ

**ຄົນຫລາຍຄົນ**
**ກັງວົນເຣື່ອງຊື່ສຽງຂອງຕົນຫລາຍເກີນໄປ**
ຈົນເຖິງຕ້ອງເຮັດຫລາຍສິ່ງທີ່ບໍ່ສົມຄວນ!
ແລະເຮັດໃຫ້**ຊື່ສຽງ**ຂອງຕົນເອງຕ້ອງເສັຽໄປໃນທີ່ສຸດ!
ສິ່ງທີ່ຄົນມີ**ຊື່ສຽງ**ຢ້ານຫລາຍທີ່ສຸດຢ່າງນຶ່ງກໍຄື
ການ**ບແລັກແມລ໌** (Black Mail) ຄົນອື່ນ ຊຶ່ງຫມາຍເຖິງການຂູ່ເຂັນເອົາເງິນ
ໂດຍຂົ່ມຂູ່ວ່າຈະເປີດເຜີຍຄວາມລັບ
ຫລືພຶດຕິກັມບາງຢ່າງທີ່ບໍ່ຕ້ອງການຈະໃຫ້ເປີດເຜີຍ!
ບາງຄັ້ງເພາະຢ້ານເສັຽ**ຊື່ສຽງ**ທີ່ສະສົມມາ
ຄົນທີ່ມີຊື່ສຽງກໍອາດຈະຈຳໃຈຍອມຈ່າຍເງິນຫລືສິ່ງແລກປ່ຽນ
ໃຫ້ແກ່ຜູ້ຂູ່ເຂັນຕາມທີ່ຮຽກຮ້ອງມາ!
ແຕ່ຖ້າຜູ້ມີ**ຊື່ສຽງ**ດັ່ງກ່າວມີອິດທິພົນແລະມີສະມຸນບໍຣິວານຮາຍລ້ອມ
ກໍອາດຈະສັ່ງການໃຫ້ກຳຈັດຜູ້ຂູ່ເຂັນກໍເປັນໄດ້!
ເມື່ອມີເຣື່ອງຣາວເກີດຂຶ້ນ ແລະຄວາມຈິງເປີດເຜີຍ
ຜູ້ມີ**ຊື່ສຽງ**ນັ້ນອາດຖືກຈັບກຸມ ແລະ**ຊື່ສຽງ**ອາດມົວໝອງລົງ
ຈົນໝົດຄວາມໜ້າເຊື່ອຖືຫລືຄວາມໜ້າສັດທາກໍເປັນໄດ້!
ດັ່ງນັ້ນຢ່າໃຫ້ເຮົາປະພຶດຕົວທີ່ດ່າງພ້ອຍຫລືມີມົນທິນ
ເພາະຖ້າເຮົາບໍ່ໄດ້ເຮັດສິ່ງໃດທີ່ໜ້າລະອາຍ
ເຮົາຍ່ອມບໍ່ມີ **"ຄວາມລັບ"** ໃດໃຫ້ຜູ້ອື່ນ **"ບແລັກແມລ໌"!**
ແລະຫາກເຮົາມີຊີວິດທີ່ສັດຊື່ແລະດີງາມ
ກໍບໍ່ຕ້ອງກັງວົນວ່າໃຜຈະນິນທາວ່າຮ້າຍຫລືເປັນພະຍານເທັດໃສ່ຮ້າຍ

ເຮົາໃຫ້ມົວໝອງ ເພາະຈະບໍ່ມີຜູ້ໃດເຊື່ອຄຳກ່າວຫາດັ່ງກ່າວນັ້ນ!

**ເພາະຄວາມຈິງກໍຄືຄວາມຈິງຢູ່ນັ້ນເອງ!**

ຖ້າເຮົາບໍ່ໄດ້ເຮັດຜິດເຮັດຊົ່ວ ພິສູດກັນຫລາຍເທື່ອຫລາຍທີ

ກໍຕ້ອງອອກມາວ່າເຮົາບໍ່ໄດ້ເຮັດຊົ່ວ!

ຖ້າຕາບໃດ**ດວງຈັນ**ຍັງຄົງສ່ອງແສງຢູ່

ບໍ່ວ່າໝາຈະເຫົ່າ**ດວງຈັນ**ນັ້ນຢ່າງໃດ

**ດວງຈັນ**ກໍຍັງຄົງເປັນ**ດວງຈັນ**ຕລອດໄປ!

ດັ່ງນັ້ນຈົ່ງຮັກສາຊີວິດແລະຄວາມປະພຶດຂອງທ່ານໄວ້ໃຫ້ດີ

ແລ້ວຊື່ສຽງທີ່ດີຂອງທ່ານຈະປົກປ້ອງຄຸ້ມຄອງຊີວິດຂອງທ່ານ!

2000 ປີກ່ອນ ທ່ານເປໂຕຜູ້ຍິ່ງໃຫຍ່ ໄດ້ກ່າວອັມມະຕະວາຈາໄວ້ວ່າ

**"ຈົ່ງຮັກສາຄວາມປະພຶດອັນດີຂອງທ່ານໄວ້..**

**ເພື່ອວ່າເມື່ອມີຄົນຕິຕຽນທ່ານວ່າປະພຶດຊົ່ວ**

**ເຂົາຈະໄດ້ເຫັນການດີຂອງທ່ານ!.."** (1 ປຕ 2:12)

**ວັນນີ້ ຢ່າທໍ້ຖອຍໃຈ**

**ຖ້າມີຜູ້ໃດໃສ່ຮ້າຍທ່ານຫລືກ່າວເທັດກ່ຽວກັບຕົວທ່ານ**

**ຂໍໃຫ້ຮັກສາຄວາມປະພຶດອັນດີໄວ້**

**ມັນຈະກາຍເປັນເກາະປ້ອງກັນຊີວິດຂອງທ່ານໄວ້!**

ທ່ານເຫັນດ້ວຍຫລືບໍ່?

## "ຄຸນນະພາບຂອງຄົນ ແທກກັນທີ່ວ່າ ເຂົາສາມາດອົດທົນຕໍ່ ຄວາມກົດດັນໄດ້ດົນປານໃດ ກ່ອນທີ່ເຂົາຈະໝົດກຳລັງໃຈ!"

## 7. ຄຸນນະພາບຂອງທ່ານ!

**ຜູ້ໃດກໍຢາກເປັນຄົນທີ່ມີຄຸນນະພາບ**

ຮ່ວມທັງຕົວຂອງທ່ານດ້ວຍ ແມ່ນບໍ່?

ບາງຄົນເຖິງກັບປັກໃຈເຊື່ອຢ່າງໝັ້ນໃຈວ່າຕົນເອງມີຄຸນນະພາບ

ແຕ່ຈະຈິງຫລືບໍ່ນັ້ນເປັນອີກເຣື່ອງນຶ່ງ!

ຄຳວ່າ **"ຄຸນນະພາບ"** ຫມາຍເຖິງ **"ລັກສະນະຄວາມດີ**

**ລັກສະນະປະຈຳຕົວຂອງບຸກຄົນ ຫລືສິ່ງຂອງ"**

**ຄົນທີ່ມີຄຸນນະພາບ** ກໍຄື ຄົນທີ່ມີລັກສະນະຂອງ**ຄວາມດີ**ໃນຕົວເອງ!

ຄົນທີ່ບໍ່ມີ**ລັກສະນະ**ທີ່ດີໃນຊີວິດ

ຍ່ອມບໍ່ມີສິດເອີ້ນຕົນເອງວ່າມີຄຸນນະພາບ!

ແລ້ວລັກສະນະທີ່ **"ດີ"** ທີ່ວ່າ ໝາຍຄວາມວ່າຢ່າງໃດ?

ໃນວັຈນານຸກົມ ໄດ້ອະທິບາຍວ່າ

**"ດີ"** ໝາຍເຖິງ **"ມີລັກສະນະທີ່ເປັນໄປໃນທາງທີ່ຕ້ອງການ**

**ເປັນໜ້າປາຖນາ ໜ້າພໍໃຈ!"**

ແຕ່ຄົນມີ**ຄຸນນະພາບ**ໃນບ່ອນນຶ່ງ

ອາດບໍ່ແມ່ນຄົນມີຄຸນນະພາບໃນອີກບ່ອນນຶ່ງ!

ເພາະສະຖານທີ່ທັງສອງແຫ່ງອາດມີຄວາມຕ້ອງການຄົນງານນັ້ນໆ

ແຕກຕ່າງກັນຕາມລັກສະນະຂອງວຽກງານ!

ຢ່າງເຊັ່ນ ໃນວຽກງານແບບນຶ່ງຕ້ອງການຄົນງານທີ່ມີຄວາມ**ແມ່ນຢໍາເດັດດ່ຽວ**

ແລະເຂັ້ມງວດໃນເຣື່ອງ**ເວລາ**

ແຕ່ພໍຄົນງນັ້ນໄປທໍາງານໃນທີ່ອີກແຫ່ງນຶ່ງ

ທີ່ຕ້ອງການຄວາມຍືດຍາວໃນເຣື່ອງ**ເວລາສູງ**

ຜົນຮັບຈະເປັນແບບໃດ ຄິດວ່າທ່ານຄົງຈະເດົາໄດ້ແມ່ນບໍ?

ຢ່າງໃດກໍດີ ບໍ່ວ່າຈະພົບກັບສະຖານະການໃດໆ

ທັງທີ່ໄດ້ຄາດຫວັງໄວ້ ຫລືຄາດຄິດບໍ່ເຖິງກໍຕາມ

**ລັກສະນະຂອງຄົນທີ່ດີມີຄຸນນະພາບ** ກໍຄື

**ຄົນທີ່ສາມາດຢືນຢັດ**

**ແລະປັບຕົວເອງໃຫ້ຮັບມືກັບສະພາບການທີ່ບໍ່ໜ້າປາຖນານັ້ນ**

**ໄດ້ຢ່າງມີປະສິດທິພາບສເມີ**

ເຖິງແມ້ວ່າຈະຕ້ອງໃຊ້ຄວາມອົດທົນ

ຫລືຄວາມພາກພຽນຢ່າງຫລວງຫລາຍກໍຕາມ

ດ້ວຍເຫດນີ້ເອງ

ຄົນໃດຄົນນຶ່ງທີ່ສາມາດ**ອົດທົນ**ຕໍ່ຄວາມ**ກົດດັນ**

ຫລື**ປັນຫາ**ໄດ້ຢ່າງໜ້າໜັກແໜ້ນໝັ້ນຄົງ

ອີກທັງ**ກໍ່ໃຫ້ເກີດຜົນຜລິດ**ໃນການງານທີ່ເຮັດໄດ້ຢ່າງຕໍ່ເນື່ອງ

ໂດຍບໍ່ໝົດ**ກໍາລັງໃຈ**

ກໍນັບໄດ້ວ່າຄົນງນັ້ນເປັນຄົນດີທີ່ມີ**ຄຸນນະພາບ**ຢ່າງແທ້ຈິງ!

ວັນນີ້ຂໍໃຫ້ເຮົາປຸກໃຈຊຶ່ງກັນແລະກັນໃຫ້ເປັນ**ຄົນດີ** ແລະມີຄຸນນະພາບ

ຫວັງວ່າທ່ານຈະເປັນນຶ່ງ

ໃນຖ້າມກາງ**ຄົນດີມີຄຸນນະພາບ**ໃນບ່ອນທີ່ທ່ານຢູ່!

ຈະເປັນໄປໄດ້ຫລືບໍ່?

**"ແລະຂໍໃຫ້ເຮົາພິຈາຣະນາເບິ່ງວ່າຈະເຮັດຢ່າງໃດ**

**ຈຶ່ງຈະປຸກໃຈຊຶ່ງກັນແລະກັນ**

**ໃຫ້ມີຄວາມຮັກແລະເຮັດຄວາມດີ"** ຮຣ 10:24

## “ວິທີການທີ່ດີທີ່ສຸດໃນການລືມບັນຫາຂອງຕົວທ່ານເອງ ກໍຄື ການຊ່ອຍແກ້ປັນຫາໃຫ້ຜູ້ອື່ນ!”

## 8. ລືມຕົວເອງ!

**ປົກກະຕິ** ບົດກະວີທີ່ວ່າ **“ລືມຕົວ”**
ມັກເປັນຄຳທີ່ມີຄວາມໝາຍໃນທາງລົບ!
ເພາະໝາຍຄວາມວ່າ
**“ຂາດຄວາມຮູ້ສຶກຕົວ ຂາດຄວາມຮູ້ສຶກຜິດຊອບ**
**ຂາດຄວາມລະນຶກເຖິງຖານະເດີມຂອງຕົນ!”**
ຄົນທີ່ມີລັກສະນະ **“ລືມຕົວ”** ດັ່ງກ່າວ
ມັກຈະເປັນທີ່ລັງກຽດຢຽດຫຍາມຂອງຄົນຮອບຂ້າງ
ເພາະເຂົ້າທຳນອງ **“ງົວລືມຕີນ!”**
ແຕ່ບົດກະວີທີ່ວ່າ **“ລືມຕົວເອງ”** ກັບມີຄວາມໝາຍໄປໃນທາງບວກ!
ເພາະໝາຍເຖິງ ການຮູ້ຈັກ **“ລົດ - ລະ”** ແລະບໍ່ຕິດຍຶດກັບຕົວເອງ!
ຫລືຮູ້ຈັກມອງຂ້າມ **“ອັດຕາ”** ຂອງຕົວເອງໄປ!
ຄົນເຮົາ.. ເມື່ອບໍ່ຕິດຍຶດຫລືກັງວົນກ່ຽວກັບ **“ຜົນປະໂຍດ”** ຫລື
**“ສັກສີ”** ຂອງຕົວເອງຫລາຍເກີນໄປກໍຈະບໍ່ທຸກຫລາຍ!
ຄົນຊະນິດນີ້ຈະບໍ່ຄ່ອຍເສັຽ**ກຳລັງໃຈ**ງ່າຍໆ ກັບບັນຫາໃດໆ!
ເພາະເຂົາຮູ້ຈັກປ່ອຍວາງ ບໍ່ຮູ້ສຶກເສັຽໜ້າເສັຽກຽດຫຍັງ
ຖ້າເປັນຝ່າຍຜ່າຍແພ້ ຫລືບໍ່ປະສົບຄວາມສຳເຣັດ
ຢ່າງທີ່ຄົນອື່ນຄາດຫວັງ!
ຄົນຊະນິດນີ້ບໍ່ຄ່ອຍທຳຮ້າຍຕົວເອງ
ເມື່ອພາດຫວັງໃນສິ່ງທີ່ຕົນຫລືຄົນຮອບຂ້າງຄາດຫວັງ!
ຄົນຊະນິດນີ້ຈະຮູ້ຈັກຈັດການກັບບັນຫາຂອງຕົນເອງ
ໂດຍການ **“ວາງ”** ບັນຫາເຫລົ່ານັ້ນຂອງຕົນລົງ
ແລ້ວກ້າວອອກໄປຊ່ອຍ **“ແບກ”** ບັນຫາຂອງຜູ້ອື່ນ!
**“ຈົ່ງຊ່ອຍຮັບພາລະຂອງກັນແລະກັນ ທ່ານຈຶ່ງຈະໄດ້ປະຕິບັດຕາມພຣະບັນຍັດຂອງພຣະຄຣິດ”** (ຄລຕ 6:2)
ແລະການຊ່ອຍຜູ້ອື່ນແກ້ບັນຫານີ້
ຈະເປັນຢາຮັກສາທີ່ດີທີ່ສຸດສຳລັບການແກ້ບັນຫາຂອງເຮົາ!
**ໂລກນີ້ຊ່າງແປກແທ້ໆໜໍ!!!**
ຍິ່ງເຮົາພະຍາຍາມຈະລືມບັນຫາຂອງເຮົາ
ມັນກັບເຮັດໃຫ້ເຮົາຍິ່ງຈື່ຈຳບັນຫານັ້ນໄດ້ແມ່ນຢຳຍິ່ງຂຶ້ນ!

ແຕ່ການປະຖິ້ມບັນຫາຂອງເຮົາ ແລ້ວໄປ**ຊ່ອຍຜູ້ອື່ນ**ແກ້ບັນຫາຂອງເຮົາ

**"ຈົ່ງເຫັນອົກເຫັນໃຈຊ່ອຍໄພ່ພົນຂອງພຣະເຈົ້າເມື່ອເຂົາຂັດສົນ**

**ຈົ່ງມີນ້ຳໃຈອັທຍາສັຍໄມຕຣີ"** (ຣມ 12:13)

ສິ່ງນີ້ກັບຈະເຮັດໃຫ້ເຮົາລືມບັນຫາຂອງຕົນເອງ

ໄດ້ຢ່າງໜ້າປລາດ!

**ດັ່ງນັ້ນ ເຖິງວັນນີ້ທ່ານຈະມີບັນຫາຫລືມີຄວາມທຸກ ກໍຈົ່ງຢ່າທໍ້ຖອຍໃຈ!**

**ຢ່າມົວແຕ່ຈົມປັກຢູ່ກັບບັນຫາຂອງທ່ານ!**

**ຈົ່ງຫັນໄປເບິ່ງຄົນຮອບຂ້າງຂອງທ່ານ**

**ແລ້ວກ້າວອອກໄປຂ້າງໜ້າ**

**ຊ່ອຍເຂົາແກ້ບັນຫາທີ່ຮຸມເຮົ້າຊີວິດຂອງເຂົາ**

**ແລ້ວທ່ານຈະຮູ້ສຶກດີຂຶ້ນຢ່າງເຫລືອເຊື່ອ**

***ຫາກບໍ່ເຊື່ອ ເຊີນທ່ານລອງເຮັດເບິ່ງ!!!***

## ການຍົກໂທດ ຄື ນ້ຳຫອມ ທີ່ກັ່ນມາຈາກດອກໄມ້ ແລະຖືກໃຊ້ເປັນພອນແກ່ຕີນທີ່ຢຽບຍໍ່າມັນ!"

# 9. ນ້ຳຫອມຈາກສົ້ນຕີນ

**ຕີນເປັນອະວັຍວະທີ່ຕໍ່າໃນທັສນະຂອງຄົນທົ່ວໄປ**

ຄົນທົ່ວໄປບໍ່ມັກໃຫ້ຄົນອື່ນໃຊ້ຕີນກັບອະວັຍວະສ່ວນໃດຂອງຕົນ!

ການໃຊ້ຕີນຊີ້ມາທີ່ຕົວຂອງເຮົານັບເປັນສິ່ງທີ່ຮັບບໍ່ໄດ້ເລີຍ!

ແຕ່ເຮົາກໍຄົງປະຕິເສດຄວາມຈິງບໍ່ໄດ້ວ່າ

**"ຕີນ" ເປັນອະວັຍວະທີ່ມີປໂຍດຕໍ່ເຮົາຢ່າງມະຫາສານ!**

ເພາະຖ້າບໍ່ມີຕີນ ເຮົາກໍຢືນບໍ່ໄດ້!

ຫລືຖ້າບໍ່ມີຕີນເຮົາກໍຍ່າງໄປມາບໍ່ໄດ້!

ເຫດສັນນັ້ນ ກະເສດຕະກອນຈໍານວນຫລວງຫລາຍໃຊ້ຕີນໃນການສ້າງຜົນຜລິດ!

ຢ່າງເຊັ່ນ ໃນທຸຣະກິດການເຮັດເຫລົ້າອະງຸ່ນ

ນັບແຕ່ບູຮານນະການມາແລ້ວ

ກະເສດຕະກອນຈະໃຊ້ຕີນ**ຢໍ່າອະງຸ່ນ**ໃນບໍ່ຢໍ່າອະງຸ່ນ

"ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເບິ່ງແມ໋ ວັນເວລາຈະມາເຖິງ

ເມື່ອຄົນທີ່ໄຖຈະທັນຄົນທີ່ກ່ຽວ

ແລະຄົນທີ່ຢໍ່າຜົນອະງຸ່ນຈະທັນຄົນທີ່ຫວ່ານເມັດອະງຸ່ນ

ຈະມີນ້ຳອະງຸ່ນຍ້ອຍລົງຈາກພູເຂົາ

ເນີນເຂົາທັງສິ້ນຈະລະລາຍໄປ" (ອມ 9:13)

ຈຶ່ງໄດ້**ນ້ຳອະງຸ່ນ**ເຂັ້ມຂົ້ນອອກມາ

ກ່ອນຈະນຳໄປບັນຈຸຫລືປ່ຽນສະພາບເປັນຜລິດຕະພັນສາຣະພັດນາມ!

ເວົ້າງ່າຍໆກໍຄື

ໃນອະດີດ ຖ້າບໍ່ມີຕີນ **ກໍບໍ່ມີນ້ຳອະງຸ່ນ**ມາໃຫ້ດື່ມ!

ຂ້າພະເຈົ້າເອງກໍບໍ່ຮູ້ເໝືອນກັນວ່າ

ໃນວິທີການຜລິດ**ນ້ຳຫອມ** ໃນສະໄຫມບູຮານນັ້ນ

ເຂົ້າໃຊ້ຕີນຢຽບຢ່ຳດອກ ໃບ ຫລື ຜິນຂອງພຶດພັນນາໆຊະນິດ

ເພື່ອຈະໄດ້ຫົວເຊື້ອຂອງນ້ຳຫອມອອກມາເຊັ່ນດຽວກັນຫລືບໍ່?

ຖ້າເປັນຈິງຕາມນັ້ນ **ນ້ຳຫອມ**ທີ່ກັ່ນອອກມາໄດ້ **ກໍຄື ພອນ**

ທີ່ກັບໄປສູ່ຕີນທີ່ຢຽບຢ່ຳເຫລົ່າດອກໄມ້ນັ້ນເອງ!

ຫາກຊີວິດຂອງເຮົາໃນວັນນີ້!

ເປັນເໝືອນກັບ**ດອກໄມ້**ທີ່ຖືກຢຽບຢ່ຳ ຖືກທຳຮ້າຍ

ບໍ່ວ່າຈະທາງກາຍຫລືທາງຈິດໃຈ

ແຕ່ໃນເຫດການເຫລົ່ານັ້ນ

ກັບເຮັດໃຫ້ເຮົາ**ຈະເຣີນ**ໃຫຍ່ຂຶ້ນໃນຝ່າຍຈິດວິນຍານ

ຄື ເຮັດໃຫ້ເຮົາ**ຖ່ອມຕົວຖ່ອມໃຈ**ຫລາຍຂຶ້ນ

ຫລື ເຮັດໃຫ້ເຮົາ**ເຂົ້າໃຈ ແລະເຫັນໃຈ**ຜູ້ອື່ນຫລາຍຂຶ້ນ

ຫລື ເຮັດໃຫ້ເຮົາຮູ້ຈັກ**ຄຸນຄ່າຊີວິດ**ຂອງເຮົາຫລາຍຂຶ້ນ ແລະອື່ນໆ

ສິ່ງເຫລົ່ານີ້ກໍຖືໄດ້ວ່າເປັນ**ພອນ**ຕໍ່ຊີວິດຂອງເຮົາ

ອາການນຶ່ງທີ່ພໍຈະບົ່ງບອກໄດ້ວ່າ

ເຮົາກຳລັງ**ໃຫຍ່ຂຶ້ນ** ຫລືມີວຸຕິພາວະທາງຈິດວິນຍານແລ້ວ

ກໍຄື ການທີ່ເຮົາຮູ້ຈັກ**ໃຫ້ອະພັຍ**ແກ່ຜູ້ທີ່ເຮັດສິ່ງຊົ່ວຮ້າຍຕໍ່ເຮົາ!

ດັ່ງນັ້ນການຍົກໂທດໃຫ້ແກ່ຜູ້ທີ່ກະທຳຜິດຕໍ່ເຮົາ

ແລະແຖມດ້ວຍການອວຍພອນໃຫ້ແກ່ເຂົາ

ຈຶ່ງເປັນເໝືອນດັ່ງນ້ຳຫອມທີ່ກັ່ນມາຈາກດອກໄມ້

ເພື່ອຈະເປັນພອນແກ່ຕີນທີ່ຢຽບຢ່ຳມັນ!

**ແມ່ນບໍ່! ໃນເມື່ອເຮົາໄດ້ຮັບພອນເພາະຕີນຂອງຜູ້ອື່ນ**

**ການຍົກໂທດໃຫ້ແກ່ເຂົານີ້ຍັງຖືວ່າໜ້ອຍເກີນໄປ!**

**ອັນທີ່ຈິງແລ້ວ ເຮົາຄວນຈະຂອບໃຈເຂົາດ້ວຍຊ້ຳໄປ...**

**ແມ່ນຫລືບໍ່?**

# ການໃຫ້ອະພັຍ ກໍເໝືອນກັບ ການປ່ອຍນັກໂທດອອກຈາກທີ່ຄຸມຂັງແລ້ວພົບວ່ານັກໂທດຄົນນັ້ນຄື ຕົວທ່ານເອງ!

## 10. ປ່ອຍຕົວທ່ານເອງ!

**ທ່ານເຄີຍຮູ້ສຶກຂື່ມຂືນ ຄຽດແຄ້ນ**

**ຈົນກິນບໍ່ໄດ້ນອນບໍ່ຫລັບຫລືບໍ?**

ອາການດັ່ງກ່າວເປັນອາການຂອງຄົນທີ່ຍັງບໍ່**ຍົກ**ໂທດ

ຫລືບໍ່ຍອມໃຫ້**ອະພັຍ**ແກ່ຜູ້ທີ່ກະທຳຜິດຕໍ່ຕົວເຂົາ!

**ຈິດໃຈຂອງບຸກຄົນທີ່ບໍ່ອາດໃຫ້ອະພັຍຕໍ່ຄູ່ກໍຣະນີນີ້**

**ເປັນຈິດໃຈທີ່ຮ້ອນຣົນເໝືອນດັ່ງຖືກໄຟຈາກໂລກັນເຜົາຜານ**

ຊະນິດທີ່ບໍ່ມີ**ນ້ຳ**ຫລື**ນ້ຳຢາ**ໃດຈະລະງັບຫລືດັບເພີງນະຮົກນັ້ນໄດ້!

ຄົນທີ່ມີຈິດໃຈບໍ່ໃຫ້**ອະພັຍ**

ປຽບເໝືອນກັບຄົນທີ່ຖືກຂັງໄວ້ໃນ**ຄຸກນາຮົກ**

ທາງດຽວທີ່ຈະຫລຸດພົ້ນຈາກສະພາບອັນໜ້າອະນາດນັ້ນໄດ້

ກໍຄື ຕ້ອງ**ເປີດປະຕູໃຈ**

ລະບາຍຄວາມຮ້ອນແຮງຈາກ**ໄຟນາຮົກ**ອອກມາ!

ແລະກຸນແຈດອກດຽວເທົ່ານັ້ນທີ່ຈະເປີດ**ປະຕູ**ໃຈນີ້ໄດ້

ຄື **"ການໃຫ້ອະພັຍ"**!

ຄຳວ່າ **"ອະພັຍ"** ໝາຍຄວາມວ່າ

**"ຄວາມບໍ່ມີພັຍ ຄວາມບໍ່ຕ້ອງຢ້ານ"**

ຄົນທີ່ບໍ່ໃຫ້**ອະພັຍ**ແກ່ຜູ້ອື່ນຍອມເປັນພັຍຕໍ່ຄູ່ກໍຣະນີ!

ຫລືເປັນທີ່ໜ້າຫວາດກົວແກ່ເຂົາ!

ແຕ່ຄົນທີ່ຍອມໃຫ້**ອະພັຍ** ຄື ຄົນທີ່ຫຍິບຍື່ນ **"ຄວາມບໍ່ເປັນພັຍ"**

ຫລື **"ຄວາມບໍ່ຕ້ອງຢ້ານ"** ໃຫ້ແກ່ຄູ່ຕໍ່ສູ້!

ຊຶ່ງຈະເຮັດໃຫ້ບັນຍາກາດແຫ່ງການເປັນປໍຣະປັກສລາຍມະລາຍໄປ!

ການກະທຳເຊັ່ນນີ້ ອາດເອີ້ນໄດ້ວ່າ

**"ອະພັຍທານ"** ຫລື **ການໃຫ້ຄວາມບໍ່ມີພັຍ!**

ຖ້າທ່ານເປັນບຸກຄົນນຶ່ງທີ່ກະທຳສິ່ງທີ່ຜິດພາດໄປແລ້ວ

ບໍ່ວ່າຈະໂດຍເຈຕນາຫລືບໍ່ກໍຕາມ

ທ່ານຕ້ອງການ **ການໃຫ້ອະພັຍ**ບໍ່ແມ່ນຫລື?

ທ່ານຕ້ອງການ **"ໂອກາດ"** ທີ່ຈະເລີ້ມຕົ້ນໃໝ່ບໍ່ແມ່ນຫລື?

ແລະຖ້າຫາກທ່ານເອງຍັງຕ້ອງການເຊັ່ນນັ້ນ!

ແລ້ວຄົນອື່ນທີ່ກະທຳຜິດຕໍ່ທ່ານລະ

ເຂົາຈະບໍ່ຕ້ອງການເຊັ່ນດຽວກັນດອກຫລື?

ແນ່ນອນ! ຖ້າທ່ານໃຫ້ອະພັຍແກ່ເຂົາ

ກໍເທົ່າກັບທ່ານໄດ້ປົດປ່ອຍຕົວເອງອອກຈາກຄຸກແຫ່ງຄວາມຄຽດແຄ້ນ!

ແລະ ກຳລັງປ່ຽນສັດຕຣູຂອງທ່ານໃຫ້ກັບກາຍເປັນມິດ!

ດັ່ງທີ່ຫນັງສືສຸພາສິດຂຽນໄວ້ວ່າ

"ບຸກຄົນຜູ້ໃຫ້ອະພັຍການທໍຣະຍົດ

ກໍມຸ້ງໝັ້ນທີ່ຈະສ້າງມິດຕະພາບ!" (ສພສ 17:9)

ວັນນີ້ທ່ານພ້ອມຈະສ້າງມິດຕະພາບແລ້ວຫລືຍັງ?

**"ຈົ່ງຈາຣຶກຄວາມຜິດບາບຂອງພີ່ນ້ອງໄວ້ເທິງຫາດຊາຍ**

**ເພື່ອເມື່ອເວລາຟອງນ້ຳຊັດຂຶ້ນຝັ່ງ**

**ນ້ຳທະເລຈະກົບເກື່ອນລົບຮອຍບາບເຫລົ່ານັ້ນຫາຍໄປ**

**ແຕ່ຈົ່ງ.. ຈາຣຶກຄວາມດີຂອງເຂົາໄວ້ໃນຫົວໃຈ**

**ເພື່ອວັນເວລາຈະບໍ່ສາມາດບັ່ນທອນທຳລາຍລົງ!"**

## 11. ບາບຂອງພີ່ນ້ອງ!

**ຄົນທີ່ບໍ່ເຄີຍຜິດພາດ ຫລືບໍ່ເຄີຍເຮັດບາບເລີຍ ຄົງຫາບໍ່ມີອີກແລ້ວໃນໂລກນີ້!**

ຖ້າຈະມີກໍຄົງມີແຕ່**ພຣະເຈົ້າ**ເທົ່ານັ້ນແຫລະ!

ເພາະເຫດທີ່ມະນຸດບໍ່ສົມບູນແບບ 100%

ໂອກາດທີ່ເຂົາຈະເຮັດຜິດພາດຈຶ່ງມີຄວາມເປັນໄດ້ຕລອດເວລາ

ແລະຢ່າລືມວ່າ ທ່ານແລະພີ່ນ້ອງຍາດມິດຂອງທ່ານ

ກໍເປັນສ່ວນນຶ່ງຂອງຊຸມຊົນມະນຸດຜູ້ບໍ່ສົມບູນແບບເຊັ່ນກັນ!

ດ້ວຍເຫດນີ້ ທ່ານຄວນຈະໃຫ້ອະພັຍແລະ**ໃຫ້ໂອກາດ**ແກ່ຍາດມິດ

ໃນຍາມທີ່ເຂົາເຮັດຜິດພາດຕໍ່ທ່ານ

ເໝືອນດັ່ງທີ່ທ່ານຄົງຕ້ອງການໄດ້ຮັບການປະຕິບັດເຊັ່ນດຽວກັນ

ໃນຍາມທີ່ທ່ານເຮັດຜິດພາດບໍ່ວ່າຈະໂດຍເຈຕນາຫລືບໍ່ກໍຕາມ

ມະນຸດເຮົາມີລັກສະນະນິສັຍທີ່ແປກ!

ເວລາຜູ້ໃດເຮັດຜິດຕໍ່ເຮົາ ເຮົາມັກຈະຈຳໄດ້ຢ່າງແມ້ນຢຳ!

ແຕ່ເວລາເຮົາເຮັດຜິດຕໍ່ຄົນອື່ນ ເຮົາມັກຕ້ອງການ

ໃຫ້ເຂົາລືມ! ຫລືໃຫ້ອະພັຍແກ່ເຮົາ!

ໃນບັນດາຄຳອະທິຖານໃນໂລກນີ້

ບໍ່ມີຄຳອະທິຖານໃດທີ່ໂດ່ງດັງເທົ່າກັບ

ຄຳອະທິຖານທີ່ພຣະເຢຊູຊົງສອນທີ່ເອີ້ນວ່າ “The Lord’s Prayer”
ເພາະໃນຮອບ 2000 ປີທີ່ຜ່ານມາ
ມີນັກປະພັນຫລືຜູ້ຊ່ຽວຊານຊຶ່ງຢູ່ໃນຫລາຍສາຂາອາຊີພ
ນຳໄປແຕ່ງເປັນ**ຫນັງສື**ພາຍໃຕ້ຊື່ນັບບໍ່ຖ້ວນ
ອີກທັງຍັງມີຜູ້ນຳເອົາຄຳອະທິຖານດັ່ງກ່າວໄປໃສ່ທຳນອງ**ເພງ**
ຈົນກາຍເປັນເພງທີ່ອບຮິດຕິດບິນໄປທົ່ວໂລກ!
ໃນບົດອະທິຖານນັ້ນ
ມີຂໍ້ຄວາມຕອນນຶ່ງທີ່ກິນໃຈຫລາຍຊຶ່ງກ່າວວ່າ
“ແລະ ຂໍຊົງໂຜດ**ຍົກໂທດ**ໃຫ້ແກ່ຂ້າພຣະອົງ
ເໝືອນຂ້າພຣະອົງ**ຍົກໂທດ**ໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ” (ມທ 6:12)
ດັ່ງນັ້ນຖ້າທ່ານຕ້ອງການໃຫ້ພຣະຜູ້ເປັນເຈົ້າຍົກໂທດບາບຜິດຂອງທ່ານ
ທ່ານກໍຄວນຈະເຮັດຕາມກະຕິກາຂອງສວັນ
ນັ້ນຄື ທ່ານຕ້ອງ**ຍົກໂທດ**ໃຫ້ແກ່ຄົນທີ່ເຮັດຜິດຕໍ່ທ່ານກ່ອນ!
ກອນສຸດທ້າຍບົດຕໍ່ໄປນີ້ ມີຄະຕິທີ່ຫນ້າປະຕິບັດຕາມທີ່ວ່າ:
**“ລືຂີດບາບ ເອົາໄວ້ ເທິງຊາຍຫາດ ຄື້ນຈະສາດ ເລືອນລົບ ກົບເກື່ອນຫາຍ**
**ແຕ່ຄວາມດີ ສະລັກໃຈ ບໍ່ວາງວາຍ ການເວລາ ທຳລາຍ ບໍ່ໄດ້ເລີຍ!”**

# “ຫົວໃຈຈະມີຄວາມສຸກຫລາຍທີ່ສຸດເມື່ອມັນເຕັ້ນເພື່ອຜູ້ອື່ນ!”

## 12. ຫົວໃຈເຕັ້ນເພື່ອຜູ້ອື່ນ

**ເມື່ອໃດທີ່ຫົວໃຈທ່ານຢຸດເຕັ້ນ**
**ນັ້ນກໍເທົ່າກັບໂອກາດທີ່ຈະເຮັດດີໝົດລົງ!**
ໃນທຳນອງດຽວກັນ ເມື່ອຫົວໃຈຂອງທ່ານຢຸດເຕັ້ນ
ໂອກາດທີ່ທ່ານຈະທຳ**ຊົ່ວ**ກໍໝົດລົງເຊັ່ນກັນ!
ແລະຖ້າ**ສວັນ** ແລະ**ນາຣົກ**ມີຈິງຢ່າງທີ່ຄົນສ່ວນໃຫຍ່ເຊື່ອ!
ທ່ານກໍຈະຕ້ອງພະເຊີນກັບການພິພາກສາ!
ແລະກໍຮູ້ງກັນດີຢູ່ແລ້ວພາຍໃນມະໂນທັມຂອງເຮົາເອງວ່າ
ການທີ່ຄົນ**ເຫັນແກ່ຕົວ**ຫລືເຮັດແຕ່**ຄວາມຊົ່ວ**ຈະໄດ້ເຂົ້າສວັນນັ້ນ
ຊ່າງເປັນເຮື່ອງທີ່ຂັດແຍ້ງໃນຫລັກການເປັນຢ່າງຍິ່ງ!
ຄົງຈະມີແຕ່**ຄົນທີ່ບໍ່ເຫັນແກ່ຕົວ**ແລະ**ທຳດີຕໍ່ຜູ້ອື່ນ**ເທົ່ານັ້ນ
ທີ່ສົມຄວນໄດ້ເຂົ້າສວັນ!
ຄຳຖາມກໍຄືວ່າ
ຄົນທີ່ມີບັນຫາຊີວິດ ຫລືຄົນທີ່ມີຄວາມທຸກລຳບາກໃນຊີວິດ
ສາມາດ**ເຮັດດີຕໍ່ຜູ້ອື່ນ** ໂດຍ**ບໍ່ເຫັນແກ່ຕົວ**ໄດ້ບໍ່?

ຄຳຕອບກໍຄົງຈະເປັນທີ່ຮູ້ຢູ່ແກ່ໃຈຂອງເຮົາຢູ່ແລ້ວ ແມ່ນຫລືບໍ?

ຢ່າງໃດກໍຕາມ..

ບໍ່ວ່າເຮົາຈະປະສົບກັບຄວາມເຈັບປວດ

ຫລື ຊົມຊື່ນເພາະສາເຫດໃດໃນຊີວິດ

ຢ່າໃຫ້**ຫົວໃຈຂອງເຮົາເຕັ້ນແຮງ**

ດ້ວຍຄວາມອາຄາດຄຽດແຄ້ນ

ຫລືຢ່າໃຫ້**ຫົວ**ໃຈຂອງເຮົາເຕັ້ນຄ່ອຍໆເລື້ອຍໆ

ເພາະ**ໝົດກຳລັງ**ໃຈໃນການຜະເຊີນກັບວິກິຕການຂອງຊີວິດ!

**ແຕ່ໃຫ້ຫົວໃຈຂອງເຮົາເຕັ້ນ**ຢ່າງມີ**ຄວາມສຸກ**

ເພາະຫົວໃຈຂອງເຮົານັ້ນ**ເຕັ້ນ**ເພື່ອ**ຜູ້ອື່ນ!**

ວິຣະບຸຣຸດແລະວິຣະສັຕຣີທຸກຍຸກທຸກສະໄໝ

ໄດ້ຮັບການຍົກຍ້ອງແລະບູຊາ

ເພາະຫົວໃຈທີ່**ເຕັ້ນ**ເພື່ອ**ຜູ້ອື່ນ!**

ແທ້ຈິງແລ້ວ ພວກເຂົາບໍ່ພຽງແຕ່**ມີຫົວໃຈທີ່ເຕັ້ນ**ເພື່ອຜູ້ອື່ນເທົ່ານັ້ນ

ແຕ່ພວກເຂົາຍັງຍອມ**ໃຫ້ຫົວໃຈຢຸດເຕັ້ນ**ເພື່ອຜູ້ອື່ນດ້ວຍເຊັ່ນກັນ

ນັ້ນຄືພວກເຂົາຍອມ**ສລະຊີວິດ**ຂອງຕົນ

ເພື່ອປະເທດຊາດແລະຄົນອື່ນໆ

ອົງພຣະເຢຊູຄຣິດເອງກໍຊົງຢືນຢັນສັຈທັມຂໍ້ນີ້

ດ້ວຍພຣະຊົນຊີພແລະພຣະດຳຣັສຂອງພຣະອົງ

**"ບໍ່ມີຜູ້ໃດມີຄວາມຮັກທີ່ຍິ່ງໃຫຍ່ກວ່ານີ້**

**ຄື ການທີ່ຜູ້ນຶ່ງຜູ້ໃດຈະສລະຊີວິດຂອງຕົນ**

**ເພື່ອມິດສະຫາຍຂອງຕົນ!"** (ຢຮ 15:13)

ແລ້ວວັນນີ້ ຫົວໃຈຂອງທ່ານ**ກຳລັງເຕັ້ນເພື່ອຜູ້ໃດ?**

ແລະທ່ານພ້ອມຈະໃຫ້ຫົວໃຈຂອງທ່ານ**ຢຸດເຕັ້ນເພື່ອຜູ້ໃດແດ່?**

**ແມ່ນແລ້ວ! ຄວາມສຸກເປັນຂອງບຸກຄົນທີ່ຫົວໃຈຂອງເຂົາ**

**ບໍ່ວ່າຈະເຕັ້ນຫລືຢຸດເຕັ້ນກໍລ້ວນແລ້ວແຕ່ເພື່ອຜູ້ອື່ນທັງສິ້ນ**

**ຄົນເຊັ່ນນີ້ໜ້າຍົກຍ້ອງສັຣເສີນ**

ວ່າແຕ່ວ່າ ທ່ານເປັນນຶ່ງໃນຄົນພວກນີ້ຫລືບໍ?

"ຊື່ສຽງດີກໍປະເສີດກວ່ານ້ຳມັນຫອມຢ່າງວິເສດ

ແລະວັນຕາຍກໍດີກວ່າວັນເກີດ" ໂຊໂລໂມນ (ປຍຈ 7:1)

# III. ກຳລັງໃຈບໍ່ໄກເກີນໄຄວ່ຄວ້າເພື່ອດຳເນີນຊີວິດ
# ແລະທຳດີ!
## ມີຜູ້ໃດໃນໂລກນີ້ ທີ່ບໍ່ຕ້ອງການກຳລັງໃຈ?
## ມີຜູ້ໃດໃນຄອບຄົວຂອງທ່ານທີ່ບໍ່ຕ້ອງການກຳລັງໃຈ?

ຄວາມເປັນຈິງກໍຄື **ທຸກຄົນ**ລ້ວນແຕ່ຕ້ອງການ**ກຳລັງໃຈ!**
ບໍ່ວ່າຈະເກັ່ງກ້າຫລາຍປານໃດ ຕ່າງກໍຕ້ອງການ**ກຳລັງໃຈ!**
**ກຳລັງໃຈເປັນສິ່ງທີ່ແປກ** ແຕ່ລ້ຳຄ່າ!
ເປັນສິ່ງທີ່**ຍາກຈະຫາພົບ** ແຕ່ເມື່ອພົບແລ້ວກໍ **ຍາກທີ່ຈະຮັກສາໄວ້!**
**ເຄັດລັບ**ໃນການຮັກສາ**ກຳລັງໃຈ**ກໍຄື ເມື່ອໄດ້ຮັບມາ
ຈົ່ງຟ້າວ**ແຈກຈ່າຍ**ອອກໄປໃຫ້**ໄວທີ່ສຸດ!** ໃຫ້**ຫລາຍທີ່ສຸດ!**
ແລ້ວທ່ານຈະອັດສະຈັນໃຈຫລາຍທີ່ພົບວ່າ **ກຳລັງໃຈຂອງທ່ານນັ້ນ**
ຍິ່ງທ່ານ**ໃຫ້ອອກ**ໄປຫລາຍປານໃດ ທ່ານຍິ່ງ**ໄດ້ຮັບ**ກັບມາຫລາຍຂຶ້ນເທົ່ານັ້ນ!
ແລະເໝືອນດັ່ງການແກວ່ງໄມ້ ມູມມາແຮງ ຍິ່ງແກວ່ງແຮງຍິ່ງກັບມາໄວ!
ຫວັງວ່າທ່ານຈະມີປະສົບການກັບ **"ກຳລັງໃຈ"** ອັນມະຫັດສະຈັນ!

**"ການເດີນທາງ1,000 ຫລັກ ຈະເລີ້ມຕົ້ນກັນໃນກ້າວທີ່ນຶ່ງ!"**

## ໃນສະພາບທີ່ມືດມົນແລະສັບສົນ
## ຈະກ້າວໄປຂ້າງໜ້າຢ່າງໃດໃຫ້ມີຄວາມສຸກ?

### 1. ກ້າວທີ່ສຳຄັນ

**ໂລກ**ຈະເປັນຢ່າງໃດ
ຖ້າມີແຕ່ເລກ 2 ເປັນຕົ້ນໄປໂດຍບໍ່ມີເລກທີ 1!
ຖ້າບໍ່ມີເລກ 1 ເລກອື່ນໆບໍ່ວ່າຈະເປັນ 3,4,5,6 ແລະອື່ນໆ ກໍຈະບໍ່ເກີດຂຶ້ນ!
ດັ່ງນັ້ນເລກ 1 ຫລືກ້າວທີ1 ຈຶ່ງເປັນ**ເລກ** ແລະ**ກ້າວທີ່ສຳຄັນ!**
ໃນ**ຊີວິດ**ຂອງທ່ານກໍເຊັ່ນກັນ ຖ້າຄິດຈະເດີນທາງໄກນັບພັນຫລັກ
ທ່ານຈະຕ້ອງເລີ້ມຕົ້ນຈາກຫລັກທີນຶ່ງກ່ອນ!
ແລະຫລັກທີ່ນຶ່ງຈະຕ້ອງເລີ້ມຕົ້ນຈາກ**ກ້າວທີ່ນຶ່ງ!**
**ຊີວິດ**ຂອງທ່ານຕ້ອງມີ**ເປົ້າໝາຍປາຍທາງ**ທີ່ຄວນຄູ່
ຕໍ່ການທຸ່ມເທແຮງງານ ຄວາມສາມາດ ເວລາ ແລະຄອບຄົວ!

ແຕ່ບໍ່ວ່າຈະເປັນເປົ້າໝາຍ**ໃຫຍ່**ຫລືເປົ້າໝາຍ**ນ້ອຍ**

ເປົ້າໝາຍໄລຍະ**ຍາວ** ຫລືໄລຍະ**ສັ້ນ** ບໍ່ວ່າເປົ້າໝາຍນັ້ນ

ຈະຍາກລຳບາກໃນການບັນລຸເຖິງຫລາຍປານໃດ

ທ່ານຈະຕ້ອງ**ກ້າວ**ອອກໄປຈາກຈຸດທີ່ທ່ານຢືນຢູ່ກ່ອນ?

ທ່ານຕ້ອງຮູ້ໄວ້ສເມີວ່າ

ທຸກ**ກ້າວ**ທີ່ທ່ານ**ກ້າວ**ອອກໄປຈາກບ່ອນທີ່ທ່ານຢືນຢູ່

ດ້ວຍສາຍຕາຈັບຈ້ອງຢູ່ທີ່ເປົ້າໝາຍ ນັ້ນກໍຄື

ການກ້າວເຂົ້າໄປໃກ້**ເປົ້າໝາຍ**ນັ້ນອີກກ້າວນຶ່ງ!

ແລະຫາກທ່ານ**ກ້າວໄປ**ຂ້າງໜ້າດ້ວຍແຮງ**ສັດທາ**

ທ່ານຈະກ້າວອອກໄປໄດ້**ງ່າຍຂຶ້ນ! (1)**

**"ຖ້າພຣະເຈົ້າຊົງໂຜດອະນຸຍາດ ເຮົາກໍຈະໄດ້ກ້າວໜ້າໄປຢ່າງນີ້"** (ຮຣ 6:3)

ແມ່ນແລ້ວ!

ທ່ານອາດຈະຕ້ອງໃຊ້ເວລາດົນນານກວ່າທີ່ທ່ານຈະບັນລຸ**ເປົ້າໝາຍ**

ແຕ່ທ່ານຈະເຖິງ**ປາຍທາງ**ແນ່ນອນ ຖ້າທ່ານເລີ້ມກ້າວໆແຮກອອກໄປ

ດ້ວຍຄວາມມຸ່ງໝັ້ນທີ່ຈະກ້າວໃຫ້ເຖິງ**ເປົ້າໝາຍ**ຂອງທ່ານ!

ດັ່ງທີ່ຄົນໆນຶ່ງເຄີຍປະພັນໄວ້ວ່າ

**"ກວ່າເຮົາຈະ ເດີນທາງໄກ ຈົນໄປເຖິງ**

**ຫົນທາງນຶ່ງ ພັນຫລັກ ໂພດໄກຫ່າງ**

**ເຮົາຕ້ອງເລີ້ມ ກ້າວທີ່ນຶ່ງ ຊຶ່ງນຳທາງ**

**ເພື່ອກ້າວຢ່າງ ຕໍ່ໄປ ໄດ້ຕາມມາ"**

ຢ່າງໃດກໍຕາມ ເຮົາຕ້ອງຣະລຶກສເມີເຊັ່ນກັນວ່າ

ຄົນທີ່ກ້າວອອກໄປກ່ອນ

ບໍ່ແມ່ວ່າຈະເປັນຄົນ**ແຮກ**ທີ່ກ້າວເຖິງຈຸດໝາຍປາຍທາງ!

ເພາະຄົນບໍ່**ສຶກສາ**ເສັ້ນທາງການເດີນທາງໃຫ້ດີ ແລະບໍ່ມີ**ວິນັຍ**

ໃນການເດີນທາງທີ່ດີ ອາດຈົບລົງພຽງແຕ່**ກາງທາງ**ກໍເປັນໄດ້!

ດັ່ງນັ້ນ ທ່ານຈົ່ງຮຽນຮູ້ແລະກ້າຫານ ກ້າວໄປຂ້າງໜ້າຢ່າງມຸ່ງໝັ້ນ

ແຕ່ຢ່າປະໝາດຫລືຂະລ່າໃຈ!

**ເວລານີ້ ທ່ານກ້າວມາເຖິງຍ່ານໃດແລ້ວ**

**ກໍໃຫ້ກ້າວຊື່ໄປຕາມນັ້ນຕໍ່ໄປ** (ຟລປ 3:16)

**ຮັບຮອງວ່າທ່ານຈະເຖິງປາຍທາງຢ່າງແນ່ນອນ!**

## ລອງເບິ່ງເດີ ຖ້າບໍ່ເຊື່ອ!!!

**“ມີເງິນພໍ ສຳລັບ ໃຫ້ຈັບຈ່າຍ**
**ມີຮ່າງກາຍ ສົມບູນ ພໍອຸ່ນຈິດ**
**ມີມິດແທ້ ແລະຈິງໃຈ ໃນຊີວິດ**
**ແລ້ວຈະຄິດ ມີສິ່ງໃດ ໄປກວ່ານີ້!”**

## 2. ແລ້ວຈະຄິດມີສິ່ງໃດໄປກວ່ານີ້?

**ຊີວິດຄົນເຮົາມີສຸກແລະໂສກເສົ້າປະປົນກັນໄປຕລອດເວລາ!**
ຈະຜູກຂາດແຕ່ **“ຄວາມສຸກ”** ຢ່າງດຽວ ຍ່ອມເປັນໄປບໍ່ໄດ້
ເຖິງວ່າເຮົາຢາກໃຫ້ເປັນຢ່າງນັ້ນຫລາຍຈັກພຽງໃດກໍຕາມ!
**“ຄວາມທຸກ”** ເບິ່ງຄືຈະເປັນຜູ້**ບຸກຣຸກ**!
ບໍ່ແມ່ນສະເພາະໃນຍາມວິການ ແຕ່ບໍ່ຮູ້ກາລະເທສະເອົາເລີຍ!
ວິທີທີ່ດີໃນການຮັບມືກັບຄວາມ**ທຸກ**
ກໍຄື ການຮູ້ຈັກພໍ ກັບສິ່ງທີ່ **“ພຽງພໍ”**!
ບາງຄົນມີເງິນ 1000 ກີບ ແຕ່ບໍ່ພໍໃຈ
ຈຶ່ງຂົນຂວາຍຈົນໄດ້ 10,000 ກີບ ແຕ່ຍັງບໍ່ເພິງພໍໃຈ
ກັບດີ້ນຣົນອົດເມື່ອຍຈົນໄດ້ 100,000 ກີບ!
ແຕ່ກໍຍັງກະຫາຍອີກຢູ່!
ຈົນຕ້ອງທຸ່ມເທຊັພກຳລັງໄດ້ມາ 1,000,000 ກີບ
ແຕ່ກໍເໝືອນດັ່ງ ດື່ມນ້ຳເຄັມດັບກະຫາຍ!
ເພາະດື່ມຫລາຍກໍຍິ່ງກະຫາຍ!
ບາງຄົນສະລະໄດ້ແມ້ແຕ່**ສະຫາຍ ສຸຂພາບ** ແລະ**ຄອບຄົວ**
ເພື່ອຈະໄດ້ເງິນຫລາຍຂຶ້ນເລື້ອຍໆ
ຄວາມໂລບເຊັ່ນນັ້ນເຮັດໃຫ້ເກີດຄວາມ**ຢາກ**ທີ່ບໍ່ມີວັນສິ້ນສຸດ!
ແລະແລ້ວໃນບໍ່ຊ້າຄວາມ**ທຸກ**ກໍມາຢ້ຽມເຍືອນ!
ໃນທີ່ສຸດ ທຸຣກິດໃນຝັນ **ກໍພັງພິນາດ**ໄປກັບຍຸກຟອງຂອງສະບູທີ່ແຕກ!
**ຊັພສິນ**ທັງໝົດທີ່ຍອມສະລະທຸກສິ່ງເພື່ອຈະໄດ້ມາ
**ຫາຍວັບ**ໄປກັບຕາ!
ພ້ອມທັງມີໜີ້ສິນກອງໃຫຍ່ມາໄວ້ໃຫ້
ເຮັດໃຫ້ຕ້ອງຢູ່ໃນສະພາບ **“ຈະຢູ່ກໍບໍ່ໄຫວ ຈະຕາຍກໍບໍ່ໄດ້!”**
ນັບວ່າເປັນ**ທຸກ**ທີ່ບໍ່ສົມຄວນແທ້ໆ!
ດ້ວຍເຫດນີ້ ກ່ອນທີ່ທ່ານຈະປ່ອຍລົງໄປໃນໂສກອະນາດຕະກັມແຫ່ງຊີວິດນັ້ນ

ຂໍໃຫ້ທ່ານໄດ້ສະຕິ! ໄດ້ຄິດ!

ຈົ່ງມີຊີວິດທີ່ຮູ້ຈັກ **"ປະມານຕົນ"**

ແລະຮູ້ຈັກ **"ພໍໃຈ"** ໃນສິ່ງທີ່ທ່ານມີຢູ່! (1)

**"ຈົ່ງໃຫ້ການດຳເນີນຊີວິດຂອງທ່ານເວັ້ນຈາກການຮັກເງິນຮັກຄຳ ຈົ່ງພໍໃຈໃນສິ່ງທີ່ຕົນມີຢູ່ ເພາະພຣະເຈົ້າເອງຊົງກ່າວໄວ້ວ່າ, "ເຮົາຈະບໍ່ປະເຈົ້າ ຫລືຖິ້ມເຈົ້າເສັຽຈັກເທື່ອ"** (ຮຮ 13:5)

**ຄະຕິທັມ**ໃນວັນນີ້ ເປັນ**ບົດຮຽນແຫ່ງຊີວິດທີ່ດີ** ນັ້ນຄື

"ມີ**ເງິນ**ພໍສຳລັບໃຫ້ຈັບຈ່າຍ

ມີ**ຮ່າງກາຍ**ສົມບູນພໍອຸ່ນຈິດ

ມີມິດແທ້ແລະ**ຈິງໃຈ**ໃນຊີວິດ

**ແລ້ວຈະຄິດມີສິ່ງໃດໄປກວ່ານີ້!** ຈິງຫລືບໍ?

ເຖິງວ່າທ່ານມີ**ຊັພບໍ່ຫລວງຫລາຍ** ແຕ່ທ່ານຍັງມີ**ພຽງພໍ**ທີ່ຈະຢູ່ໄດ້

ແລະເຖິງມີມິດບໍ່ຫລວງຫລາຍ ແຕ່ເປັນມິດທີ່ດີແລະມີພຽງພໍ!

**ຂ້າພະເຈົ້າຄິດວ່າ ຫາກມີຊີວິດແບບນີ້**

**ກໍບໍ່ໜ້າຈະມີສິ່ງໃດເຮັດໃຫ້ຕ້ອງເປັນທຸກອີກແລ້ວ!!** **ແມ່ນບໍ່ທ່ານວ່າ?**

## "ຄວາມກະຕືລືລົ້ນຄືສັນຍານທີ່ບົ່ງບອກເຖິງສຸຂພາບຂອງ ຈິດວິນຍານ!"

## 3. ກະຕືລືລົ້ນ!

**ທ່ານເຄີຍທຳງານຮ່ວມກັບ**

**ຄົນທີ່ບໍ່ມີຄວາມກະຕືລືລົ້ນຫລືບໍ? ຫລື**

**ທ່ານເຄີຍຢູ່ຮ່ວມຊາຍຄາກັບ**

**ຄົນທີ່ໄຮ້ຄວາມກະຕືລືລົ້ນ ຫລືບໍ?**

**ຖ້າເຄີຍ! ທ່ານຮູ້ສຶກຢ່າງໃດ?**

ຄຳວ່າ **"ກະຕືລືລົ້ນ"** ມີຄວາມໝາຍວ່າ

**"ຮີບຮ້ອນ ຮີບເລັ່ງ ຂະມັ່ງຂະມໍ ມີໃຈຝັກໃຝ່ ແລະເຮັ່ງຮ້ອນ"**

ຜູ້ໃດທີ່ຢູ່ກັບເຮົາ ຫລືທຳງານຮ່ວມກັບເຮົາແບບ**ເຕື່ອມໆ**

ບໍ່ຮີບບໍ່ເລັ່ງ ບໍ່ຂະມັ່ງຂະມໍຊ່ອຍກັນທຳງານ!

ຄົງຈະ**ຢູ່ກັບເຮົາບໍ່ໄດ້ດົນນານດອກ**

**ຈິງຫລືບໍ?**

ຫລືຖ້າເຂົາຈະ**ຢູ່ດົນ** ຕົວເຮົາເອງກໍຄົງເປັນຝ່າຍທີ່

**ບໍ່ຢາກຈະຢູ່ດົນໆ** ກັບເຂົາອີກ

ນອກຈາກວ່າ ເຮົາເລີ່ມໝົດຄວາມກະຕືລືລົ້ນໄປດ້ວຍອີກຜູ້ນຶ່ງ!

ລອງຄິດເບິ່ງວ່າ ຖ້າອະວັຍວະໃນຮ່າງກາຍຂອງເຮົາ

ບໍ່**ກະຕືຣືລົ້ນ**ເຮັດໜ້າທີ່ຂອງຕົນເອງ

**ແມ່ນຫຍັງຈະເກີດຂຶ້ນ?**

ຖ້າ**ກະເພາະອາຫານ**ບໍ່ຮີບເລັ່ງເຮັດໜ້າທີ່ຍ່ອຍອາຫານ?

ຖ້າ**ຫົວໃຈ**ບໍ່ກະຕືຣືລົ້ນທີ່ຈະດູດເລືອດໄປລ້ຽງອະວັຍວະຕ່າງໆ

ຖ້າ**ລຳໃສ້**ບໍ່ຂະມັງຂະມັນໃນການຂັບຖ່າຍຂອງເສັຽອອກມາ?

ເຮົາຄົງ ຕ້ອງເວົ້າວ່າ **"ວິກິດແນ່ນອນ"**

ແມ່ນຫລືບໍ?

ໃນພາສາອັງກິດມີຄຳຫລາຍຄຳທີ່ແປໃນວັຈນະນຸກົມ

ໄດ້ຄວາມໝາຍວ່າ **"ກະຕືຣືລົ້ນ"**

ແຕ່ມີຄຳນຶ່ງທີ່ຄົນເຮົາຮູ້ຈັກດີທີ່ສຸດຄືຄຳວ່າ

"Enthusiasm" ຊຶ່ງມາຈາກສັພພາສາກຣີກທີ່ແປວ່າ

**"ໄດ້ຮັບການດົນໃຈໂດຍພຣະເຈົ້າ"!**

ປະກອບດ້ວຍຄຳຫລັກໆ 2 ຄຳຄື:

"en" ທີ່ແປວ່າ **"ໃນ"**

"Theos" ທີ່ແປວ່າ **"ພຣະເຈົ້າ"**

ຖ້າແປຕາມສັພ **"ຄວາມກະຕືຣືລົ້ນ"**

ກໍໝາຍຄວາມວ່າ **"ພຣະເຈົ້າ (ທຳງານ) ຢູ່ຂ້າງໃນ"!**

**ພຣະເຈົ້າ**ເປັນ**ພຣະເຈົ້າ**ທີ່ມີ**ຄວາມກະຕືຣືລົ້ນ**

ພຣະອົງບໍ່ພຽງແຕ່ສ້າງໂລກ ແລະວາງກົດທັມະຊາດ

ໃຫ້ຈັບງານເທົ່ານັ້ນ!

ແຕ່ຊົງກະທຳກິຈການທີ່**ສ້າງສັນຢູ່ເລື້ອຍໆ**ຕລອດເວລາ!

ດ້ວຍເຫດນີ້ ຄົນທີ່ມີ **"ພຣະເຈົ້າ (ທຳງານ) ຢູ່ຂ້າງໃນ"**

ຈະເປັນຄົນກຽດຄ້ານ ເສື່ອຍຊາ ນັ່ງຢູ່ເສີຍໆ

ໂດຍບໍ່ເຮັດສິ່ງໃດທີ່ສ້າງສັນແລະເປັນຄຸນປໂຍດເລີຍນັ້ນ

**ຄົງເປັນໄປບໍ່ໄດ້!** (1)

**"ເຫດສັນນັ້ນເມື່ອທ່ານມີບໍຣິບູນທຸກສິ່ງ ຄືຄວາມເຊື່ອ ຝີປາກ ຄວາມຮູ້ ຄວາມກະຕືຣືລົ້ນແລະຄວາມຮັກຕໍ່ເຮົາ ທ່ານທັງຫລາຍກໍຈົ່ງປະກອບ ການກຸສົນນີ້ຢ່າງບໍຣິບູນເໝືອນກັນເທີ້ນ"** (2 ກຣທ 8:7)

ດັ່ງນັ້ນຂໍ້ຄິດທີ່ວ່າ

**"ຄວາມກະຕືຣືລົ້ນ ຄືສັນຍານບົ່ງບອກເຖິງສຸຂພາບຂອງຈິດວິນຍານ!"**

ຈຶ່ງເປັນສັຈທັມທີ່ບໍ່ອາດປະຕິເສດໄດ້!

**ວ່າແຕ່ວັນນີ້..ທ່ານມີ "ພຣະເຈົ້າ" ທຳງານຢູ່ "ພາຍໃນ" ຕົວຂອງທ່ານແລ້ວຫລືຍັງ?**

# "ຄົນມອງໂລກໃນແງ່ດີຈະຫົວເລາະຈົນລືມ ແຕ່ຄົນມອງໂລກໃນແງ່ຮ້າຍລືມທີ່ຈະຫົວເລາະ!"

## 4. ລືມຫົວເລາະ!

**ສຽງຫົວເລາະ**ເປັນສັນຍາລັກຂອງສັງຄົມທີ່ມີ**ສຸກ**!
ສັງຄົມໃດປາສຈາກສຽງ**ຫົວເລາະ** ສັງຄົມນັ້ນກຳລັງມີບັນຫາ!
ຄົນທີ່ບໍ່ມີສຽງ**ຫົວເລາະ**ຄົນທີ່ກຳລັງຢູ່ໃນພາວະທີ່ລຳບາກ
ຫລືບໍ່ກໍກຳລັງຢູ່ພາຍໃຕ້ຄວາມ**ທໍາຄາກົວ**!
ແລະຄົນທີ່**ຍິ້ມຍື່ນ** ຄືຄົນທີ່**ຫົວເລາະບໍ່ອອກ**!
ຕໍ່ຄົນທີ່**ສິ້ນຫວັງ** ແຮງບໍ່ຈຳເປັນຕ້ອງຄາດຫວັງສຽງ**ຫົວເລາະ**ຈາກເຂົາເລີຍ!
ແຕ່ສິ່ງທີ່ໜ້າປະຫລາດໃຈປະການນຶ່ງທີ່ຂ້າພະເຈົ້າເຫັນກໍຄືວ່າ
ຍັງມີຄົນຈຳນວນບໍ່ໜ້ອຍທີ່**ຍັງຫົວເລາະໄດ້**
ເຖິງສະພາວະທີ່ເຂົາກຳລັງຜະເຊີນຢູ່ນັ້ນເບິ່ງຊ່າງເລວຮ້າຍຈົນເກີນຈະຮັບໄດ້ກໍຕາມ!
**ແມ່ນຫຍັງ**ເປັນຕົວທີ່ເຮັດໃຫ້ຄົນທັງສອງກຸ່ມ ມີທ່າທີທີ່ແຕກຕ່າງກັນ
ຕໍ່**ບັນຫາ**ຫລືຄວາມ**ທຸກຍາກ**ທີ່ພວກເຂົາຜະເຊີນ?
ຂ້າພະເຈົ້າພົບວ່າ **ຕົວແປສຳຄັນ** ຄື **ທັສນະຄະຕິ!**
ຫລືທີ່ສະໄໝໃໝ່ເອີ້ນວ່າ **"ເຈຕນາຄະຕິ"!**
ທີ່ຄົນເຫລົ່ານັ້ນມີຕໍ່ສິ່ງທີ່ເກີດຂຶ້ນ!
ສຳລັບຄົນ**ມອງໂລກໃນແງ່ຮ້າຍ**
ປຽບເໝືອນກັບຄົນທີ່ມອງເບິ່ງ**ກະດານສີຂາວ** (whiteboard)
ແລ້ວບອກວ່າ ເຫັນ**ຈຸດສີດຳ**ທີ່ແຕ້ມຢູ່ 1 ຈຸດເທິງກະດານສີຂາວແຜ່ນນັ້ນ
ໃນຂນະທີ່ຄົນ**ມອງໂລກໃນແງ່ດີ**ກັບບອກວ່າ
ເຂົາເຫັນ**ກະດານສີຂາວທັງແຜ່ນ** ເຖິງຈະມີ**ຈຸດດຳ**ນ້ອຍໆຢູ່ຈຸດນຶ່ງ
ກໍບໍ່ມີບັນຫາຫຍັງ!
ໃນທຳນອງດຽວກັນກັບຄົນ 2 ຄົນ ທີ່ກຳລັງມອງເບິ່ງເຂົ້າໜົມ **ໂດນັທ!**
ເມື່ອພວກເຂົາຖືກຖາມວ່າເຫັນຫຍັງ?
ຄົນມອງໂລກໃນ**ແງ່ຮ້າຍ**ບອກວ່າ ເຫັນ**ຮູທີ່ກວ້າງໃຫຍ່!**
ແຕ່ຄົນມອງໂລກໃນ**ແງ່ດີ**ກັບເຫັນ**ເຂົ້າໜົມໂດນັທ**ນັ້ນກ້ອນໃຫຍ່ທີ່**ໜ້າກິນ!**
ດັ່ງນັ້ນ ແທ້ຈິງແລ້ວທ່ານຈະມີຄວາມ**ສຸກ**ຫລືຄວາມ**ທຸກ**ນັ້ນ
ບໍ່ໄດ້ຂຶ້ນຢູ່ກັບສະພາວະແວດລ້ອມອີກຕໍ່ໄປ!
ແຕ່ຂຶ້ນຢູ່ກັບວ່ ທ່ານມີ**ທັສນະຄະຕິ**
ຫລື**ຄວາມຄິດ**ຢ່າງໃດຕໍ່ສິ່ງທີ່ທ່ານຜະເຊີນຫລາຍກວ່າ!
ຈົ່ງຈຳໄວ້ວ່າ

ຄົນທີ່ມີຄວາມທຸກ ຄື ຄົນທີ່ມອງໂລກໃນແງ່ຮ້າຍເກີນໄປ ຈົນລືມທີ່ຈະຫົວເລາະ!
ແຕ່ຄົນທີ່ມີຄວາມສຸກ ຄື ຄົນທີ່ມອງໂລກໃນແງ່ດີ
ທີ່ຮູ້ຈັກຫົວເລາະຈົນເຮັດໃຫ້ລືມຄວາມທຸກ!
ແລະຄົນເຊັ່ນນີ້ມັກຈະເປັນຜູ້ທີ່ສັດທາໃນພຣະຜູ້ເປັນເຈົ້າ
ເຂົາຈຶ່ງເຊື່ອໝັ້ນວ່າວັນນຶ່ງຂ້າງໜ້າ
ພຣະຜູ້ເປັນເຈົ້າຈະຊ່ວຍໃຫ້ເຂົາໄດ້**ຫົວເລາະ**ຢ່າງເຕັມທີ (1)
**"ເໝືອນດັ່ງທີ່ກະສັດດາວິດ ໄດ້ບັນຍາຍໄວ້ວ່າ ".. ປາກຂອງເຮົາໄດ້ຫົວເລາະຢ່າງເຕັມທີ
ແລະລີ້ນຂອງເຮົາໄດ້ເປັ່ງສຽງຮ້ອງຢ່າງຊື່ນບານ.."** (ພສສ 126:1-3)
ຫວັງເຫລືອເກີນວ່າ ທ່ານຈະເປັນນຶ່ງໃນຖ້າມກາງພວກເຂົາ!
ເພາະການໄດ້ຫົວເລາະ ຍ່ອມດີກວ່າການຮ້ອງໄຫ້!
ເຫັນພ້ອມຂ້າພະເຈົ້າກັນບໍ?

## "ຈົ່ງຮຽນຮູ້ທີ່ຈະຢູ່ເພື່ອ ມື້ນີ້ເພາະວ່າ ຄວາມວິຕົກກັງວົນເປັນເຣື່ອງກ່ຽວກັບມື້ວານ ແລະມື້ອື່ນ!"

## 5. ມື້ນີ້ ດີທີ່ສຸດ

**ບໍ່ແມ່ນ** ໝາຍເຖິງນ້ຳແປັບຊີດອກທີ່ດີທີ່ສຸດດອກ!
ແຕ່ **"ມື້ນີ້"** ຕ່າງຫາກ!
ບໍ່ຄືມ **"ນ້ຳແປັບຊີ"** ຊຶ່ງມື້ນີ້ ຫລືມື້ອື່ນກໍຫາຊື້ໃໝ່ໄດ້!
ແຕ່ **"ມື້ນີ້"** ເມື່ອຜ່ານໄປແລ້ວ
ມື້ອື່ນຈະຂໍຊື້ **"ມື້ນີ້"** ກັບຄືນມາອີກຄັ້ງກໍບໍ່ມີທາງໄດ້ອີກເລີຍ!
ຈະມີ**ເງິນທອງລົ້ນຟ້າ**ຫລືມີ**ວາສນາ**ຍິ່ງໃຫຍ່ປານໃດ
ກໍບໍ່ມີວັນທີ່ຈະໄດ້ **"ມື້ນີ້"** ທີ່ຜ່ານໄປແລ້ວກັບຄືນມາໄດ້ອີກ!
ດັ່ງນັ້ນໃຫ້ເຮົາ**ພູມໃຈ**ໃນ **"ມື້ນີ້"** ທີ່ເຮົາມີ!
ໃຫ້ເຮົາ**ຊື່ນຊົມ**ກັບ **"ວັນນີ້"** ທີ່ເຮົາໄດ້ມາ!
ໃຫ້ເຮົາພ້ອມທີ່ຈະຜະເຊີນກັບທຸກສະພາບການຂອງຊີວິດ
ດ້ວຍໃຈທີ່**ຍິນດີ!**
ຢ່າໄປຕິດຢູ່ກັບ**ອະດີດ!**
ຢ່າໄປກະວົນກະວາຍໃຈກັບ**ອະນາຄົດ!**
ພຣະເຢຊູຄຣິດໄດ້ກ່າວອັມະຕະວາຈາໄວ້ວ່າ
**"ເຫດສັນນັ້ນ ຢ່າກະວົນກະວາຍ ເຖິງ ມື້ອື່ນ
ເພາະວ່າມື້ອື່ນຄົງມີການກະວົນກະວາຍສຳລັບມື້ອື່ນເອງ
ແຕ່ລະວັນກໍມີທຸກພໍຢູ່ແລ້ວສຳຣັບວັນນັ້ນ"** (ມທ 6:34)

ຄວາມຫລັງຄັ້ງອະດີດອາດເກາະກຸມຍຶດໜ່ຽວທ່ານໄວ້
ເພື່ອບໍ່ໃຫ້ກ້າວເຄື່ອນທີ່ໄປ!
..ທັງໆທີ່**ເມື່ອວານ**ນີ້ຜ່ານພົ້ນໄປແລ້ວ
ແລ້ວທ່ານຈະປ່ຽນແປງສິ່ງໃດອີກກໍບໍ່ໄດ້ແລ້ວ!
ສ່ວນຄວາມບໍ່ແນ່ໃຈໃນ**ອະນາຄົດ**
ອາດຈະຂົ່ມຂວັນຂອງທ່ານໃຫ້ແຕກກະຈາຍໄປ!
ເຮັດໃຫ້ທ່ານບໍ່ກ້າເດີນໄປຂ້າງໜ້າ!
ທັງໆທີ່**ມື້ອື່ນ**ຍັງມາບໍ່ທັນເຖິງ!
ແລະເຖິງວ່າຈະມາເຖິງ
ແຕ່ອາດບໍ່ເລວຮ້າຍຢ່າງທີ່ທ່ານວິຕົກກໍເປັນໄດ້!
ແຕ່**ມື້ນີ້**ບໍ່ເໝືອນກັນ!
**ມື້ນີ້**ເປັນ**ຂອງຂວັນ**ຈາກສວັນທີ່ທ່ານຕ້ອງຮູ້ຈັກທະນຸຖນອມ
ແລະກໍ່ໃຫ້ເກີດປໂຍດສູງສຸດ!
ດັ່ງນັ້ນໃຫ້ທ່ານ ຮຽນຮູ້ທີ່ຈະຢູ່**ກັບ**ວັນນີ້
**ໃນ**ວັນນີ້
**ເພື່ອ**ວັນນີ້!
ໂດຍໃຫ້ທ່ານເຮັດມື້ນີ້ຂອງທ່ານໃຫ້**ດີທີ່ສຸດ**!
ແລະຫາກວ່າ "ກຳລັງໃຈ" ບໍ່ຂາດຫາຍໄປຈາກຊີວິດຂອງທ່ານ!
**ມື້ນີ້**ຂອງທ່ານ
ຈະມີສີສັນຫລາຍຍິ່ງຂຶ້ນກວ່າເດີມ!
**ຈົ່ງເຊື່ອຂ້າພະເຈົ້າເທີ້ນ!**

## "ຄວາມສຸກເປັນຂອງບຸກຄົນທີ່ຫຍຸ້ງເກີນກວ່າທີ່ຈະ ກັງວົນໃຈໃນເວລາກາງເວັນ ແລະງ້ວງນອນເກີນໄປທີ່ຈະກັງວົນໃຈໃນເວລາກາງຄືນ!"

## 6. ດີທີ່ຫຍຸ້ງແລະງ້ວງ

**ປົກກະຕິ** ຄຳວ່າ **"ຫຍຸ້ງ"** ກັບ **"ງ້ວງ"** ມີຄວາມໝາຍໄປໃນ**ແງ່ລົບ**!

**"ຫຍຸ້ງ"** ໝາຍເຖິງ "ອາການຂອງສິ່ງທີ່ເປັນເສັ້ນເປັນຝອຍ **ສັບສົນພົວພັນ**ກັນເຖິງກັບຕ້ອງສາງ ຈຶ່ງຈະເປັນລະບຽບຮຽບຮ້ອຍໄດ້"

ອາການແບບນີ້ ເຮັດໃຫ້ເຮົາຕ້ອງຈົດຈໍ່ກັບການ**ສາງ**ຫລື**ແກ້ໄຂ**ໃຫ້

**ກັບຄືນສູ່ສະພາບປົກກະຕິ!**

ໂດຍປົກກະຕິແລ້ວ ພວກປົກກະຕິຊົນມັກຈະບໍ່ມັກຄວາມ **"ຫຍຸ້ງ"**

ແຕ່ສໍາລັບຄົນທີ່ມີ**ອາຣົມເບາະບາງ** ຊຶມເສົ້າໂດຍງ່າຍ ຫລືມີ

**ວິຕົກຈິດ**ເປັນນິສັຍ ບາງທີການມີສິ່ງໃດທີ່ຈະຕ້ອງເຮັດ ຫລືຕ້ອງຈົດຈໍ່ແກ້ໄຂ

(ໂດຍທີ່ບໍ່ມີຄວາມກົດດັນຫລາຍ) ຈົນເບິ່ງເຫມືອນວ່າເຂົາ **"ຫຍຸ້ງ"** ຢູ່ຕລອດເວລາ

ອາດເຮັດໃຫ້ເຂົາ**ລົດຄວາມຟຸ້ງຊ່ານ**ລົງໄປໄດ້ບໍ່ໜ້ອຍ!

ດັ່ງນັ້ນ ສໍາລັບຄົນບາງຄົນ ຄວາມ **"ຫຍຸ້ງ"** ໃນຄວາມໝາຍຂ້າງຕົ້ນ

ເຊັ່ນນີ້ ບໍ່ພຽງແຕ່**ບໍ່ເປັນບັນຫາ**! ແຕ່ກັບກາຍເປັນ**ພອນ!**

ແຕ່ຫາກເຮົາຄວບຄຸມບໍ່ຢູ່ ສະຖານະການທີ່**ຫຍຸ້ງເຫຍີງ**(ຫຍຸ້ງໄປກັນໃຫຍ່) ນັ້ນ

ກໍອາດຈະກໍ່ໃຫ້ເກີດ**ຄວາມຫຍຸ້ງໃຈ**(ກັງວົນວຸ້ນວາຍໃຈ)

ຊຶ່ງເປັນສິ່ງທີ່ບໍ່ມີຜູ້ໃດຢາກປາຖນາ!

ສ່ວນ **"ງ້ວງ"** ນັ້ນໝາຍເຖິງ **"ອາການທີ່ຮ່າງກາຍຢາກນອນ"!**

ຄົນທີ່ອິດເມື່ອຍອ່ອນເພັຽຈາກການທໍາງານມາຕລອດວັນ ຫລືຈາກການ

ອອກກໍາລັງກາຍ ພໍຫົວເຖິງໝອນແລ້ວກໍຫລັບເປັນຕາຍໄປເລີຍ!

ຕ້ອງນັບວ່ານັ້ນເປັນ**ພອນ**ຂອງຊີວິດ!

ບໍ່ເໝືອນກັບພວກທີ່**ຫລັບບໍ່ລົງ**! ເພາະມັນຊ່າງທໍຣະມານເຫລືອເກີນ!

ດັ່ງນັ້ນບໍ່ວ່າຈະ**ເກັ່ງ ຣວຍ** ຫລື **ດັງ**ຂະຫນາດໃດ

ຖ້າຫາກນອນບໍ່ຫລັບ ເພາະ "ຄິດຫລາຍ" ເກີນໄປ

ກໍຈະເໝືອນຢູ່ໃນ**ນາຣົກ**ນັ້ນເອງ!

ໃນ**ພຣະຄັມພີ**ໄດ້ໃຫ້ສະຕິໄວ້ວ່າ

ທ່ານ**ບໍ່ຄວນທໍາສິ່ງທີ່ຫຍຸ້ງເຫຍີງຈົນເມື່ອຍລ້າໆ** ແລະ**ນອນບໍ່ຫລັບ!**

ແຕ່ພຣະເຈົ້າຊົງປະສົງທີ່ຈະໃຫ້ເຮົາ**ເປັນສຸກ**ແລະ**ຫລັບສະບາຍ!**

"ຖ້າພຣະເຈົ້າບໍ່ໄດ້ຊົງສ້າງບ້ານ ບັນດາຜູ້ທີ່ສ້າງກໍ**ເມື່ອຍລ້າ**

ຖ້າພຣະເຈົ້າບໍ່ໄດ້ຊົງເຝົ້າຢູ່ເໜືອນະຄອນ

ຄົນຍາມຕື່ນຢູ່ກໍ**ເມື່ອຍລ້າ**

ເປັນການ**ເມື່ອຍລ້າ**ທີ່ທ່ານລຸກຂຶ້ນແຕ່ເຊົ້າມືດ

ນອນເດິກແລະກະທົດກະຫອບກິນອາຫານ

ເພາະພຣະອົງປະທານແກ່ຜູ້ທີ່ຮັກຂອງພຣະອົງໃຫ້**ຫລັບສະບາຍ!"** (ພສສ 127:1-2)

**ວັນນີ້ໃຫ້ທ່ານຄວນສາລະວົນໃນຕອນກາງເວັນ**

**ແລະຫລັບຝັນດີໃນຕອນກາງຄືນຈະດີກວ່າ**

**ແມ່ນຫລືບໍ?**

**"ຈົ່ງດໍາເນີນຊີວິດ**
**ທີ່ແມ້ແຕ່**
**ຄົນເກັບສົພຍັງຮ້ອງໄຫ້ນໍາ**
**ໃນຍາມທີ່ທ່ານຕາຍຈາກໄປ!"**

## 7. ຄົນເກັບສົພຍັງຮ້ອງໄຫ້!

**ມາກ ທເວນ** (Mark Twain) ນັກຂຽນທີ່ມີຊື່ສຽງຄົນນຶ່ງຂອງ
ຊາວອະເມຣິກັນ (ຄ.ສ 1835-1910) ເຄີຍກ່າວໄວ້ວ່າ
**"ຈົ່ງດໍາເນີນຊີວິດຊະນິດທີ່ແມ້ແຕ່**
**ຄົນເກັບສົພຍັງຮ້ອງໄຫ້ເມື່ອທ່ານຕາຍໄປ!"**
ຂ້າພະເຈົ້າເຫັນວ່າ ນີ້ເປັນ**ຄໍາແນະນໍາທີ່ດີ**
ທີ່ທ້າທາຍໃນການດໍາເນີນຊີວິດຂອງເຮົາ!

**ຄົນເກັບສົພ**ເປັນຄົນທີ່ເຄີຍຊິນກັບຄວາມຕາຍ ແລະຄົນທີ່ເຄີຍຊິນກັບຄວາມຕາຍມັກຈະຕັ້ງອາຣົມຕາຍໄດ້ໂດຍບໍ່ຍາກເຢັນ!

ດ້ວຍເຫດນີ້ ຈຶ່ງບໍ່ຄ່ອຍປາກົດວ່າ **ຄົນເກັບສົພ**ຈະເສັຽນໍ້າຕາເພາະມໍຣະນະກັມຂອງບຸກຄົນໃດ ນອກຈາກວ່າ ບຸກຄົນທີ່ຈາກໄປນັ້ນເປັນບຸກຄົນໃນຄອບຄົວອັນເປັນທີ່ຮັກຂອງເຂົາ!

ແຕ່ຖ້າທ່ານບໍ່ໄດ້ເປັນຍາດພີ່ນ້ອງກັບ**ຄົນເກັບສົພ**ນັ້ນ
ເຂົາຄົງບໍ່ມີເຫດຜົນໃດໆທີ່ຈະຫລັ່ງນໍ້າຕາເພື່ອທ່ານ!
ແມ່ນຫລືບໍ?
ແຕ່ຫາກວ່າ**ຊີວິດຂອງທ່ານ**ເປັນຊີວິດທີ່ມີ**ຄຸນຄ່າ**ຕໍ່ໂລກ
ຫລືຕໍ່ຕົວ**ຄົນເກັບສົພ**ນັ້ນຢ່າງມາກມາຍມະຫາສານ
ຕໍ່ໃຫ້ທ່ານບໍ່ກ່ຽວຂ້ອງຫຍັງກັບເຂົາ
ເຂົາເອງກໍຄົງຈະພະຍາຍາມກ່ຽວດອງກັບຕົວຂອງທ່ານ!
ຖ້າຊີວິດຂອງທ່ານໜ້າເຄົາຣົບຍົກຍ້ອງ
ຖ້າຊີວິດຂອງທ່ານນໍາຄຸນປໂຍດມາສູ່ສັງຄົມໂລກ
ໃນຍາມທີ່ທ່ານ**ຕາຍ..**
ຫົວໃຈຂອງໂລກຈະແຕກສລາຍໄປພ້ອມກັບທ່ານ! (1)
ແລະນຶ່ງໃນຖ້າມກາງ**ຄົນ**ໃນໂລກນີ້ກໍຄື **ຄົນເກັບສົພ**ຄົນນັ້ນ!
ເມື່ອຄັ້ງທີ່ທ່ານປະທານາທິບໍດີ **ອັບຣາຮາມ ລິນຄອນ**
ຂອງສະຫະຣັດອະເມຣິກາຜູ້ນໍາໃນການ**ເລີກທາດ**ຖືກ**ລອບສັງຫານ**
ວັນນຶ່ງໃນຂນະທີ່ຂະບວນຣົດແຫ່ສົພຂອງທ່ານກໍາລັງເຄື່ອນເຂົ້າມາ..

**ສັດຕຣີຜິວດຳຄົນນຶ່ງຊຶ່ງກຳລັງອຸ້ມລູກນ້ອຍຢູ່ໃນອ້ອມເອິກ**
ເມື່ອເຫັນຣົດບັນທຸກສົພຜ່ານມາຂ້າງໜ້າ ນາງຟ້າວຍົກຊູລູກຂອງນາງ
ຈົນສຸດແຂນ ແລະຫລັ່ງນ້ຳຕາຄ່ຳຄວນວ່າ
**"ລູກຂອງແມ່ ຈົ່ງມອງເບິ່ງຄົນທີ່ຢູ່ໃນໂຮງສົພນີ້ໃຫ້ເຕັມຕາ**
**ເຂົາຄືຄົນທີ່ສະລະຊີວິດຂອງຕົນ ເພື່ອເຮັດໃຫ້ລູກແລະແມ່ນີ້ເປັນອິສຣະ!"**
ສຕຣີແລະບຸດຄູ່ນີ້ ຄື **ອະດີດຂ້າທາດ** ແຕ່ເພາະທ່ານ**ອັບຣາຮາມ ລິນຄອນ**
ໄດ້ເຫັນ**ສັກສີ** ແລະ**ຄຸນຄ່າຂອງຄວາມເປັນມະນຸດ**
ທ່ານຈຶ່ງທຸ່ມເທທຸກຢ່າງແມ້ແຕ່ຊີວິດເພື່ອໃຫ້ອິສຣະພາບແກ່ຂ້າທາດເຫລົ່ານີ້
**ຄົນຢ່າງນີ້ແຫລະ**
**ທີ່ຄົນເກັບສົພ**ຍັງຮ້ອງໄຫ້ເມື່ອເຂົາຕາຍຈາກໄປ!!
**ຖ້າວັນນີ້ເປັນວັນສຸດທ້າຍໃນຊີວິດຂອງທ່ານ**
**ຈະມີຄົນເກັບສົພຜູ້ໃດຮ່ຳໄຫ້ອາລັຍທ່ານຫລືບໍ?**
(1) ບຸກຄົນທີ່ຍອມຕາຍເພື່ອຊ່ອຍມວນມະນຸດຊາດມີມາກຫລາຍ
ແຕ່ທີ່ໂດດເດັ່ນທີ່ສຸດກໍຄື**ອົງພຣະເຢຊູຄຣິດ** ທີ່ມີນ້ຳໃຈຊົງຍອມສະຣະພຣະຊົນ
ເພື່ອໄຖ່ບາບມວນມະນຸດ ເຮັດໃຫ້ຄົນຫລວງຫລາຍ
ແມ້ແຕ່ຄົນເກັບສົພຍັງຊາບຊຶ້ງໃນພຣະຄຸນ ແລະພຣະເຈົ້າຊົງຍົກຍ້ອງຢ່າງສູງສຸດ
"ດັ່ງນີ້ແຫລະ ເຮົາຈຶ່ງຮູ້ຈັກຄວາມຮັກ
ໂດຍທີ່ພຣະອົງໄດ້ຊົງຍອມສຣະພຣະຊົນຂອງພຣະອົງເພື່ອເຮົາທັງຫລາຍ
ແລະເຮົາທັງຫລາຍກໍຄວນຈະສຣະຊີວິດຂອງເຮົາເພື່ອພີ່ນ້ອງ" (1 ຢຮ 3:16)

## "ເຄື່ອງແທກຄວາມຍິ່ງໃຫຍ່ຂອງຄົນເຮົາບໍ່ໄດ້ແທກທີ່ ຈຳນວນຄົນຮັບໃຊ້ທີ່ເຂົາມີ ແຕ່ເປັນຈຳນວນ ຄົນທີ່ເຂົາຮັບໃຊ້!"

## 8. ເຄື່ອງແທກຄວາມຍິ່ງໃຫຍ່!

ຄົນຈຳນວນບໍ່ໜ້ອຍ
ຢາກ**ເປັນໃຫຍ່**ຫລືເປັນ**ເຈົ້າຄົນນາຍຄົນ!**
ແຕ່ມີຄົນຈຳນວນບໍ່ຫລາຍທີ່ຢາກຈະເປັນຄົນ**ຮັບໃຊ້**
ໂດຍບໍ່ຫວັງສິ່ງຕອບແທນ ແມ້ແຕ່**ຄຳຊົມ!**
ບັນຫາໃນທຸກມື້ນີ້ກໍຄື ຫລາຍຄົນໝົດອາລັຍຕາຍຢາກພຽງແຕ່
ປຽບທຽບກັບຄົນອື່ນແລ້ວຄິດວ່າຕົວເອງສູ້ເຂົາບໍ່ໄດ້! ເຊັ່ນ
ມີ**ເງິນທອງ**ຫລາຍສູ້ເຂົາບໍ່ໄດ້?
ມີ**ຄວາມງາມຄວາມຫລໍ່**ສູ້ເຂົາບໍ່ໄດ້!
ມີ**ຄວາມຮູ້/ປະຣິນຍາ**ສູ້ເຂົາບໍ່ໄດ້!

ມີ**ບ້ານເຮືອນຫລືທີ່ດິນ**ສູ່ເອົາບໍ່ໄດ້!

ມີ**ຖານະ/ຍົດສັກ**ສູ່ເອົາບໍ່ໄດ້!

ມີ**ຄວາມສຳເຣັດ**ໃນອາຊີພການງານສູ່ເອົາບໍ່ໄດ້!

ມີ**ຄວາມຊຳນານ**ສູ່ເອົາບໍ່ໄດ້! ແລະອື່ນໆ

ພຽງແຕ່ຄິດທໍ່ນີ້ກໍ**ໝົດກຳລັງໃຈ**ໃນຊີວິດໄປເສັງແລ້ວ!

ຊ່າງໜ້າສົງສານແທ້ໆນໍ ທ່ານຜູ້ອ່ານເອີຍ!

ສິ່ງເຫລົ່ານີ້ຄື**ເປືອກ**ຂອງຊີວິດ!

ແຕ່ຕົວ**ແກ່ນ**ຫລື**ສາຣະ**ຂອງຊີວິດກໍຄື

ຊີວິດຂອງ**ທ່ານມີປໂຍດຫຍັງ**ຕໍ່ຜູ້ອື່ນຫລືບໍ?

ເຖິງທ່ານຈະມີເງິນທອງ**ໜ້ອຍກວ່າ**ຄົນອື່ນ

ຫລືມີຄວາມຮູ້**ໜ້ອຍ**ດ້ອຍປະຣິນຍາກວ່າ

ຫລືຖານະຍົດສັກກໍ**ຕ່ຳຕ້ອຍ**ກວ່າ

ຫລືຊີວິດການງານບໍ່ປະສົບຄວາມສຳເຣັດເທົ່າໃດກໍຕາມ

(ດີບໍ່ດີມີໜີ້ສິນມາກມາຍທີ່ຕ້ອງໃຊ້ຄືນອີກ) ແລະອື່ນໆ

ແຕ່ສິ່ງເຫລົ່ານີ້ບໍ່ອາດຈະ**ທຳລາຍຄຸນຄ່າ**ຊີວິດຂອງທ່ານໄດ້!

**ຄຸນຄ່າ**ຊີວິດຂອງທ່ານບໍ່ໄດ້ຂຶ້ນຢູ່ກັບວ່າທ່ານມີສິ່ງໃດຫລາຍ

ແຕ່ຂຶ້ນຢູ່ກັບວ່າ

ທ່ານ**ໃຊ້**ສິ່ງທີ່ທ່ານມີ (ເຖິງບໍ່ຫລາຍ) ນັ້ນເຮັດ**ຫຍັງ**ແດ່?

ທ່ານ**ບໍ່ຕ້ອງມີເງິນທອງຫລາຍ**

ເພື່ອຈະສະແດງຄວາມ**ຮັກ**ຂອງທ່ານຕໍ່ຄົນທີ່ຮັກທ່ານ ຫລືຄົນທີ່ທ່ານຮັກ!

ທ່ານບໍ່ຕ້ອງມີ**ຖານະທີ່ສູງສັກຫລາຍ**

ເພື່ອຈະສະແດງຄວາມ**ເມດຕາ**ຕໍ່ຄົນທີ່ດ້ອຍກວ່າທ່ານ?

ທ່ານບໍ່ຕ້ອງມີ**ຄວາມສຳເຣັດຫລາຍ**

ເພື່ອຈະ**ອຸ້ມຊູ**ຊ່ອຍເຫລືອຄົນທີ່ກຳລັງມີຄວາມທຸກໃນຊີວິດ!

**ກິຈ**ທີ່ທ່ານຈະເຮັດດ້ວຍຄວາມຮັກນັ້ນ

ຖືວ່າເປັນ **"ການຮັບໃຊ້"** ທີ່ສ້າງສັນຕໍ່ສັງຄົມ

ຕາມທີ່ພຣະຜູ້ເປັນເຈົ້າຊົງປະສົງໃຫ້ເກີດຂຶ້ນ!

ດັ່ງທີ່ບັນຍັດໄວ້ໃນພຣະຄັມພີທີ່ວ່າ

**"ຈົ່ງຮັບໃຊ້ກັນແລະກັນດ້ວຍຄວາມຮັກເທີ້ນ"!** (ຄລຕ 5:13)

ດັ່ງນັ້ນບໍ່ສຳຄັນດອກວ່າທ່ານມີ**ຄົນຮັບໃຊ້**ຈັກຄົນ

ແຕ່ຂຶ້ນຢູ່ກັບວ່າ **ທ່ານໄດ້ຮັບໃຊ້**ໄປຈັກຄົນແລ້ວຕ່າງຫາກທີ່ສຳຄັນ!

ເພາະບັນດາ**ຄົນທີ່ທ່ານຮັບໃຊ້**ເຫລົ່ານັ້ນ

ອາດຈະກັບກາຍມາເປັນ**ຣາງວັນແຫ່ງຊີວິດ**ຂອງທ່ານໃນບັ້ນປາຍ

ກໍເປັນໄດ້! **ໃຜຈະຮູ້ໄດ້?**

"ຊີວິດເໝືອນຣົດຍົນທີ່ທ່ານຂັບໄປເທິງຖນົນ ທີ່ມີຍວດຍານແລ່ນ ຂວັກໄຄວ່ໄປມາ ນອກຈາກຈະຕ້ອງລະວັງບໍ່ໃຫ້ຣົດຂອງທ່ານແລ່ນໄປຊົນຣົດຂອງຜູ້ອື່ນແລ້ວຍັງຕ້ອງລະວັງບໍ່ໃຫ້ຣົດຄັນອື່ນແລ່ນມາຊົນຣົດຂອງທ່ານອີກດ້ວຍ!"

## 9. ຊີວິດກໍເໝືອນຣົດຍົນ!

### ບໍ່ຮູ້ວ່າໃຜເປັນຄົນແຮກ

ທີ່ເລີ້ມປຽບທຽບວ່າ**ຊີວິດ**ຂອງເຮົາເປັນເໝືອນ**ຣົດຍົນ**!

ແຕ່ນັບເປັນການປຽບທຽບທີ່ໃຫ້**ພາບພົດດີ**!

ຖ້າເຮົາ**ຂັບຣົດຍົນແຫ່ງຊີວິດ**ຄັນນີ້ໄປເທິງຖນົນກວ້າງ

ທີ່ບໍ່ຄ່ອຍມີຣົດຄັນອື່ນໆກໍຄົງຈະ**ມ່ວນດີ** ແຕ່**ວ້າເຫວ່**

ແຕ່ຖ້າເຮົາຂັບໄປເທິງຖນົນທີ່ມີຣົດແລ່ນຂວັກໄຄວ່ໄປມາ

ເຮົາກໍຄົງຈະແທບ**ຫົວໃຈວາຍ** ເພາະບໍ່ຮູ້ວ່າເມື່ອໃດຈະໄປ**ຊົນ**ຖືກ**ຜູ້ໃດ**

ຫລືບໍ່ຮູ້ວ່າ**ໃຜ**ຈະຂັບມາຊົນ**ເຮົາ**ໃນ**ເວລາໃດ?**

ແມ່ນແລ້ວ! **ອຸບັດເຫດ**ຍ່ອມເກີດຂຶ້ນໄດ້ຕລອດເວລາ

ແມ້ແຕ່ໃນຍາມທີ່ເຮົາຄິດວ່າເຮົາໄດ້ລະມັດລະວັງຕົວດີທີ່ສຸດແລ້ວກໍຕາມ!

ອັນທີ່ຈິງຖ້າເຮົາແລະຄົນອື່ນໆຮ່ວມກັນລະມັດລະວັງ

ໂອກາດທີ່ຈະເກີດອຸບັດຕິດເຫດຄືຈະບໍ່ມີ!

ແຕ່ຖ້າວ່າເຮົາລະມັດລະວັງຕົວ ໃນຂນະທີ່ຜູ້ອື່ນບໍ່ລະວັງ

**ອຸບັດຕິເຫດ**ກໍຍັງຄົງຈະເກີດຂຶ້ນຈົນໄດ້!

ຢ່າງໃດກໍຕາມ

ຫາກ**ຣົດແຫ່ງຊີວິດ**ຂອງເຮົາຖືກຣົດຂອງຜູ້ອື່ນຊົນຈົນເສັຽຫາຍ

ທັງທີ່ເຮົາບໍ່ໄດ້ເຮັດຫຍັງຜິດເລີຍ ເພາະເຮົາ**ແລ່ນ**ຢູ່ໃນ**ເລນ**ດີໆ

ບໍ່ໄດ້ລ່ວງເສັ້ນ ຫລືຂ້າມເລນຂອງຜູ້ໃດ

ກໍຢ່າໃຫ້ເຮົາ**ໝົດອາລັຍ**ຕາຍຢາກໃນຊີວິດ!

ເຮົາຕ້ອງຄິດວ່າ ເຖິງເຮົາຈະຢູ່ໃນ**ກົດໃນກະຕິກາ**

ແຕ່ກໍອາດມີຜູ້**ບໍ່ຮັກສາກະຕິກາ**ໃຊ້**ຖນົນແຫ່ງຊີວິດ**ຮ່ວມກັບເຮົາຢູ່

ດ້ວຍເຫດນີ້ເອງ **ອຸບັດຕິເຫດ**ທີ່ເຮົາ **ບໍ່ຄາດຄິດ** ຈຶ່ງເກີດຂຶ້ນ!

ເຖິງປານນັ້ນກໍຕາມ ເຖິງວ່າໃນສ່ວນຂອງຜູ້ອື່ນ ເຮົາຈະຄວບຄຸມໄດ້ບໍ່ຫລາຍ ແຕ່ເຮົາກໍຄວນຈະ**ຄວບຄຸມ**ຫລື**ລະມັດລະວັງດູແລຣົດແຫ່ງຊີວິດ**ຂອງເຮົາໃຫ້ຢູ່ໃນສະພາບທີ່**ປອດພັຍ**ຢູ່ສເມີ!

ໃຫ້ເຮົາຫມັ່ນກວດກາວ່າ **ລໍ້ຣົດ**ຂອງເຮົາໄດ້ເຕີມ**ແຮງລົມ**ພ້ອມຫລືບໍ?
**ຖັງນ້ຳມັນ**ຂອງເຮົາເຕັມດ້ວຍ**ເຊື້ອເພີງ**ແຫ່ງ**ກຳລັງໃຈ**ແລ້ວຫລືຍັງ?
ບໍ່ວ່າຣົດຂອງເຮົາຈະຖືກ**ຂຶ້ນ**ຈົນ**ບຸ້ມ**ຫລື**ຫຍຸບ**ມາຫລາຍເທື່ອແລ້ວກໍຕາມ
ໃຫ້ເຮົາຍັງຄົງຮັກສາສະພາບຣົດ**ໃຫ້ຍັງຄົງແລ່ນຕໍ່ໄປ**
ຈົນກວ່າຈະເຖິງ**ອູ່ສ້ອມ** ຫລືເຖິງວາຣະແຫ່ງການ**ປ່ຽນຣົດ!**
ແຕ່**ຢ່າຟ້າວຖິ້ມຣົດ** ຢ່າຟ້າວ**ຖິ້ມຊີວິດ!**
ໃຫ້ເຮົາ**ຂັບຣົດຄັນນີ້ຕໍ່**ໄປດ້ວຍຄວາມຣະມັດຣະວັງ
ເທິງ**ທາງຫລວງແຫ່ງ**ຊີວິດ ແລະ**ອອກຫ່າງ**ຈາກຖນົນສາຍອັນຕຣາຍ
ເພາະພຣະທັມສຸພາສິດມີຄຳສອນໄວ້ວ່າ
**"ທາງຫລວງ**ຂອງຄົນຊອບທັມ ຫັນອອກຈາກຄວາມຊົ່ວຮ້າຍ
ບຸກຄົນຜູ້ລະມັດລະວັງ**ທາງ**ຂອງຕົນກໍສງວນຊີວິດຂອງເຂົາໄວ້" (ສພສ 16:17)
**ວັນນີ້ຂໍໃຫ້ຣົດແຫ່ງຊີວິດຂອງທ່ານນີ້ ບັນທຸກແຕ່ສິ່ງດີທີ່ມີຄຸນຄ່າ**
**ເພື່ອແຈກຢາຍໃຫ້ແກ່ຜູ້ໂດຍສານໃນຣົດຄັນນີ້**
**ແລະທຸກຄົນທີ່ເຂົ້າມາຊິດໃກ້.** **ດີຫລືບໍ?**

## "ຢ່າປ່ອຍໃຫ້ໂອກາດຫລຸດລອຍໄປໂດຍທີ່ທ່ານຍັງບໍ່ໄດ້ບອກຄົນທີ່ທ່ານຫ່ວງໃຍວ່າ ທ່ານຮັກເຂົາ!"

## 10. ບໍ່ປ່ອຍໂອກາດ

**ຄົນທົ່ວໄປຣຸ່ນກ່ອນໆ** ບໍ່**ມັກເວົ້າ**ກັບ**ຄົນໃກ້ຊິດວ່າຮັກເຂົາ!**
ຄົງເປັນເພາະບໍ່ເຄີຍຖືກສອນໃຫ້ເວົ້າ
ຈຶ່ງຮູ້ສຶກວ່າ**ຂັດເຂີນ**ເມື່ອຈະຕ້ອງເວົ້າ!
ໃນສະໄໝກ່ອນມີພໍ່ແມ່ບໍ່ຫລາຍຄົນທີ່ເວົ້າກັບລູກວ່າ
**"ພໍ່ຮັກລູກ"** ຫລື **"ແມ່ຮັກລູກ"** ໂດຍບໍ່ຂັດເຂີນ!
ເຊັ່ນດຽວກັນກັບໃນຄວາມສັມພັນລະຫວ່າງ**ສາມີ**ແລະ**ພັຣຍາ**
ມີພັຣຍາບໍ່ຫລາຍຄົນທີ່ຈະເວົ້າກັບສາມີວ່າ **"ຂ້ອຍຮັກເຈົ້າ"**
ຍິ່ງຜູ້ເປັນສາມີແລ້ວ ບໍ່ຕ້ອງເວົ້າເຖິງເລີຍວ່າ
ພັຣຍາຈະໄດ້ຍິນຄຳວ່າ **"ຂ້ອຍຮັກເຈົ້າ"** ອອກຈາກປາກຂອງເຂົາ!
ທັງທີ່ຈິງແລ້ວຄົນເຫລົ່ານັ້ນ**ຮັກ**ຊຶ່ງກັນແລະກັນ!
ພໍ່ແມ່ກໍ**ຮັກ**ລູກ!
ສາມີພັຣຍາກໍ**ຮັກ**ກັນ!
ແຕ່ເປັນຫຍັງ ຄຳວ່າ **"ຮັກ"** ຈຶ່ງຍາກຈະອອກຈາກປາກມາເຖິງກັນ?
ທັງທີ່**ຄວາມຮັກ**ແທ້ນັ້ນບໍ່ທຳອັນຕຣາຍຜູ້ໃດເລີຍ!

**"ຄວາມຮັກບໍ່ທຳອັນຕຣາຍເພື່ອນບ້ານເລີຍ ເຫດສັນນັ້ນ ຄວາມຮັກຈຶ່ງເປັນ**
**ການປະຕິບັດຕາມທັມບັນຍັດຢ່າງຄົບຖ້ວນ"** (ຣມ 13:10)

ບໍ່ຮູ້ເໝືອນກັນວ່າ ເຮົາໄປເອົາ**ວັທນະທັມ**
**ໃນການສະແດງຄວາມຊື່ນຊົມຄົນ**ມາຈາກໃສ?
ເພາະເຮົາມັກຈະກ່າວສະແດງຄວາມຮັກຫລືສະແດງຄວາມ**ຊື່ນຊົມ**
ຕໍ່ບຸກຄົນໃດບຸກຄົນນຶ່ງຢ່າງສະດວກປາກສະດວກໃຈ
ກໍຕໍ່ເມື່ອຜູ້ທີ່ເຮົາຈະກ່າວເຖິງນັ້ນໄດ້**ຕາຍ**ຈາກເຮົາໄປແລ້ວ!
ດັ່ງນັ້ນທີ່ຄົນເຮົາຈະເວົ້າຄຳວ່າ**ຮັກ**ໄດ້ງ່າຍກວ່າປົກກະຕິຄື
ໃນ**ງານສົພ**ຂອງຄົນທີ່ເຮົາ**ຮັກ!**
ທ່ານເອີຍ!
ທ່ານຕ້ອງການໃຫ້ຄົນທີ່ທ່ານ**ຮັກ**ແລະ**ຮັກ**ທ່ານບອກທ່ານວ່າ
ເຂົາຮັກທ່ານສະເພາະໃນງານສົພຂອງທ່ານເທົ່ານັ້ນຫລື?
ຄຳຕອບຄົງຈະເປັນຄຳວ່າ **"ບໍ່ແມ່ນ"**
ໃນທຳນອງດຽວກັນ
ຄົນທີ່ທ່ານຮັກ ເຂົາກໍຄົງຕ້ອງການຄຳວ່າ **"ຮັກ"** ອອກຈາກປາກຂອງທ່ານ
ໃນເວລານີ້ ທີ່ບໍ່ແມ່ນໃນ**ງານສົພ**ຂອງເຂົາເຊັ່ນກັນ!
ການບອກຄຳວ່າ "ຮັກ" ໃນງານສົພ ຈຶ່ງບໍ່ແມ່ນ **"ໂອກາດ"** ທີ່ເໝາະສົມ
ແຕ່ການບອກຄຳວ່າ "ຮັກ" ໃນຍາມທີ່ຜູ້ຮັບຕ້ອງການ
ໂດຍສະເພາະຢ່າງຍິ່ງໃນຂນະທີ່ເຂົາ **"ກຳລັງຈະເປັນສົພ"**
(ເພາະ**ຂາດກຳລັງໃຈ**) ຖືວ່າເປັນ **"ໂອກາດ"** ທີ່ຄວນຄວ້າໄວ້!
**ວ່າແຕ່ວ່າວັນນີ້ ທ່ານໄດ້ສວຍໂອກາດບອກຄົນທີ່ທ່ານຮັກແລ້ວຫລືຍັງວ່າ ທ່ານຮັກເຂົາ?**

"ຜິດກໍຄືຜິດ ເຖິງແມ່ນວ່າ ຜູ້ໃດເຂົາກໍເຮັດເໝືອນກັນ
ຖືກກໍຄືຖືກ ເຖິງແມ່ນວ່າ ບໍ່ມີຜູ້ໃດເຮັດກໍຕາມ!"

## 11. ເຖິງບໍ່ມີຜູ້ໃດເຮັດກໍຕາມ!

**ຂ້າພະເຈົ້າ**ມັກຄຳກ່າວຂອງພຣະເຢຊູຄຣິດທີ່ວ່າ
"**ແມ່ນ**ກໍວ່າ**ແມ່ນ** **ບໍ່ແມ່ນ**ກໍວ່າ**ບໍ່ແມ່ນ**
**ເວົ້າ**ແຕ່**ພຽງນີ້**ກໍພໍ
ຄຳເວົ້າເກີນນີ້ໄປມາຈາກຄວາມຊົ່ວ!" (ມທ 5:37)
ເຫດທີ່ມັກເພາະວ່າ
ໃນສັງຄົມປັດຈຸບັນ ຂ້າພະເຈົ້າບໍ່ຮູ້ເລີຍວ່າ
**ອັນໃດຈິງ** ຫລື **ອັນໃດບໍ່ຈິງ!**

ຄົນເຮົາເກັ່ງຂຶ້ນຫລາຍໃນການ
ເຮັດສິ່ງ**ເທັດ**ໃຫ້ເປັນ**ຈິງ**
ແລະກັບເຮັດໃຫ້ສິ່ງທີ່ **ຈິງ**ກາຍເປັນ**ເທັດ**ໄດ້!
ຜູ້ໃດມີ**ຝີມື**ຫລາຍກວ່າ ຜູ້ໃດມີ**ລີລາ**ດີກວ່າ
ຜູ້ໃດມີ**ພວກ**ຫລາຍກວ່າຜູ້ໃດມີ**ຕຳແໜ່ງ**ສູງກວ່າ
ຫລືຜູ້ໃດມີ**ເງິນ**ຫລາຍກວ່າ ກໍສາມາດ
ເຮັດ**ຜິດ**ໃຫ້ເປັນ**ຖືກ** ແລະເຮັດ**ຖືກ**ໃຫ້ເປັນ**ຜິດ**ໄດ້!
**ສັງຄົມ**ຈຶ່ງຢູ່ໃນສະພາວະທີ່**ໜ້າເປັນຫ່ວງ**ແທ້ໆ!
ໂດຍສະເພາະຢ່າງຍິ່ງ**ກະແສຄື້ນ**ຂອງໂລກນີ້
**ຮຸນແຮງ**ຍິ່ງກວ່າກະແສຄື່ນໃນທະເລ
ຜູ້ໃດຄິດຈະຂວາງຈະຕ້ານທານບໍ່ແມ່ນເຣື່ອງງ່າຍ!
ຢ່າງໃດກໍດີ.. ໂລກຍັງຄົງຕ້ອງການ**ຄົນກ້າຫານ**
ຄົນທີ່ພ້ອມຈະເດີນສວນ ຫລືເດີນໂຕ້ຄື້ນກະແສ (ທີ່ບໍ່ດີ)ນີ້ ຢູ່!
ເພາະຖ້າບໍ່ມີຄົນ**ກ້າຫານ**ເຊັ່ນນີ້**ເຫລືອ**ຢູ່
ບັນທັດຖານຂອງສັງຄົມຈະປ່ຽນໄປ!
ທີ່ໜ້າຢ້ານກົວນັ້ນກໍຄື ຖ້າຜູ້ໃດສ້າງກະແສຄື້ນແຫ່ງການຍອມຮັບໄດ້
ຄົນນັ້ນກໍຈະເປັນຜູ້ສາມາດກຳຊະຕາກັມທັງໝົດຂອງປະເທດ
ຫລືຂອງຊີວິດຄົນໃນສັງຄົມນັ້ນຈະໄດ້ກະແສທີ່ໜ້າເປັນຫ່ວງຄື
"ໃຜໆເຂົາກໍ**ມີ**ກັນ" ແລະ "ໃຜໆເຂົາກໍ**ເຮັດ**ກັນ"!
ດັ່ງນັ້ນ "ຂ້ອຍກໍຈະ**ມີ**ຫລືຈະ**ເຮັດ**ນຳ"!
ຖ້າຄິດກັນຢ່າງນີ້ **ເຮັດ**ກັນຢ່າງນີ້
**ສັງຄົມ**ກໍຈະ**ລົ້ມສລາຍ** ເໝືອນ
ສະພາບເສຖກິດແລະສັງຄົມທົ່ວໄປໃນຍຸກຟອງສະບູ່ແຕກ
ຖ້າເຮົາຍັງຕາມ **"ລັດທິເອົາຢ່າງ"** ເຊັ່ນນີ້ຕໍ່ໄປ
ຜົນທີ່ຕາມມາກໍຄົງບໍ່ແຄ້ວເປັນດັ່ງນີ້..
"ໃຜໆເຂົາກໍ**ທຸກ**ກັນ.."
ດັ່ງນັ້ນ ຂ້ອຍກໍ**ຂໍທຸກ**ນຳດ້ວຍ!
"ໃຜໆເຂົາກໍ**ລົ້ມຈົມ**ກັນ"
ດັ່ງນັ້ນຂ້ອຍກໍ**ຂໍລົ້ມຈົມ**ນຳດ້ວຍ!
***ພີ່ນ້ອງທີ່ຮັກ! ຢ່າເປັນເຊັ່ນນີ້ເລີຍ!!***
ໃຫ້ເຮົາຢືນຢັດເພື່ອສິ່ງ**ທີ່ດີ**ແລະ**ຖືກຕ້ອງ**ດີກວ່າ!
ໃຫ້ເຮົາກ້າຫານທີ່ຈະເວົ້າວ່າ
**"ຜິດ ກໍຄື ຜິດ ເຖິງແມ້ວ່າ ໃຜໆເຂົາກໍເຮັດກັນກໍຕາມ**
ແລະ **ຖືກ** ກໍຄື **ຖືກ** ເຖິງແມ້ວ່າ **ໃຜໆເຂົາບໍ່ຢາກເຮັດກັນ ກໍຕາມ"**

ຖ້າເຮົາຄິດເຊັ່ນນີ້ແລະທຳຕາມນີ້
ສັງຄົມຂອງເຮົາຈະດີຂຶ້ນຢ່າງແນ່ນອນ!
ແລະເຖິງແມ້ວ່າ ທ່ານຈະຮູ້ສຶກໂດດດ່ຽວທີ່ຕ້ອງຢືນຢັດເຊັ່ນນີ້
ແຕ່ຖ້າທ່ານຢືນຢັດໄດ້ດົນນານພຽງພໍ
ຈະມີຄົນອີກຫລວງຫລາຍກ້າວອອກມາຢືນຄຽງຂ້າງທ່ານ
ຈາກນັ້ນ ກະແສ "ຜິດ ຄື ຜິດ ແລະ ຖືກ ຄື ຖືກ"!
ກໍຈະເກີດຂຶ້ນເພາະທ່ານເປັນຜູ້ປຸກກະແສ!
ວ່າແຕ່ທ່ານຈະຢືນຢັດເຮັດໃນສິ່ງດີທີ່ຄວນເຮັດນີ້ຕໍ່ໄປ
ແມ້ວ່າບໍ່ມີຜູ້ໃດເຂົາທຳກັນຫລືບໍ?
ເຊີນຕອບແດ່!

## "ເຮົາທຳດີຕໍ່ຄົນອື່ນ ຢ່າຈຳ! ຄົນທຳດີຕໍ່ເຮົາ ຢ່າລືມ! ຄົນອື່ນທຳຮ້າຍຕໍ່ເຮົາ ຢ່າຈຳ! ເຮົາທຳຮ້າຍຕໍ່ຄົນອື່ນ ຢ່າລືມ! ຟ້າວຂໍອະພັຍແລະຄືນດີໂດຍໄວ!"

## 12. ຢ່າລືມ ຢ່າຈຳ!

### ຄົນເຮົານີ້ແປກ!

ສິ່ງໃດຄວນລືມ ກໍມັກຈະໄປຈຳ!
ສິ່ງໃດທີ່ຄວນຈຳ ກໍດັນໄປລືມ!
ບັນຫາວຸ້ນໆຈຶ່ງມັກຈະເກີດຂຶ້ນເປັນປະຈຳ!
ຫລາຍເທື່ອເຮົາຮູ້ສຶກຂົມຂື່ນ ເພາະຄົນທີ່ເຮົາທຳດີໃຫ້
ບໍ່ທຳດີຕໍ່ເຮົາຕອບກັບມາເປັນການຕອບແທນ!
ເຮົາຄິດວ່າເຂົາໜ້າຈະຢູ່ຝ່າຍເຮົາ ຊ່ວຍເຮົາ ຫລືເຮັດ
ບາງສິ່ງບາງຢ່າງທີ່ເຮົາມັກເປັນການຕອບສນອງໃຫ້ແກ່ເຮົາ
ແຕ່ກໍບໍ່ເປັນເຊັ່ນນັ້ນ
ເຮົາກໍເລີຍຄຽດ!
ດີບໍ່ດີອາດຈະປ່ຽນຈາກຄວາມຮູ້ສຶກດີໆ
ທີ່ເຄີຍມີຕໍ່ກັນມາກາຍເປັນຄວາມຄຽດແຄ້ນຊິງຊັງກໍເປັນໄດ້!
ຈາກທີ່ເຄີຍມີທັສນະຄະຕິທີ່ດີຕໍ່ເຂົາ
ມາກາຍເປັນອະຄະຕິທີ່ຮຸນແຮງແທນທີ່
ຈາກທີ່ເຄີຍມີໃຈໃຝ່ຊ່ວຍເຫລືອ
ມາກາຍເປັນຈິດທີ່ຄິດມຸ່ງຮ້າຍທຳລາຍແທນ

ດີບໍ່ດີ ອາດຮູ້ສຶກ**ໝົດກຳລັງໃຈ**ທີ່ຈະເຮັດດີໄປເລີຍ!

**ຄວາມຮູ້ສຶກ** ຫລື**ຄວາມຄິດ**ເຊັ່ນນີ້

**ບໍ່ດີ**ຕໍ່ສຸຂພາບທັງ**ກາຍ**ຈິດແລະ**ວິນຍານ**ຂອງເຮົາ!

ດ້ວຍເຫດນີ້ ກ່ອນທີ່ເຮົາຈະ**ທຳດີ**ຕໍ່ຜູ້ໃດ

ຈົ່ງຖາມຕົວຂອງເຮົາເອງກ່ອນວ່າ ເຮົາສາມາດ**ທຳດີ**ຕໍ່ເຂົາ

**ໂດຍບໍ່ຫວັງສິ່ງຕອບແທນໄດ້ບໍ?**

**ຖ້າບໍ່ໄດ້ ກໍຢ່າທຳ** ເພາະເຮັດແລ້ວຈະທຸກທັງ 2 ຝ່າຍ

ການ**ທຳດີ**ທີ່ມີ**ຂໍ້ແລກປ່ຽນ**ຫລືຫວັງຜົນປໂຍດ

ເຮົາບໍ່ເອີ້ນວ່າ **"ການກະທຳດີ!"**

ແຕ່ເອີ້ນວ່າ **"ການແລກປ່ຽນທາງການຄ້າ!"**

ເພາະການຄ້າຂາຍຫລືການທຳທຸຣະກິດຈະມຸ່ງຫວັງກຳໄຣບໍ່ແມ່ນຂາດທຶນ!

ແຕ່ການ**ກະທຳດີ** ຄື ການຍອມ**ຂາດທຶນ**

ເພື່ອ**ສະວັດດີພາບຂອງຜູ້ອື່ນ!**

ຖ້າຍອມ**ຂາດທຶນເພື່ອຜູ້ໃດບໍ່ໄດ້**

ເຮົາກໍ**ບໍ່ມີທາງໄດ້ກະທຳດີ!**

ນອກຈາກນີ້..

ຜູ້ໃດ**ທຳດີຕໍ່ເຮົາ ຢ່າ**ໃຫ້ເຮົາ**ລືມບຸນຄຸນ**ນັ້ນ!

ແຕ່**ຢ່າຕອບແທນຄຸນຄວາມດີ**

ດ້ວຍ**ການກະທຳ ສິ່ງຊົ່ວຮ້າຍໃດໆ** ທີ່ຜູ້ມີພຣະຄຸນນັ້ນຕ້ອງການ

ເພາະຖ້າເຮັດເຊັ່ນນັ້ນ ຢ່າຮັບບຸນຄຸນຈະດີກວ່າ!

ເພາະ**ຕາຍ**ໂດຍ**ບໍ່ຮັບບຸນຄຸນ** ກໍດີກວ່າ

**ມີຊີວິດ**ຢູ່ເໝືອນຢູ່**ໃນນາຣົກ**

ແລະເມື່ອ**ຕາຍ**ແລ້ວ ຍັງຕ້ອງລົງໄປ**ນາຣົກ**ແທ້ໆ!

ບໍ່ຜິດດອກທີ່ເຮົາຈະ**ບໍ່ຕາມໃຈຜູ້ມີພຣະຄຸນ**ຕໍ່ເຮົາ

ຖ້າເຂົາຮຽກຮ້ອງໃຫ້ເຮົາເຮັດໃນສິ່ງ**ທີ່ຂັດ**ກັບ**ມະໂນທັມ**

**ຈັນຍາບັນ** ຫລື **ສິນທັມ!**

ແຕ່ຢ່າໃຫ້ເຮົາເປັນ**ຄົນທີ່ລືມພຣະຄຸນຄົນ!**

ໃຫ້ເຮົາ**ທຳດີ**ຕໍ່ຜູ້**ທີ່ດີຕໍ່ເຮົາ**ໃຫ້**ຫລາຍທີ່ສຸດ**ແລະ**ດີທີ່ສຸດ**

ເທົ່າທີ່ຈະເຮັດໄດ້ ໃນວິຖີທາງທີ່ມະໂນທັມຂອງເຮົາບໍ່ຟ້ອງ!

ໃນຂນະດຽວກັນ**ຢ່າຈົດຈຳສິ່ງຊົ່ວ** ທີ່ບາງຄົນກະທຳຜິດຕໍ່ເຮົາ

ໃຫ້ເຮົາ**ຍົກໂທດ**ໃຫ້ແກ່ເຂົາ ໃຫ້ເຮົາ**ກິນອີ່ມ**ແລະ**ນອນຫລັບ**ໃຫ້ສະບາຍ

ຢ່າໄປຍິນດີໃຈກັບສິ່ງຊົ່ວທີ່ເຂົາເຮັດຕໍ່ເຮົາ

ເພາະ**ຜົນກັມ**ນັ້ນຈະ**ສນອງ**ເຂົາເອງ!

ໃນທາງກົງຂ້າມ

ຫາກເຮົາທຳຊົ່ວ ຫລື ທຳຜິດຕໍ່ຄົນອື່ນ

ຢ່າໃຫ້ເຮົາເຮັດເສີຍຢູ່ເໝືອນທອງບໍ່ຮູ້ຮ້ອນ ໃຫ້ເຮົາຟ້າວໄປຫາຄູ່ກໍລະນີ

**ຂໍອະພັຍແລະຮີບຄືນດີກັບເຂົາໂດຍໄວ!**

**ເພາະວ່າ ການລົດສັດຕຣູລົງໄປ 1 ຄົນ**

**ແລະເພີ່ມມິດອີກ 1 ຄົນ**

**ເປັນນະໂຍບາຍຂອງຊີວິດທີ່ດີທີ່ສຸດຂໍ້ນຶ່ງ**

**"ເມື່ອທາງຂອງມະນຸດເປັນທີ່ໂປດປານແກ່ພຣະເຈົ້າ ແມ້ສັດຕຣູຂອງເຂົານັ້ນ**

**ພຣະອົງກໍຊົງກະທຳໃຫ້ຄືນດີກັບເຂົາໄດ້"** (ພສສ 127:2) **ແມ່ນບໍ່?**

# IV. ອຸປສັກ ຄືຄວາມສຳເຣັດທີ່ສົ່ງມາຫາທ່ານ!! ຈົ່ງບຸກບັ່ນ ແລ້ວທ່ານຈະເຫັນຜົນໃນຊີວິດ!!

## 1. ອຸປສັກ!!

- ເຮົາບໍ່ຕ້ອງການອຸປສັກ ແຕ່ເບິ່ງເໝືອນວ່າ ອຸປສັກກັບຕ້ອງການເຮົາ.
  ເຮົາບໍ່ຕ້ອງການຜະເຊີນໜ້າກັບອຸປສັກ ແຕ່ເບິ່ງເໝືອນວ່າ
  ອຸປສັກມັກຕ້ອງການທີ່ຈະຜະເຊີນໜ້າກັບເຮົາ.
  ເຮົາຕ້ອງການໜີໃຫ້ໄກຈາກອຸປສັກ
  ແຕ່ກັບເບິ່ງເໝືອນວ່າ ອຸປສັກເຝົ້າຕິດຕາມໄກ້ຊິດເຮົາຕລອດເວລາເໝືອນເງົາຕາມໂຕ.

## 2. ຄວາມສຳເຣັດ!!

- ເຮົາຕ້ອງການຄວາມສຳເຣັດ ແຕ່ເບິ່ງເໝືອນວ່າຄວາມສຳເຣັດກັບບໍ່ຕ້ອງການເຮົາ.
  ເຮົາຕ້ອງການຢາກເຊື້ອເຊີນຄວາມສຳເຣັດມາເປັນແຂກພິເສດໃນບ້ານຂອງເຮົາ
  ແຕ່ຄວາມສຳເຣັດນັ້ນກັບໜີໜ້າໜີຕາເຮົາໄປ.

## 3. ຄົນທີ່ມອງໂລກໃນແງ່ດີ!!

- ***"ຄົນທີ່ເບິ່ງໂລກໃນແງ່ດີ ຄືຄົນທີ່ທຳໃຫ້ເກີດສິ່ງທີ່ດີທີ່ສຸດ ໃນຍາມທີ່ເຂົາໄດ້ຮັບສິ່ງທີ່ຊົ່ວຮ້າຍທີ່ສຸດ (ຕົກຕ່ຳທີ່ສຸດ)".***
- ທ່ານເຄີຍມອງຜ່ານແວ່ນຕາດຳຂອງທ່ານຫລືບໍ່?

ແນ່ນອນແລ້ວ ຄົນທີ່ໃສ່ແວ່ນຕາດຳ ຈະຫລຽວເຫັນທຸກສິ່ງເປັນສີດຳໄປໝົດ!

ຄົນທີ່ເບິ່ງໂລກໃນແງ່ຮ້າຍ ຫລືແງ່ລົບກໍເປັນເຊັ່ນກັນ ເຂົາຈະເບິ່ງໂລກດ້ວຍອັກຄະຕິແຫ່ງຄວາມຢ້ານກົວ ຫລືວິຕົກກັງວົນ ຈົນເຫັນພາບທຸກຢ່າງເໝືອນມືດມົວ ທຶດທູ່ ແລະສິ້ນຫວັງໄປໝົດ!

ຄົນທີ່ມອງໂລກດ້ວຍສາຍຕາເຊັ່ນນີ້ມັກຈະໝົດກຳລັງໃຈໃນການກ້າວໄປຂ້າງໜ້າ.

ຫລາຍຄົນອາດຂໍຫລົບເຂົ້າຂ້າງທາງ, ແລະບາງຄົນກໍເດີນຢ້ອນຄືນກັບຫລັງ

ເວົ້າງ່າຍໆກໍຄືວ່າ ຈະໄປໃສກໍໄດ້ ຍົກເວັ້ນແຕ່ການເດີນກ້າວໄປ ຂ້າງໜ້າ!

ແຕ່ບາງຄົນກັບຍິ່ງຮ້າຍທີ່ບໍ່ກ້າແມ້ແຕ່ຈະຍ່າງກັບຄືນທາງເດີມ!

ສະຖານະການແບບນີ້ ຈະກາຍເປັນສິ່ງທີ່ ກືນບໍ່ເຂົ້າ ຄາຍບໍ່ອອກຂອງບຸກຄົນນັ້ນໆ!

ແຕ່ສຳຣັບຄົນທີ່ມອງໂລກໃນແງ່ດີ ຫລືໃນແງ່ສົມ ຄືຄົນທີ່ມອງໂລກໃນແງ່ສ້າງສັນ!

ຄົນແບບນີ້ຈະເປັນຄົນທີ່ບໍ່ຢ້ານອຸປສັກ ຫລືບັນຫາທີ່ຢືນຕັນໜ້າເຂົາຢູ່!

ລາວຈະສາມາດປ່ຽນອຸປສັກນັ້ນ ໃຫ້ກາຍເປັນອຸປກອນ ແລະປ່ຽນບັນຫາ

ໃຫ້ກາຍເປັນປະຕິຫານດ້ວຍປັນຍາທີ່ມາຈາກສວັນ!

ຄົນທີ່ມອງໂລກໃນແງ່ສ້າງສັນ ຈະສັນສ້າງແຕ່ສິ່ງທີ່ດີໆ!

ຄົນເຫລົ່ານີ້ ຄືຄົນທີ່ມອງເບິ່ງນ້ຳໂສໂຄກໃນຄອງ ຫລືແມ່ນ້ຳທີ່ໂສໂຄກ ກາຍເປັນນ້ຳທານທີ່ສົດໃສ!

ຄົນເຫລົ່ານີ້ ຄືຄົນທີ່ເຊື່ອໝັ້ນວ່າ

ຈະຕ້ອງມີວິທີການປ່ຽນແປງນ້ຳໂສກໂຄກເຫລົ່ານັ້ນໃຫ້ກາຍເປັນນ້ຳໃສໄຫລເຢັນດີໄດ້ອີກ!

ຄົນທີ່ມອງໂລກໃນແງ່ດີ ຄືຄົນທີ່ທຳໃຫ້ເກີດສິ່ງທີ່ດີທີ່ສຸດຂຶ້ນມາ

ເຖິງແມ່ນຍາມທີ່ລາວໄດ້ຮັບ ຫລືຜະເຊີນໜ້າກັບສິ່ງຊົ່ວຮ້າຍປານໃດກໍຕາມ!

**ວັນນີ້ ທ່ານຄິດວ່າ ທ່ານເປັນຄົນປະເພດໃດ?**

ລູກາ 6:27-29 "..ຈົ່ງຮັກສັດຕຣູຂອງທ່ານ..ຈົ່ງອະທິຖານເພື່ອຜູ້ທີ່ຂົ່ມເຫັງທ່ານ.."

# 4. ກຳລັງໃຈທີ່ບໍ່ເຄີຍດັບ!!

• ***"ແສງໄຟອັນນ້ອຍທີ່ສຸດຍັງສາມາດສ່ອງສວ່າງໃນກາງຄືນທີ່ມືດມິດທີ່ສຸດໄດ້"***

ທຽນທີ່ໄກ້ຈະດັບ ຫລືໄຕ້ບໍ່ຕິດ ກັບຊີວິດທີ່ໝົດກຳລັງໃຈຈະມີສະພາບທີ່ບໍ່ແຕກຕ່າງຫຍັງກັນ!

ນັ້ນຄືການມີແຕ່ຄວາມງາມ ແຕ່ບໍ່ມີປະໂຫຍດ!

ແຕ່ກຳລັງໃຈເໝືອນກັບທຽນທີ່ບໍ່ເຄີບດັບມອດ ຈະເປັນເຄື່ອງປະດັບສຳຄັນທີ່ສຸດໃນຊີວິດ!

ຄົນທີ່ມີກຳລັງໃຈ ຈະບໍ່ຫວັ່ນໄຫວ ຫລືຢ້ານກົວຕໍ່ຄວາມມືດມົວແຫ່ງຊີວິດ

ແຕ່ກົງກັນຂ້າມ ລາວຈະຟັນຜ່າມຸ່ງໝັ້ນນຳຊີວິດຂອງລາວໄປສູ່ເປົ້າໝາຍຢ່າງກ້າຫານ!

ຄົນບໍ່ມີກຳລັງໃຈ ຄືຄົນທີ່ທໍ້ໃຈ ຄືເປັນຄົນທີ່ບໍ່ມີກຳລັງໃຈສູ້!

ດ້ວຍເຫດນີ້ຄົນທີ່ທໍ້ໃຈ ຈຶ່ງມັກຈະຮູ້ສຶກທໍ້ແທ້ໃຈ ແລະທໍ້ຖອຍໃນທີ່ສຸດ

ຄົນແບບນີ້ມັກຈະຢຸດຢູ່ກັບທີ່ ແລະບໍ່ໄປເຖິງໃສ!

ແຕ່ຄົນທີ່ມີກຳລັງໃຈຈະບໍ່ເປັນແບບນັ້ນ!

ລາວຈະມີຄວາມເຊື່ອໝັ້ນໃນເປົ້າໝາຍ ແລະຈຸດຢືນແຫ່ງຊີວິດຂອງຕົນ

ແລະກ້າວໄປຂ້າງໜ້າຢ່າງກ້າຫານ! ຄົນທີ່ທໍ້ຖອຍໃຈ

ຈະບໍ່ເປັນຄົນທີ່ກ້າຫານໃນການຜະເຊີນກັບວິກິດການແຫ່ງຊີວິດ

ຫລືຄວາມຍຸ້ງຍາກອື່ນໆທີ່ເຂົ້າມາຫາຕົນ.

**ທ່ານບໍ່ຄວນເປັນຄົນທີ່ທໍ້ໃຈ!**

ແມ້ວ່າຊີວິດຂອງທ່ານຈະບອບບາງເໝືອນກັບທຽນເຫລັ້ມນ້ອຍໆ

ແຕ່ຕາບໃດທີ່ທ່ານຍັງມີກຳລັງໃຈຢູ່ ຕາບນັ້ນຊີວິດຂອງທ່ານຍັງຈະມີຄວາມຫວັງສເມີ!
ດັ່ງນັ້ນ ທ່ານບໍ່ຕ້ອງກັງວົນຈົນເກີນໄປວ່າອ້ອມຮອບຂ້າງຂອງທ່ານຈະມືດມົນຫລາຍປານໃດ
ຂໍພຽງທ່ານແນ່ໃຈວ່າ ທ່ານຍັງມີກຳລັງໃຈຢູ່
ກຳລັງໃຈນີ້ຈະປຽບເໝືອນແສງໄຟທີ່ສ່ອງຢູ່ ຖ້າຫາກມັນບໍ່ດັບມືດໄປ
ກໍຖືວ່າ ເປັນການພຽງພໍສຳຣັບທ່ານທີ່ຈະກ້າກ້າວ ສູ່ການຜະເຊີນໜ້າກັບສິ່ງຕ່າງໆ!
ດານີເອນ 12: 3 "ບັນດາຄົນທີ່ສລາດ ຈະສ່ອງແສງເໝືອນແສງຟ້າ ແລະບັນດາຜູ້ທີ່ໃຫ້ຄົນຈຳນວນ
ຫລາຍໄດ້ມາສູ່ຄວາມຊອບທັມ ຈະສ່ອງແສງເໝືອນດວງດາວຊົ່ວນິດນິຣັນ"

# 5. ດ່ານສຳຄັນກ່ອນການຟັນຝ່າທັງໝົດ ຄືດ່ານແຫ່ງຄວາມສຳເຣັດ!!

- ***"ອຸປສັກ ຄືສິ່ງທີ່ຄວາມສຳເຣັດສົ່ງມາລອງໃຈທ່ານ ຫາກທ່ານສາມາດເອົາຊະນະມັນໄດ້ ຄວາມສຳເຣັດທັງຫລາຍກໍຈະຕາມມາທັນທີ"***

ໃຜໆກໍຢາກປະສົບຄວາມສຳເຣັດ!
ແຕ່ບໍ່ມີໃຜທີ່ຢາກຜະເຊີນໜ້າກັບອຸປສັກ!
ຢ່າງໃດກໍຕາມ ຄວາມຈິງແລ້ວ ບໍ່ມີຄວາມສຳເຣັດໃດທີ່ປາສຈາກອຸປສັກ!
ຄຳວ່າ**"ອຸປສັກ"** ຕາມປື້ມວັຈນານຸກົມແລ້ວ ແປວ່າ **"ສິ່ງຂັດຂ້ອງ, ຄວາມຂັດຂ້ອງ, ເຄື່ອງກີດຂວາງ"**
ຊີວິດຂອງເຮົາເໝືອນກັບນັກກິລາທີ່ແຂ່ງແລ່ນຂ້າມຮົ້ວ ຫລືກະໂດດຂ້າມເຄື່ອງກີດຂວາງ!
ຖ້າຫາກສາມາດກະໂດດຂ້າມໄດ້ ຫລືຂ້າມແຕ່ຫາກເຕະສະດຸດລົ້ມລົງ
ແຕ່ບໍ່ຍອມແລ່ນຕໍ່ໄປ ຜູ້ນັ້ນຕ້ອງກາຍເປັນຜູ້ເສັຍຊັຍຢ່າງແນ່ນອນ!
ແຕ່ຖ້າຫາກກະໂດດຂ້າມເຄື່ອງກີດຂວາງ ຫລືອຸປສັກນັ້ນໄປໄດ້ຈົນເຖິງຫລັກຊັຍ
ຫລືຫາກກະໂດດບໍ່ຫວິດລົ້ມລົງ ແຕ່ຍັງລຸກຂຶ້ນແລ່ນຕໍ່ໄປ
ຜູ້ນັ້ນຈະຕ້ອງໄປເຖິງຫລັກຊັຍແນ່ນອນ!
ໃນການແຂ່ງຂັນກິລາ ມັກຈະມີຣາງວັນຢູ່ສາມຣາງວັນເທົ່ານັ້ນເອງ
ຄືຜູ້ຊະນະເລີດ ຜູ້ຊະນະທີສອງ ແລະທີສາມ ແຕ່ກິລາແຫ່ງຊີວິດທີ່ພຣະເຈົ້າກຳໜົດ
ທຸກຄົນທີ່ສາມາດແລ່ງເຂົ້າສູ່ຫລັກຊັຍໄດ້ ລ້ວນແຕ່ເປັນຜູ້ຊະນະ ແລະໄດ້ຮັບຣາງວັນກັນທັງນັ້ນ!
ຜູ້ທີ່ເສັຍຊັຍ ຄືຜູ້ທີ່ບໍ່ສາມາດກະໂດດຂ້າມອຸປສັກ
ຫລືກະໂດດຂ້າມອຸປສັກມາໄດ້ຫລາຍອັນແລ້ວ
ແຕ່ກັບຍອມແພ້ໃຫ້ອຸປສັກໃດນຶ່ງໃນເວລາຕໍ່ມາ
ຊຶ່ງຜູ້ກ່ຽວບໍ່ຍອມທີ່ຈະແລ່ນຕໍ່ໄປ ຫລືກະໂດດຂ້າມອີກຕໍ່ໄປ
ໜີ້ຊ່າງເປັນໜ້າເສັຍດາຍ!
ທ່ານອາຈານເປົາໂລ ນັກກິລາແຫ່ງຊີວິດທີ່ຍິ່ງໃຫຍ່ໄດ້ມອງເຫັນວ່າ
ອຸປສັກນັ້ນ ແທ້ຈິງແລ້ວຄືຕົວທົດສອບທີ່ຄວາມສຳເຣັດໄດ້ສົ່ງມາໃຫ້ເຮົາພິຊິດມັນ!
ຫາກເຮົາມີຣະບຽບການທີ່ເອົາຊະນະອຸປສັກນັ້ນໄດ້

ຄວາມສຳເຣັດກໍຈະປາກົດຂຶ້ນມາແກ່ເຮົາ.
ແນວໃດກໍຕາມ ໃນເວລາທີ່ທ່ານກຳລັງມຸ້ງໝັ້ນ ພິຊິດອຸປສັກຂອງທ່ານ
ກໍຢ່າໃຫ້ຊີວິດທ່ານ
ໄດ້ກາຍເປັນອຸປສັກກີດຂວາງທາງເດີນຊີວິດຄົນອື່ນເລີຍ
ແລ້ວຄວາມສຸກຈະເກີດຂຶ້ນກັບທ່ານ ແລະທັ້ງຄອບຄົວຂອງທ່ານດ້ວຍ!!

1 ໂກຣິຣໂທ 9: 25-26 "ຝ່າຍນັກກິລາທຸກຄົນກໍເຄັ່ງຂັດໃນຣະບຽບ ເຂົາທຳຢ່າງນັ້ນກໍເພື່ອຈະໄດ້ມົງກຸດໃບໄມ້ທີ່ຣ່ວງໂຣຍໄດ້ ແຕ່ເຮົາເອງກະທຳເພື່ອເຮົາຈະໄດ້ມົງກຸດທີ່ບໍ່ມີວັນຫ່ຽວແຫ້ງ ສ່ວນຂ້າພະເຈົ້າແລ່ນແຂ່ງຂັນຢ່າງມີເປົ້າໝາຍ ຂ້າພະເຈົ້າບໍ່ໄດ້ຕໍ່ສູ້ຢ່າງໝັກມວຍຊົກລົມ"

# 6. ສັນຍານໝາຍຂອງຄວາມສຳເຣັດ!!

- ***"ຄວາມສຳເຣັດຄືການທຸ້ມເທຄວາມພະຍາຍາມ ເພື່ອຈະຈັດການກັບອຸປສັກທີ່ເປັນຂວາກໜາມແຫ່ງຊີວິດໄດ້ຢ່າງຄ່ອງແຄ້ວ ແລະຕອບສນອງຕໍ່ຄວາມຕ້ອງການຂອງຄົນອື່ນ"***
- ໃຜໆກໍຕ້ອງການຄວາມສຳເຣັດ ແຕ່ມັກຈະເຂັດຫລາບ ຫລືຖອຍໜີເມື່ອພົບກັບອຸປສັກ!

ຄວາມລົ້ມເຫລວມັກຈະເກີດຂຶ້ນກັບບຸກຄົນຜູ້ທີ່ບໍ່ສາມາດຮັບມື
ຫລືຟັນຜ່າກັບອຸປສັກທີ່ມາຂັດຂວາງ!
ອຸປສັກນີ້ ອາດເປັນເໝືອກັບພູເຂົາໜ່ວຍໃຫຍ່ເກີນກວ່າທີ່ຈະຊຸກຄອນໄດ້
ຫລືອາດເປັນເໝືອນພູໜ່ວຍນ້ອຍໆທີ່ສາມາດເດີນໄຕ່ໄປມາໄດ້ຢ່າງສະບາຍ!
ທຸກສິ່ງນີ້ຂຶ້ນຢູ່ກັບຈຸດມອງເບິ່ງອຸປສັກນັ້ນຂອງທ່ານ!
ເໝືອນດັ່ງທ່ານ ເດວິດ ແລະຍັກ ໂກເລອາດ!
ໂກເລອາດ ເປັນຄົນກ້າມໃຫຍ່ຂອງຊາວຟີລິສຕິນ
ຊຶ່ງໃນສາຍຕາຂອງກະສັດ ຊາອູນ ແລະຊາວອິສຣາເອນແລ້ວ
ໂກເລອາດເປັນເໝືອນພູເຂົາໜ່ວຍໃຫຍ່ທີ່ບໍ່ສາມາດໂຄ່ນລົງໄດ້!
ແຕ່ໃນສາຍຕາຂອງ ເດວິດ ຊຶ່ງເປັນເດັກລ້ຽງແກະຜູ້ນ້ອຍໆຄົນນຶ່ງ
ແຕ່ເປັນຜູ້ທີ່ສັດທາໃນພຣະເຈົ້າຜູ້ຍິ່ງໃຫຍ່ ກັບມອງເຫັນຍັກໂກເລອາດນັ້ນແບບກົງກັນຂ້າມ!
ເດວິດ ເຫັນວ່າ ໂຕໃຫຍ່ໆແບບນັ້ນບໍ່ພຽງແຕ່ບໍ່ເປັນຕາຢ້ານເທົ່ານັ້ນ
ແຕ່ກໍຍັງເປັນເປົ້າຍິງທີ່ບໍ່ສາມາດເຮັດໃຫ້ພາດໄດ້!
ເຖິງແມ່ນ ເດວິດຈະເປັນເດັກໜຸ່ມນ້ອຍກໍຕາມ ແຕ່ກໍບໍ່ຂາດຄວາມພະຍາຍາມ
ແລະໄດ້ທຸ້ມເທກຳລັງທີ່ມີຢູ່ຈັດການກັບຄູ່ຕໍ່ສູ້ໄດ້ຢ່າງມີຊັຍ!
ດ້ວຍຄວາມໝັ້ນໃຈໃນພຣະເຈົ້າ ເດວິດໄດ້ເອົາກ້ອນຫີນໃສ່ໝາກກັ່ນຖຸນ
ຍິງໃສ່ໜ້າພາກຂອງຍັກໂກເລອາດຢ່າງບໍ່ພາດເປົ້າ
ເຮັດໃຫ້ຍັກນັ້ນລົ້ມຕາຍລົງທັນທີ!
ຫາກທ່ານມອງອຸປສັກແບບສາຍຕາຂອງເດວິດ

ທ່ານຈະສາມາດຮັບມືກັບອຸປສັກນັ້ນໄດ້ເປັນຢ່າງດີ!

**ຫາກບໍ່ເຊື່ອກໍລອງເບິ່ງໄດ້!**

1 ຊາມູເອນ 17: 44-47 "..ທ່ານມາຫາຂ້າພຣະເຈົ້າດ້ວຍດາບ ດ້ວຍຫອກ ແລະດ້ວຍຫອນ ແຕ່ຂ້າພຣະເຈົ້າມາຫາທ່ານໃນນາມຂອງພຣະເຈົ້າຜູ້ຊົງຣິດ ພຣະເຈົ້າຂອງກອງທັບອິສຣາເອນ ຜູ້ຊຶ່ງທ່ານໄດ້ທ້າທາຍ.. ເພາະວ່າການຮົບຄັ້ງນີ້ເປັນຂອງພຣະເຈົ້າ ພຣະອົງຈະຊົງມອບທ່ານໄວ້ໃນມືຂອງເຮົາ.."

# 7. ຄວາມສຳເຣັດຢູ່ແຄ່ເອື້ອມມື!!

- ***"ຄົນສ່ວນຫລາຍລົ້ມເຫລວໃນຊີວິດ***
  ***ໂດຍບໍ່ຄິດເຖິງວ່າ ພວກເຂົາຢູ່ໃກ້ໆຄວາມສຳເຣັດຫລາຍພຽງໃດ***
  ***ໃນຍາມທີ່ພວກເຂົາຍອມແພ້ນັ້ນ"***
- ທ່ານບໍ່ສາມາດພົບຄວາມສຳເຣັດໄດ້ຫາກທ່ານມີຄວາມທໍ້ຖອຍ
  ຫລືເກງກົວຕໍ່ອຸປສັກຈົນເກີນໄປ!

ຫລາຍຄົນບໍ່ສາມາດຊີມຣົດແຫ່ງຄວາມສຳເຣັດໄດ້
ເພາະການຍອມແພ້!
ທ່ານຕ້ອງຄວບຄຸມສະຕິ ແລະຮັກສາອຸດົມການ
ໃນການເປັນຄົນຊື່ສັດສຸດຈະຣິດ
ແລະໃຫ້ມີຄວາມເປັນທັມຢູ່ໃນຕົວສເມີ!
ຄັ້ງນຶ່ງ ທ່ານ ໂມເຊໄດ້ນຳຊາວອິສຣາເອນອອກຈາກປະເທດເອຢິບ
ແລະກຳລັງຂ້າມແມ່ນໍ້າຈໍແດນເຂົ້າສູ່ດິນແດນປາແລສຕາຍ
ແຕ່ທ່ານຮູ້ວ່າ ທ່ານຈະຕ້ອງເສັຽຊີວິດກ່ອນຈະທຳໜ້າທີ່ຢ່າງສຳເຣັດບໍຣິບູນ.
ທ່ານໄດ້ມອບໜ້າທີ່ໃຫ້ກັບຂຸນເສິກຄູ່ໃຈຂອງທ່ານ ຄືທ່ານ ໂຢຊວຍ.
ສິ່ງນີ້ບໍ່ແມ່ນເລື້ອງເລັກນ້ອຍ ຫລືເປັນສິ່ງເຫລັ້ນໆ
ທ່ານໂຢຊວຍ ຄົງຄິດໜັກກ່ຽວກັບໜ້າທີ່ນີ້ ແຕ່ພຣະເຈົ້າຊົງໜູນໃຈ
ແລະປະທານຄວາມໝັ້ນໃຈແກ່ໂມເຊວ່າ
"ບໍ່ມີຜູ້ໃດຈະຢືນຢັດຕໍ່ສູ້ເຈົ້າໄດ້ໃນຊົ່ວຊີວິດຂອງເຈົ້າ
ເຮົາສະຖິດຢູ່ກັບໂມເຊມາແລ້ວສັນໃດ ເຮົາກໍຈະສະຖິດຢູ່ກັບເຈົ້າສັນນັ້ນ
ເຮົາຈະບໍ່ລະເລີຍ ຫລືປະຖິ້ມເຈົ້າຈັກເທື່ອຈົ່ງເຂັ້ມແຂງແລະກ້າຫານເຖີດ
ເພາະເຈົ້າຈະກະທຳໃຫ້ຊົນຊາດນີ້ໄດ້ຮັບແຜ່ນດິນເປັນມໍຣະດົກ"
ແລ້ວໂຢຊວຍກໍສາມາດຄວບຄຸມະຕິ ທ່ຽງຕົງຕໍ່ໜ້າທີ່ຊຶ່ງໄດ້ຖືກມອບໝາຍໃຫ້
ແລະໄດ້ຄອບຄອງແຜ່ນດິນປະເທດອິສຣາເອນໃນທີ່ສຸດ.
ທ່ານກໍເຊັ່ນກັນ ຫາກທ່ານບໍ່ຫວັ່ນໄຫວຕໍ່ບັນຫາ
ຫລືອຸປສັກທີ່ຂວາງໜ້າຈົນຕ້ອງຂາດສະຕິ
ຫລືໝົດກຳລັງໃຈເສັຽກ່ອນ

ໃນບໍ່ຊ້າ ທ່ານກໍຈະຕ້ອງປະສົບຄວາມສຳເລັດໃນຊີວິດຢ່າງແນ່ນອນ.
ບໍ່ຊ້າທ່ານຈະໄດ້ຊີມຣົດອັນຫອມຫວານແຫ່ງຄວາມສຳເລັດ
ທີ່ເຈືອປົນດ້ວຍຢາດເຫື່ອ ຢາດນ້ຳຕາ
ຫລືແມ້ກະທັ້ງຢາດໂລຫິດຂອງທ່ານ!
ແຕ່ມັນຄຸ້ມຄ່າໃນການຕໍ່ສູ້ແມ່ນຫລືບໍ່!

**ຫາກບໍ່ເຊື່ອກໍເຊີນລອງເບິ່ງ!!**

## 8. ຄວາມສຳເລັດ ແລະການມີຄຸນຄ່າ!!

- ***"ຢ່າມຸ້ງໝັ້ນທີ່ຈະເປັນຄົນທີ່ປະສົບຄວາມສຳເລັດ
  ແຕ່ຈົ່ງມຸ້ງໝັ້ນທີ່ຈະເປັນຄົນທີ່ມີຄຸນຄ່າ ກໍດີກວ່າ"***
- ຄົນຈຳນວນຫລວງຫລາຍສັນຫາຄວາມສຳເລັດ!

ຈົນບາງຄັ້ງຕ້ອງຍອມທຳທຸກຢ່າງ ທຸກວິທີທາງ ເພື່ອຄວາມສຳເລັດນັ້ນ!
ນີ້ຄືທີ່ມາຂອງສິ່ງທີ່ບໍ່ປາຖນາໃນສັງຄົມຄື:

- ການໃຫ້ສິນບົນ (ເຈົ້າໜ້າທີ່ ຫລືຜູ້ທີ່ມີສ່ວນກ່ຽວຂ້ອງ)
- ການໃສ່ຮ້າຍປ້າຍສີ (ຝ່າຍກົງກັນຂ້າມ ຫລືຜູ້ຂັດຂວາງ)
- ການທຳຮ້າຍ ຫລືທຳລາຍລ້າງ (ຝ່າຍກົງກັນຂ້າມຫລືຜູ້ຂັດຂວາງ)
- ການຕົວະຍົວະ ຫລອກລວງ (ຄົນທີ່ຢູ່ອ້ອມຂ້າງຕົວທ່ານ)
- ການເສແສ້ງ ແກ້ງເຮັດແກ້ງທຳ (ຂອງຕົວເອງ)

ສິ່ງເຫລົ່ານີ້ລ້ວນແຕ່ຜິດສິນທັມ ຜິດຣະບຽບແບບແຜນ ແລະ**ຜິດກົດໝາຍ**ອີກດ້ວຍ!!
ຄວາມທຸກແລະຄວາມເຈັບປວດຈະເກີດຂຶ້ນ!
ໜ້າເສັຽໃຈທີ່ມີຄົນໄດ້ຖືເອົາຄະຕິທີ່ວ່າ "ຄວາມສຳເລັດຕ້ອງມາກ່ອນທຸກສິ່ງ"
ຜົນສຳເລັດຈະໃຫ້ຄວາມຊອບທັມແກ່ວິທີການທີ່ໄດ້ມານັ້ນ!
ຂໍໃຫ້ໄດ້ພົບກັບຄວາມສຳເລັດກໍແລ້ວກັນ ບໍ່ວ່າຈະໄດ້ມາດ້ວຍວິທີໃດກໍຕາມ!
ນີ້ເປັນອັນຕະຣາຍທີ່ສຸດ!
ຄົນແບບນີ້ຈະຍອມທຳທຸກຢ່າງ ແມ້ແຕ່ຈະເສັຽສາຣະແຫ່ງ ມະໂນທັມສຳນຶກ ແລະຄົນຮັກກໍຕາມ!
ດັ່ງນັ້ນ ມີຄົນທີ່ພົບຄວາມສຳເລັດບໍ່ນ້ອຍເລີຍທີ່ຢູ່ໃນໂລກນີ້
ເມື່ອຕາຍໄປແລ້ວຈະຫາຄົນທີ່ຈະຮ້ອງໄຫ້ອາລັຍດ້ວຍຈິງໃຈນັ້ນບໍ່ມີ!
ຢ່າງມາກກໍພຽງເສັຽດາຍໃນສີມືຫລືຜົນງານ ແຕ່ບໍ່ແມ່ນອາລັຍດ້ວຍຄວາມຮັກ
ຫລືຍົກຍ້ອງບູຊາດ້ວຍໃຈສັດທາ!
ກົງກັນຂ້າມ ມີບາງຄົນທີ່ບໍ່ປະສົບຜົນສຳເລັດໃນມາຕຖານຂອງສັງຄົມ
ແຕ່ເວລາຕາຍໄປກັບມີສຽງຮ້ອງໄຫ້ເສັຽດາຍ
ດ້ວຍຄວາມເຄົາຣົບຮັກຢ່າງຈິງໃຈຈາກຄົນທີ່ຢູ່ອ້ອມຂ້າງເຂົາ!

ນີ້ເປັນເພາະຫຍັງ?!!
ເພາະຊີວິດຂອງເຂົາມີຄຸນຄ່າຢ່າງແທ້ຈິງຕໍ່ຄົນອື່ນ!
ຈົ່ງຣະນຶກສເມີວ່າ ນ້ຳຕາແຫ່ງຄວາມເຄົາຣົບຮັກແລະສັດທານັ້ນ
ມີຄຸນຄ່າຫລາຍກວ່າໂລ້ກຽດຕິຍົດ ຫລຽນຣາງວັນ
ຫລືໃບຍ້ອງຍໍ ແລະສຽງຕົບມືໃດໆ!!
ຄົນທີ່ປະສົບຄວາມສຳເຣັດຈະໄດ້ຮັບຣາງວັນຕ່າງໆທີ່ເປັນວັດຖຸ
ຫລືໄດ້ຮັບກຽດຕິຍົດຊື່ສຽງຕາມມາຕຖານຂອງໂລກ
ແຕ່ຄົນທີ່ມີຄຸນຄ່າຈະໄດ້ຮັບຄວາມເຄົາຣົບນັບຖືດ້ວຍຄວາມຮັກ
ແລະດ້ວຍສັດທາຢ່າງແທ້ຈິງຈາກຝູງຊົນ!
ວັນນີ້ ທ່ານຈະເລືອກເປັນບຸກຄົນແບບໃດ?
ຖ້າຫາກຢາກໄດ້ທັງສອງຢ່າງ ທ່ານຕ້ອງປັບເສັ້ນທາງແຫ່ງຊີວິດຂອງທ່ານໃໝ່
ຫວັງວ່າທ່ານຄົງທຳໄດ້!

**ຂ້າພະເຈົ້າຈະຂໍເອົາໃຈຊ່ວຍ!**

# 9. ຄວາມສຳເຣັດ ແລະຄວາມສຸກ!!

- ***"ຄວາມສຳເຣັດຄືການໄດ້ມາໃນສິ່ງທີ່ທ່ານຕ້ອງການ***
***ແຕ່ຄວາມສຸກຄືການຮັກໃນສິ່ງທີ່ທ່ານໄດ້ມາ"***
- ຄວາມສຳເຣັດບໍ່ແມ່ນສິ່ງທີ່ຈະໄດ້ມາແບບງ່າຍໆ!

ແຕ່ຄົນຈຳນວນມາກມາຍບໍ່ສາມາດມີຄວາມສຸກໄດ້ທັ້ງໆທີ່ພົບກັບຄວາມສຳເຣັດ!
ຄວາມສຳເຣັດກັບຄວາມສຸກຈຶ່ງກາຍເປັນຄົນລະເລື້ອງກັນ!
ຄົນທີ່ມຸ້ງຫາຄວາມສຳເຣັດຢ່າງບໍ່ຈັກເມື່ອງພໍ ຈະເປັນຜູ້ທີ່ຫິວຄວາມສຳເຣັດຢູ່ຕລອດເວລາ
ຈົນບາງຄົນອາດຕິດແສດເໝືອນຕິດຢາເສພຕິດ!
ເຂົາຈະກາຍເປັນຄົນທີ່ຕິດພະຍາດ "ຕິດໂຣກຄວາມສຳເຣັດ"!
ພະຍາດຊະນິດນີ້ຮັກສາບໍ່ໄດ້ງ່າຍ! ເປັນພະຍາດທີ່ມີຣາຄາແພງ!
ແລະຄົນທີ່ຕິດພະຍາດນີ້ຈະຮັກສາບໍ່ຫາຍ ຖ້າບໍ່ໃຊ້ຢາໃຫ້ຖືກກັບມັນ!
"ຄວາມພໍໃຈໃນສິ່ງທີ່ຕົນເອງມີຢູ່" ຫລື "ຄວາມຮູ້ຈັກພໍພຽງ" ເປັນຢາທີ່ປິ່ນປົວໄດ້ດີທີ່ສຸດ!
ການຮູ້ຈັກພໍພຽງ ເປັນກຸນແຈທີ່ນຳໃຫ້ຄົນເຮົາໄດ້ພົບກັບສັນຕິສຸກ
ໄດ້! ແນ່ນອນ ຫາກເຮົາມີຄວາມພຽງພໍໃຈໃນສິ່ງທີ່ໄດ້ມາ ຈະເຮັດໃຫ້ເຮົາມີທຸກນ້ອຍລົງ!
ເມື່ອເຮົາຫັດຮຽນຮູ້ທີ່ຈະພໍໃຈໃນ "ສິ່ງທີ່ເຮົາມີຢູ່ ເຮົາຈະມີຄວາມສຸກຫລາຍຂຶ້ນ"!
ພຣະຄຳພີໄດ້ກ່າວເຄັດລັບແຫ່ງຄວາມສຸກຂອງຊີວິດໄວ້ດັ່ງນີ້
"ຂ້າພະເຈົ້າບໍ່ໄດ້ຈົ່ມເຖິງເລື້ອງຄວາມຂັດສົນ ເພາະວ່າເຖິງແມ່ນຂ້າພະເຈົ້າ
ມີຖານະຢ່າງໃດກໍຕາມ ຂ້າພະເຈົ້າກໍຮຽນຮູ້ທີ່ຈະພໍໃຈຢູ່ຢ່າງນັ້ນ

ຂ້າພະເຈົ້າຮູ້ຈັກທີ່ຈະຜະເຊີນກັບຄວາມຕົກຕ່ຳ

ແລະຮູ້ຈັກທີ່ຈະຜະເຊີນກັບຄວາມອຸດົມສົມບູນ ບໍ່ວ່າໃນກໍຣະນີໃດໆ

ຂ້າພະເຈົ້າຮູ້ຈັກເຄັດລັບທີ່ຈະຜະເຊີນກັບຄວາມອີ່ມທ້ອງ

ແລະຄວາມອຶດຢາກ ຄວາມສົມບູນພູນສຸກ ແລະຄວາມຂັດສົນ"!

ດັ່ງນັ້ນ ແທນທີ່ເຮົາຈະມຸ້ງຫາແຕ່ຄວາມສຳເຣັດ ເຮົາຄວນມຸ້ງຫາຄວາມສຸກ

ທີ່ເກີດຂຶ້ນຈາກຄວາມຮູ້ຈັກພໍພຽງ ແລະພໍໃຈໃນສິ່ງທີ່ເຮົາໄດ້ມາກໍດີກວ່າ!

# 10. ລົ້ມແລ້ວລຸກ!!

- *"ຄົນທີ່ລົ້ມລົງໃນວັນນີ້*

  *ອາດຈະມີຄວາມຮຸ່ງເຮືອງໃນອານາຄົດລໍຢູ່ຂ້າງໜ້າກໍເປັນໄດ້.*

  *ຖ້າເຂົາຫາກຍອມທີ່ຈະລຸກຂຶ້ນມາອີກ"*

- ຄົນທີ່ບໍ່ເຄີຍລົ້ມ ຄືຄົນທີ່ບໍ່ເຄີຍເດີນ!

  ເພາະຄົນທີ່ເດີນມັກຈະເຄີຍລົ້ມ!

ການລົ້ມອາດຈະມາຈາກສາເຫດຫລາຍປະການ!

ນຶ່ງອາດເປັນເພາະການເຈັບໄຂ້ໄດ້ປ່ວຍ ຫລືອາຫານເປັນພິດທຳໃຫ້ໝົດເຫື່ອແຮງ

ຫລືອາດໃຊ້ກຳລັງຫລາຍເກີນໄປເຣັດໃຫ້ເມື່ອຍລ້າຈົນຕ້ອງລົ້ມລົງ!

ບາງທີຄົນເຮົາອາດລົ້ມລົງທັ້ງໆທີ່ແຂງແຮງດີ ໂດຍບໍ່ໄດ້ຂາດອາຫານຫລືເມື່ອຍລ້າແຕ່ຢ່າງໃດ

ແຕ່ທີ່ລົ້ມນັ້ນ ເປັນເພາະໄປເຕະສະດຸດກັບອຸປສັກຈົນຕ້ອງລົ້ມລົງ!

ແຕ່ທີ່ຮ້າຍໄປກວ່ານັ້ນກໍຄື ມີບາງຄົນໄດ້ຈົງໃຈວາງແຜນ ແລະລົງມືກະທຳໃຫ້ອີກຄົນນຶ່ງຕ້ອງລົ້ມລົງ!

ຫາກເຮົາເປັນເຍື່ອທີ່ຖືກຄົນອື່ນທຳໃຫ້ລົ້ມລົງ ຈົ່ງຮວບຮວມພະລັງທີ່ມີຢູ່ລຸກຂຶ້ນມາອີກ!

ເພາະຫາກທ່ານບໍ່ຍອມລຸກຂຶ້ນ ຫລືບໍ່ຮີບລຸກຂຶ້ນ

ກໍອາດຈະມີຜູ້ອື່ນໆທີ່ຕາມຫລັງມາຍ່າງກ້າວຂາຂ້າມຫົວທ່ານໄປ!

ດີບໍ່ດີອາດຖືກຜູ້ທີ່ມາຕາມຫລັງເຮົາເບິ່ງບໍ່ເຫັນເຮົາ

ບໍ່ສາມາດກະໂດດຂ້າມເຮົາໄປໄດ້ເລີຍກັບຢຽບເຮົາຊ້ຳໄປອີກກໍເປັນໄດ້!

ນີ້ນັບວ່າເປັນການສາຫັດສຳຣັບເຮົາ!

ດ້ວຍເຫດນີ້ເອງ ເມື່ອເຮົາລົ້ມ ຈະດ້ວຍສາເຫດໃດກໍຕາມ

ຢ່າໃຫ້ເຮົານອນແຊ່ ຫລືນິ້ງເສີຍຢູ່ ເພາະການກະທຳແບບນີ້ເຣັດໃຫ້ເຮົາບໍ່ມີອານາຄົດເລີຍ!

**ເຮົາຕ້ອງລຸກຂຶ້ນມາໃໝ່!**

ໜັງສືສຸພາສິດໄດ້ຂຽນໄວ້ວ່າ "ຄົນຊອບທັມ ລົ້ມເຈັດຄັ້ງ ແຕ່ກໍຍັງລຸກຂຶ້ນ"

ຂ້າພຣະເຈົ້າຈະບໍ່ຖາມດອກວ່າທ່ານລົ້ມມາແລ້ວຈັກຄັ້ງ?

ແຕ່ຢາກຈະຖາມວ່າ ແຕ່ລະຄັ້ງທີ່ລົ້ມລົງນັ້ນ ທ່ານລຸກຂຶ້ນມາຫລືບໍ່?

ເພາະເຖິງແມ້ນວ່າທ່ານຈະລົ້ມມາແລ້ວຈັກຄັ້ງກໍຕາມ

ຕາບໃດທີ່ທ່ານຍັງມຸ້ງໜ້າຕໍ່ໄປ

ທ່ານຈະສາມາດກ້າວໄປໄກກວ່າຈຸດທີ່ທ່ານລົ້ມມາແລ້ວນັ້ນ
ແລະກັບເດີນເຂົ້າໃກ້ຄວາມສຳເລັດທຸກຂະນະ!
**ທ່ານວ່າແມ່ນຫລືບໍ່?**

# 11. ຈົ່ງເດັດດ່ຽວເໜືອພອນສວັນ!!

- ***"ຄວາມລົ້ມເຫລວມັກເກີດຂຶ້ນບໍ່ແມ່ນຍ້ອນເຮົາຂາດພອນສວັນ ແຕ່ເກີດຂຶ້ນເພາະເຮົາຂາດຄວາມເດັດດ່ຽວ"***
- ມີຄົນສ່ວນນ້ອຍໃນໂລກນີ້ຈະສາມາດມີພອນສວັນຢ່າງເຫັນໄດ້ຊັດເຈນ!

ແຕ່ຄົນສ່ວນໃຫຍ່ຕ້ອງທຸ້ມເທຝຶກຝົນຕົນເອງເພື່ອໃຫ້ມີພອນສແວງ!
ແທ້ຈິງແລ້ວຊີວິດເຮົາແຕ່ລະຄົນ ລ້ວນແລ້ວແຕ່ແມ່ນພອນ
ແລະເປັນຂອງຂວັນທີ່ມາຈາກສວັນຢູ່ແລ້ວ!
ພຽງແຕ່ເຮົາຈະໃຊ້ຊີວິດຂອງເຮົານີ້ໃຫ້ເປັນ "ພອນ" ຕໍ່ຄົນຮອບຂ້າງເຮົານັ້ນແບບໃດ?
ມີຄຳຂຽນໄວ້ວ່າ "ຊີວິດຂອງຄົນເຮົາ ເປັນຂອງຂວັນທີ່ມາຈາກພຣະເຈົ້າແຫ່ງຟ້າສວັນ
ແລະສິ່ງທີ່ເຮົາທຳ (ດີ) ໃນຊີວິດນີ້ກໍກາຍເປັນຂອງຂວັນທີ່ເຮົາມອບຄືນໃຫ້ແກ່ພຣະອົງ"
ເປັນດັ່ງນີ້ ເຮົາບໍ່ຄວນນັ່ງລໍຖ້າ "ພອນສວັນ"
ອັນໃດທີ່ຈະມາຈາກເບື້ອງເທິງເພື່ອຈະທຳງານໃນໜ້າທີ່ຂອງເຮົາ ຫລືດຳເນີນຊີວິດໃຫ້ເກີດຜົນ!
ຊີວິດ ແລະທຸກສິ່ງທີ່ເຮົາມີຢູ່ລ້ວນແຕ່ເປັນ "ພອນ(ຈາກ)ສວັນ" ຢູ່ແລ້ວ!
ດັ່ງນັ້ນ ເຮົາຈຶ່ງຄວນມຸ່ງໝັ້ນພັທນາຊີວິດຂອງເຮົາດ້ວຍຄວາມເດັດດ່ຽວ
ເພື່ອໃຫ້ຊີວິດຂອງເຮົາເຂັ້ມແຂງ ແລະນຳຄວາມຈະເຣີນກ້າວໜ້າມາສູ່ຄົນອ້ອມຂ້າງເຮົາ!
"ພອນສວັນ" ຫລື "ພອນຈາກເບື້ອງເທິງ"
ທີ່ຈິງແລ້ວບໍ່ມີໃຜກຳໜົດຫລືຮຽກຮ້ອງເອົາໄດ້!
ແຕ່ເຮົາທຸກຄົນມີ "ພອນສແວງ" ຢູ່ໃນຕົວ!
ພຣະເຈົ້າຊົງສ້າງມະນຸດໃຫ້ມີຄວາມສາມາດພິເສດໃນຕົວ
ຊຶ່ງສາມາດທຳຫລາຍສິ່ງຫລາຍຢ່າງໄດ້ຢ່າງ "ເໜືອທຳມະດາ"ຢູ່ແລ້ວ!
ດ້ວຍເຫດນີ້ ຫາກເຮົາພັທນາສິ່ງທີ່ເຮົາມີຢູ່ແລ້ວຢ່າງບໍ່ລົດລະ
ເຮົາຈະກາຍເປັນບຸກຄົນທີ່ມີຄວາມສາມາດເໜືອທຳມະດາ!
ເຫດສັນນັ້ນ ຢ່າມົວຄອງຖ້າແຕ່ພອນສວັນ!
ຄົນທີ່ອ້າງຕົນເອງວ່າ "ບໍ່ມີພອນສວັນ" ເລີຍນັ້ນ
ຈະສູ້ຄົນອື່ນບໍ່ໄດ້ ຫລືຈະເຮັດຫຍັງກໍບໍ່ໄດ້
ຈຶ່ງນັບວ່າເປັນຄົນທີ່ໜ້າສົມເພດທີ່ສຸດ!
ເຊັ່ນດຽວກັນກັບຄົນທີ່ມີ "ພອນສວັນ" ແຕ່ບໍ່ເຮັດສິ່ງໃດໃຫ້ສົມກັບ "ພອນສວັນ" ທີ່ຕົນເອງມີ!
ຄົນທີ່ບໍ່ມີ "ພອນສວັນ" ຕິດຕົວມາແຕ່ເກີດ ແຕ່ສາມາດພົບກັບຄວາມສຳເລັດໄດ້
ຍ້ອນການຝຶກຝົນຕົນເອງ ຈົນກາຍເປັນຄົນຊຳນານ!
ພວກເຂົາຄືບຸກຄົນທີ່ຕັ້ງເປົ້າໝາຍຢ່າງແນ່ວແນ່ທີ່ຈະທຳໃຫ້ຕົນເອງດີຂຶ້ນ!
ພວກນີ້ເປັນຄົນເອົາຈິງເອົາຈັງ!

ທຸ້ມເທທັ້ງເວລາ ຊັພສິນ ແລະແຮງກາຍ ເພື່ອໃຫ້ບັນລຸເປົ້າໝາຍຢ່າງເດັດດ່ຽວ!

"ຄວາມເດັດດ່ຽວ" ນີ້ອາດເໜືອກວ່າພອນສວັນ! **ທ່ານເປັນຄົນແບບນີ້ຫລືບໍ່???**

# 12. ຄວາມທະນົງທີ່ດີທີ່ສຸດ!!

- *"ຄວາມທະນົງທີ່ດີທີ່ສຸດ*
  *ຄືຄວາມທະນົງທີ່ສາມາດບັງຄັບຕົນເອງໃຫ້ທຳງານຢ່າງດີທີ່ສຸດ*
  *ແມ້ແຕ່ຍາມທີ່ບໍ່ມີຜູ້ໃດເຝົ້າເບິ່ງກໍຕາມ"*
- ຄຳວ່າ "ທະນົງ" ຕາມປົກກະຕິ ຈະເປັນຄຳທີ່ມີຄວາມໝາຍໃນທາງລົບ!

ແຕ່ວັນນີ້ ທ່ານຈະຮູ້ເຖິງຄວາມທະນົງໃນແງ່ສົມ!

ຕາມປື້ມວັຈນານຸກົມແລ້ວ "ຄວາມທະນົງ" ໝາຍເຖິງການ "ຖືຕົວ ຍິ່ງໃນກຽດຂອງຕົວ"

ການຖືຕົວ ໝາຍເຖິງພຶດຕິກັມໃນທາງລົບ!

ເພາະຄຳນີ້ໝາຍເຖິງການ "ໄວ້ຕົວ ບໍ່ຍອມລົດຕົວ ເພາະຍິ່ງໃນສັກສີ ຫລືຖານະຂອງຕົນ"

ຄົນລັກສະນະນີ້ຈະບໍ່ຍອມຄົບກັບຄົນທີ່ຕ່ຳກວ່າຕົນ!

ໃນຂະນະດຽວກັນ ຄົນປະເພດນີ້ ຈະບໍ່ຄ່ອຍມີຄົນທີ່ຈະຄົບຫາສະມາຄົມດ້ວຍເຊັ່ນກັນ!

ເພາະຄົນປະເພດນີ້ມັກຈະ "ຖືດີ" "ຖືເຂົາ ຖືເຮົາ" "ຖືທ້າຍ ຖືຫາງ" ພວກດຽວກັນ!

ຫລາຍຄັ້ງ ຄົນທີ່ຖືຕົວແບບນີ້ ມັກຈະເປັນຜູ້ "ນິກະໂຈມງຳຫົວ"

ໃນການຄວບຄຸມຄົນ ຫລືຄວບຄຸມງານ ຫາກໃຜໄປຂັດໃຈເຂົ້າ ເຂົາຈະ "ຖືສາ" "ຖືໂກດ"

ແລະອາດຈະຖືໂອກາດກຳຈັດຄົນທີ່ເຂົາຖືວ່າເປັນປໍຣະປັກນັ້ນໃຫ້ອອກໄປພົ້ນທາງຂອງເຂົາ!

ຄວາມທະນົງ ຫລືການຖືຕົວທີ່ກ່າວມາຂ້າງເທິງຈຶ່ງເປັນການເຍີ້ຍິ່ງຈອງຫອງທີ່ມຸ່ງຫວັງທຳຮາຍຜູ້ອື່ນ

ແລະຕົວເອງ ຊຶ່ງບໍ່ເກີດປະໂຫຍດຫຍັງໝົດ!

ຢ່າງໃດກໍຕາມ ຄວາມທະນົງໃນທາງສ້າງສັນກໍຍັງມີຢູ່!

ສັງຄົມຍັງຕ້ອງການຄົນທະນົງຕົວໃນທາງສົມຢູ່!

ຄົນທະນົງແບບນີ້ ຈະຍິ່ງໃນກຽດຂອງຕົນ!

ເຂົາຈະບໍ່ຍອມທຳສິ່ງໃດເພື່ອໃຫ້ຄົນອື່ນດູຖູກຫຍຽດຫຍາມວິງຕະກູນ ຫລືກຽດຂອງຕົນເອງໄດ້!

ຄົນປະເພດນີ້ ບໍ່ຕ້ອງການໃຫ້ຄົນອື່ນມາ ຈ້ຳຈີ້ຈ້ຳໄຊນຳ!

ເພາະເປັນຄົນທີ່ມີຄວາມຮັບຜິດຊອບສູງໃນໜ້າທີ່ຂອງຕົນ!

ເຂົາຈະບໍ່ຄຳນຶງເຖິງວ່າ ຈະມີຄົນເຫັນສິ່ງທີ່ເຂົາເຮັດຫລືບໍ່

ຄົນປະເພດນີ້ຮອດບໍ່ສົນໃຈວ່າຈະມີຄົນຍ້ອງຍໍຊົມເຊີຍ ຫລືໄດ້ຣາງວັນໃດນຶ່ງ!

ຄົນປະເພດນີ້ຈະທຳງານໃນໜ້າທີ່ຮັບຜິດຊອບຂອງຕົນໃຫ້ດີທີ່ສຸດຊະນິດທີ່ວ່າ ວັນທີ່ເຂົາຕາຍໄປ

ເພື່ອນຮ່ວມງານຂອງເຂົາຈະຮ້ອງໄຫ້ອາລັຍທີ່ສຸດ!

ເຂົາຈະເປັນຄົນທະນົງຕົວທີ່ຕາຍຢ່າງຄູ່ຄວນ ເພາະເຂົາຕາຍຢ່າງມີກຽດ!

ປັນຍາຈານ 7:1 "ຊື່ສຽງດີ ກໍປະເສີດກວ່ານ້ຳມັນຫອມຢ່າງວິເສດ ແລະວັນຕາຍກໍດີກວ່າວັນເກີດ"

# 13. ຈະວິພາກວິຈານຄົນອື່ນຢ່າງໃດ??

- *"ວິທີທີ່ດີທີ່ສຸດໃນການວິພາກວິຈານຄົນອື່ນກໍຄື*
  *ທ່ານຈົ່ງທຳງານຂອງທ່ານເອງໃຫ້ດີຂຶ້ນ ແລະດີທີ່ສຸດ"*

ທ່ານຄົງບໍ່ມັກທີ່ຄົນອື່ນຈະວິພາກວິຈານທ່ານແມ່ນຫລືບໍ່?
ຖ້າຢ່າງນັ້ນ ຄົນອື່ນໆກໍຮູ້ສຶກແບບນັ້ນເຊັ່ນກັນ!
ເຖິງແມ່ນວ່າຄົນນັ້ນຈະໃຈກວ້າງຂະໜາດໃດກໍຕາມ
ຈະທຳໃຈໄດ້ຍາກ ຫາກຖືກວິພາກວິຈານ!
ເຖິງແມ່ນວ່າ ປາກຂອງເຂົາຈະບອກວ່າ "ບໍ່ເປັນຫຍັງ ເຊີນວິຈານໄດ້ເລີຍ"
ຈົ່ງເຊື່ອເຖີດວ່າ ປາກນັ້ນຮັບໄດ້ ແຕ່ໃຈແລ້ວຈະຮັບບໍ່ໄດ້ ດັ່ງນັ້ນທ່ານ ຕ້ອງຣະວັງ!
ຢ່າຫລົງຕົວໄປວິພາກວິຈານຄົນໃດຄົນນຶ່ງໂດຍຄິດວ່າ ເຂົາຈະທົນຮັບເອົາໄດ້!
ຈົ່ງປ່ຽນຄຳວິພາກວິຈານນັ້ນ ມາເປັນການໃຫ້ກຳລັງໃຈຈະດີກວ່າ!
ດ້ວຍເຫດນີ້ ຫາກທ່ານເຫັນໃຜທີ່ເຮັດໃນສິ່ງທີ່ບໍ່ຄັກ ຫລືບໍ່ໄດ້ຕາມໃຈມັກຂອງທ່ານ
ແທນທີ່ຈະວິພາກວິຈານເຂົາໃຫ້ເກີດຄວາມຊອກຊ້ຳໃຈ
ທ່ານຄວນໜູນໃຈເຂົາໃຫ້ເຂົາເກີດພະລັງໃຈໃນການທຳງານໃຫ້ດີຂຶ້ນຈະດີກວ່າ!
ຫາກຄົນທຳງານນັ້ນເປັນຄົນໃນຄອບຄົວຂອງທ່ານເອງຍິ່ງຕ້ອງຣະວັງ
ເພາະຄຳວິພາກວິຈານຂອງທ່ານຈະບໍ່ມີຄ່າຫຍັງໝົດ!
ເຖິງແມ່ນທ່ານຈະພະຍາຍາມຕິເພື່ອກໍ່
ແລະຢາກໃຫ້ເຂົາທຳງານດີຂຶ້ນກໍຕາມ ທ່ານຈະຕ້ອງຣະນຶກສເມີວ່າ
"ການໜູນໃຈ" ນັ້ນ ດີກວ່າ "ການແກ້ໄຂ"
\ ດັ່ງສຸພາສິດທີ່ວ່າ "ການແກ້ໄຂສາມາດຊ່ວຍໄດ້ຫລາຍ
ແຕ່ການໜູນໃຈນັ້ນ ຍິ່ງຈະຊ່ວຍໄດ້ຫລາຍກວ່າ"
ດັ່ງນັ້ນ ຫາກທ່ານຕ້ອງການວິພາກວິຈານຄົນອື່ນ
ກໍຈົ່ງທຳງານຂອງທ່ານເອງໃຫ້ດີທີ່ສຸດ ຫລືທຳໃຫ້ດີກວ່າຄົນອື່ນ
ເພາະນີ້ແຫລະຄືການວິພາກວິຈານຄົນອື່ນທີ່ດີ
ແລະມີປະສິດທິພາບທີ່ສຸດ!

# 14. ຄວາມເຊື່ອ ການທຳງານໜັກ ແລະພູເຂົາທີ່ສູງຊັນ!!

- *"ຄວາມເຊື່ອອາດເຄື່ອນພູເຂົາທີ່ສູງຊັນໄດ້*
  *ແຕ່ການທຳງານໜັກເທົ່ານັ້ນ ຈະສາມາດເຈາະພູເຂົາໃຫ້ຊອດໄປໄດ້"*
- ຄວາມເຊື່ອເປັນເລື້ອງທີ່ລີ້ລັບຍາກທີ່ຈະເຂົ້າໃຈໄດ້ໝົດ
  ດັ່ງນັ້ນຈຶ່ງມີຄຳກ່າວໄວ້ວ່າ "ຫາກບໍ່ເຊື່ອກໍຢ່າລົບລູ່"!
  ໃນພຣະພີ ພຣະເຢຊູຄຣິສໄດ້ກ່າວເຖິງ 2 ຄັ້ງວ່າ
  "..*ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ*

*ຫາກທ່ານມີຄວາມເຊື່ອເທົ່າກັບເມັດພິດເມັດນຶ່ງ ທ່ານຈະສັ່ງພູເຂົານີ້ວ່າ*
*ຈົ່ງເຄື່ອນໄປທາງນັ້ນ ມັນກໍຈະເຄື່ອນໄປ..*
*ສິ່ງນຶ່ງສິ່ງໃດທີ່ທ່ານຈະທຳບໍ່ໄດ້ນັ້ນ ຈະບໍ່ມີເລີຍ..”*

ບັນຫາຂອງຄົນເຮົາກໍຄື ແມ້ປາກຂອງເຮົາຈະບອກວ່າ
ເຮົາ “ເຊື່ອ” ເຮົາ “ສັດທາ”
ແຕ່ພໍຈະເອົາຈິງເອົາຈັງ ຄວາມເຊື່ອກັບຫາຍໄປ ຄວາມສັດທາກັບຫົດເອົ້າ!
ເຮົາຈຶ່ງບໍ່ສາມາດມີປະສົບການທາງດ້ານຄວາມເຊື່ອຢ່າງຈິງຈັງ!
ຄວາມເຊື່ອ ແລະຄວາມສັດທາ ຕ້ອງຄວບຄູ່ໄປກັບ ການກະທຳ ຕາມຄວາມເຊື່ອນັ້ນ!
ບາງຄົນບອກວ່າ ຕົນເອງສັດທາໃນສາສນາ ຫລືໃນຄຸນນະທັມ ແຕ່ການກະທຳກັບກົງກັນຂ້າມ!
ບາງຄົນກໍບອກວ່າ ສັດທາໃນອົງການຂອງຕົນ ແຕ່ການກະທຳກັບເປັນບ່ອນທຳລາຍ!
ບາງຄົນບອກວ່າ ສັດທາໃນຣະບອບປະຊາທິປະໄຕ
ແຕ່ການກະທຳຂອງເຂົາກັບເປັນຜະເດັດການ!
ບາງຄົນບອກວ່າ ສັດທາໃນການທຳງານແບບຣວມໝູ່
ແຕ່ຕົວເຂົາເອງກັບມັກແຍກແຍະອອກໝູ່!
ແນ່ນອນ ເຮົາຈະເວົ້າຫຍັງກໍເວົ້າໄດ້!
ເຮົາຈະສາບານວ່າເຮົາ “ເຊື່ອ” ຫລືເຮົາ “ສັດທາ” ກໍຍ່ອມເປັນສິດຂອງເຮົາ
ແຕ່ຄົງຈະບໍ່ມີໃຜເຊື່ອວ່າ ເຮົາ“ເຊື່ອ” ໃນສິ່ງທີ່ເຮົາເວົ້ານັ້ນ!
ຈົນກວ່າຈະເຫັນການກະທຳ ຫລືການປະພຶດຂອງເຮົາ
ຊຶ່ງສະແດງອອກມາຢ່າງສອດຄ້ອງກັບຄຳເວົ້າຂອງເຮົາ!
ທ່ານ ຢາໂກໂບໄດ້ກ່າວວ່າ
“ຮ່າງກາຍທີ່ປາສຈາກວິນຍານ ກໍເປັນຮ່າງກາຍທີ່ຕາຍແລ້ວ ສັນໃດ
ຄວາມເຊື່ອທີ່ບໍ່ມີການປະຕິບັດກໍໄຮ້ຜົນສັນນັ້ນ”
ຫາກທ່ານເຊື່ອວ່າ
ທ່ານຈະເຈາະພູເຂົາໜ່ວຍທີ່ຕັ້ນໜ້າທ່ານຢູ່ນີ້ໃຫ້ຊອດອອກໄປໄດ້
ທ່ານເອງກໍຄວນລົງມືທຳງານໜັກເລີ້ມແຕ່ວັນນີ້!
ວັນນີ້ ທ່ານໄດ້ເຮັດຫຍັງແດ່ທີ່ພິສູດວ່າ
ທ່ານເຊື່ອໃນສິ່ງທີ່ທ່ານບອກວ່າ ທ່ານເຊື່ອອີຫລີນັ້ນ???

***“ປາສຈາກການປຶກສາຫາລື ແຜນການກໍລົ້ມເຫລວ ແຕ່ຖ້າມີຜູ້ໃຫ້ຄຳແນະນຳຫລາຍ ແຜນການນັ້ນກໍຈະສຳເຣັດ ຄຳຕອບທີ່ເໝາະສົມ ກໍຈະນຳຄວາມຊື່ນບານແກ່ຄົນ ຄຳເວົ້າຄຳດຽວທີ່ເວົ້າຖືກກາລະເທສະ ກໍເປັນໜ້າຍິນດີແທ້” ສຸພາສິດ 15:22-23***

# ທ່ານຮູ້ຈັກເປົ້າໝາຍແຫ່ງຊີວິດຂອງທ່ານຫລືຍັງ? ທ່ານເກີດມາເຮັດຫຍັງໃນໂລກນີ້? ເຊີນທ່ານສຶກສາຣາຍຣະອຽດດັ່ງລຸ່ມນີ້:

**1. ພຣະເຈົ້າຊົງຕ້ອງການຫຍັງຈາກທ່ານ? ໃຫ້ທ່ານເປັນເຄື່ອງບູຊາທີ່ມີຊີວິດ.**

ໂຣມ 6: 13 ; ພຣະບັນຍັດສອງ 10:12 ; ມທ 6:24 ; ສຸພາສິດ 3:6

**2. ທ່ານຄວນທຳຕົວແບບໃດ? ທ່ານຄວນຝຶກແອບຕົນເອງ.**

1 ຕທ 4:7 ; ເຮັບເຣີ 12:1 ; ລູກາ 10: 40-42

**3. ເປັນຫຍັງທ່ານຈຶ່ງຕ້ອງເປັນຄົນເຮັດ? ເພາະໄມ້ກາງແຂນແຫ່ງຄວາມຮັກ**

2ກຣທ 5:15 ; ອຟຊ 1:7 ; ໂຣມ 12:1 ; 2ກຣທ 6:1

## ເປົ້າໝາຍທີ່ນຶ່ງ ຄື ທ່ານເກີດມາເພື່ອການນະມັສການ

ການນະມັສການຄືການຕອບສນອງຄວາມຮັກທີ່ພຣະເຈົ້າມີຕໍ່ທ່ານ ຄືການສະແດງອອກເຖິງຄວາມຮັກຂອງທ່ານທີ່ມີຕໍ່ພຣະເຈົ້າ.

ໂຣມ12:1 ; ມທ 22:37-38 ;

**1. ການນະມັສການ ຄືການສະແດງຄວາມສົນໃຈຂອງທ່ານຕໍ່ພຣະເຈົ້າ**

ພສສ 139:1-3 ; 105:4 ; ໂຣມ8:7 ;12:2

**2. ການນະມັສການ ຄືການສະແດງຄວາມຮັກແທ້ຈິງຂອງທ່ານຕໍ່ພຣະເຈົ້າ**

1ຢຮ 4:19 ; ໂຮເຊຢາ 6:6 ; ໂຣມ 6:13

**3. ການນະມັສການ ຄືການໃຊ້ຄວາມສາມາດຕົນເອງເພື່ອພຣະເຈົ້າ**

ໂກໂລຊາຍ 3:23 ; ໂຣມ 12:1 ; 2ກຣທ 5:9

## ເປົ້າໝາຍທີ່ສອງ ທ່ານເກີດມາເພື່ອສາມັກຄີທັມຊຶ່ງກັນແລະກັນ ໃນຄົວເຮືອນຂອງພຣະເຈົ້າ

ຫາກທ່ານຮັກພີ່ນ້ອງແຫ່ງຄວາມເຊື່ອ ສາມັກຄີທັມຊຶ່ງກັນແລະກັນ ນີ້ກໍເປັນ ການສະແດງອອກເຖິງຄວາມຮັກຂອງທ່ານທີ່ມີຕໍ່ພຣະເຈົ້າເຊັ່ນກັນ.

**1. ທ່ານຄວນເປັນສະມາຊິກໃນຄົວເຮືອນຂອງພຣະເຈົ້າໃນຄຣິສຕະຈັກ**

ອຟຊ 2:19 ; ໂຣມ 12:5 ; 1ກຣທ 12:13 ; ໂຣມ 6:3

**2. ທ່ານຄວນຮຽນຮູ້ທີ່ຈະແບ່ງປັນ ຊ່ວຍເຫລືອຊຶ່ງກັນແລະກັນ**

ກຈກ 2:44 ; ສພສ 27:17 ; 1ປຕ 4:9 ; ຄລຕ 6:2 ; ຮຣ 10:25

**3. ການສາມັກຄີທັມ ຄືພາກສ່ວນຂອງທ່ານທີ່ຄວນເຮັດເພື່ອພຣະເຈົ້າ**

1ກຣທ 3:9 ; ອຟຊ 4:16 ; ມທ 25:40

**4. ສະແດງເຖິງຄວາມຮັກທີ່ທ່ານມີຕໍ່ພີ່ນ້ອງໃນຄວາມເຊື່ອດັ່ງຄອບຄົວທ່ານເອງ**

ກຈກ 2:42 ; ໂຣມ 12:10 ; 1ຢຮ 3:16 ; ຢຮ 13:35 ; ຄລຕ 3:26

## *ເປົ້າໝາຍທີ່ສາມ ທ່ານເກີດມາເພື່ອການດຳຣົງຊີວິດຢ່າງພຣະຄຣິສ*

ທ່ານຄວນທຳຕົວໃຫ້ເປັນເໝືອນພຣະຄຣິສ ໂດຍການເປັນສາວົກທີ່ດີ ເປັນຜູ້ຮັບໃຊ້ທີ່ຊື່ສັດ:

ໂຣມ 8:29; ເອເຟໂຊ 4:25; ໂຣມ 8:28

***1. ພຣະເຈົ້າຊົງໃຊ້ຄວາມຍຸ້ງຍາກເພື່ອສອນທ່ານໃຫ້ວາງໃຈໃນພຣະອົງ***

ໂຣມ 5:3-4; ມຣກ 14:32-34;14:36; 2ກຣທ 4:17

***2. ພຣະເຈົ້າໃຊ້ການທົດລອງ ເພື່ອສອນທ່ານໃຫ້ຮູ້ຈັກເຊື່ອແລະຟັງຄວາມ***

ມທ 4:1, 10; ຟລປ 4:8; ປັນຍາຈານ 4: 9-10

***3. ພຣະເຈົ້າຊົງໃຊ້ການລ່ວງລະເມີດ ເພື່ອສອນທ່ານເຖິງການໃຫ້ອະພັຍ***

ມທ 27:39-44; ລູກາ 23:34; ອຟຊ 4:32; ປກ 50:20; ໂຣມ 8:17; ຟລປ 2:5

## *ເປົ້າໝາຍທີ່ສີ່ ທ່ານເກີດມາ ເພື່ອຮັບໃຊ້ພຣະເຈົ້າ*

ໃຊ້ຊີວິດຂອງທ່ານເພື່ອການຮັບໃຊ້ພຣະເຈົ້າ ໂດຍການຮັບໃຊ້ຄົນອື່ນ. ຈົ່ງໃຊ້ ສະຕິປັນຍາ ຄວາມສາມາດ ແລະທຸກສິ່ງທີ່ທ່ານມີເພື່ອພຣະເຈົ້າ

ໂຢບ 10:8; 1ປຕ 4:10; ມທ 20:28

***1. ການຮັບໃຊ້ ຄືທ່ານຕ້ອງໃຫ້ຊີວິດຕົນເອງ ມີເວລາຫວ່າງຢູ່ສເມີ***

ມທ 20:30-32; ສພສ 3:28; ຟລປ 2:4; ປັນຍາຈານ 11:4; ລກ 16:13

***2. ການຮັບໃຊ້ພຣະເຈົ້າ ຄືການສະແດງອອກເຖິງການຮູ້ບຸນຄຸນພຣະອົງ***

ຢຮ 11: 41-42; ພສສ 100:2; 2ຕມທ 1:9; ໂຣມ 14:4; ມທ 6:1

***3. ການຮັບໃຊ້ ຄືການສະແດງອອກເຖິງ ຄວາມເຊື່ອອັນໝັ້ນຄົງຂອງທ່ານ***

ຢຮ 17:4; 1ກຣທ 4:2; 15:58; ເຮັບເຣີ 6:10; ມທ 25:21

## *ເປົ້າໝາຍທີ່ຫ້າ ທ່ານເກີດມາເພື່ອ ການປະກາດຂ່າວປະເສີດ*

ພຣະເຈົ້າຊົງສ້າງທ່ານມາເພື່ອການປະກາດຂ່າວປະເສີດເລື້ອງຄວາມພົ້ນ ແລະແຜ່ນດິນສວັນແກ່ຄົນທັງຫລາຍ.

ຢຮ 17:18; 20:21; ກຈກ 20:24; 1:8; ອຟຊ 3:11

***1. ການປະກາດ ທ່ານຕ້ອງປະກາດແກ່ທຸກຄົນທີ່ຢູ່ຮ່ວມ ໂລກກັບທ່ານ***

ລກ 8:39; 1ປຕ 3:15; 2ປຕ 3:9;

***2. ທ່ານຕ້ອງຍິນດີທີ່ຈະປະກາດ ອອກນອກຂອບເຂດທີ່ຕົນເອງມັກ***

1ກຣທ 9:22; ຄລຕ 6:2; ຢສຍ 1:27; ມທ 25:35-36; ມຣກ 10:29

***3. ທ່ານຕ້ອງໃຫ້ຄວາມເປັນຫ່ວງແກ່ໂລກທັງໝົດ (ຕ້ອງແຄຣ໌)***

ມຣກ 16:15; 8:35; ກຈກ 13:36; ພສສ 67:2

## *ຈົບ*